ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການຮ່ວມມືສາກົນ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ..............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2016
ສະຫງວນລິຂະສິດ

ແຜນຈັດປະສົບການ ໜ່ວຍໂຮງຮຽນຂອງຂ້ອຍ ຊັ້ນອະນຸບານສຶກສາປີທີ 3 2016

## ແຜນຈັດປະສົບການ

# ໜ່ວຍໂຮງຮຽນຂອງຂ້ອຍ

## ຊັ້ນອະນຸບານສຶກສາປີທີ 3



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

# ແຜນຈັດປະສົບການ

# ໜ່ວຍໂຮງຮຽນຂອງຂ້ອຍ

## ຊັ້ນອະນຸບານສຶກສາ ປີທີ 3


ຮຽບຮຽງໂດຍ: ແສງມະນີ ສຸພັນທະລີບ
ຈຸນລາ ເຂັມທອງ
ຂັນກາບ ພົງອຸດົມ
ສະຫວຽນ ສີຍະວັນນຸວົງ
ອ່າງຄຳ ບຸດສະດີ
ຈັນທີ ສີສຸພັນ

ກວດແກ້ໂດຍ: ດຣ ອ່ອນແກ້ວ ນວນນະວົງ
ປາກຽນ ຫຼວງໄຊຊະນະ
ວຽງແກ້ວ ພົມມະຈັກ

ເຂົ້າໜ້າໂດຍ: ສີວິໄລ ແກ້ວມະນີວັນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---====000====----

ກະຊວງສຶກສາທິການ ແລະ ກິລາ

7498 ເລກທີ ສສກ.ສວສ

ນະຄອນຫຼວງວຽງຈັນ, ວັນທີ 09 DEC 2015

**ຂໍ້ຕົກລົງຂອງລັດຖະມົນຕີ**

**ວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ**

**ສຳລັບຊັ້ນອະນຸບານສຶກສາ ປີທີ 3**

ເຫັນຕາມ: ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011;

ເຫັນຕາມ: ການສະເໜີຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

**ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ ຈຶ່ງຕົກລົງ**

ມາດຕາ 1: ຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 3 ສະບັບປະຕິຮູບ ໃນໂຮງຮຽນອະນຸບານທົ່ວປະເທດ ນັບແຕ່ສົກຮຽນ 2016-2017 ເປັນຕົ້ນໄປ.

ມາດຕາ 2: ໃຫ້ກົມອະນຸບານ ແລະ ປະຖົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ກົມຄຸ້ມຄອງການສຶກສາພາກເອກະຊົນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ ໃຫ້ໄດ້ຮັບຜົນດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ກະຊວງສຶກສາທິການ ... ລັດຖະມົນຕີ

ລີຕູ ບົວປາວ

# ຄຳນຳ

ແຜນການຈັດປະສົບການສະບັບນີ້ຮຽບຮຽງຂຶ້ນ ເພື່ອເປັນບ່ອນອີງນຳໃຊ້ເຂົ້າໃນການວາງແຜນການສອນ ແລະ ໃຫ້ຄູສອນນຳໃຊ້ໃນການແຕ່ງບົດສອນຄວບຄູ່ກັບປຶ້ມແນະນຳກິດຈະກຳການຮຽນ-ການສອນ ໂດຍໃຫ້ແທດເໝາະກັບພັດທະນາການຂອງເດັກອະນຸບານອາຍຸ 5 ປີ ຕາມຄວາມຕ້ອງການຮຽນຮູ້ຂອງເຂົາເຈົ້າ ແລະ ສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ.

ເນື້ອໃນຄວາມຮູ້ທີ່ກຳນົດໃນກິດຈະກຳການຫຼິ້ນ ແລະ ຮຽນຮູ້ແຕ່ລະວັນມີລັກສະນະບູລະນາການຄວາມຮູ້ທາງດ້ານພາສາລາວ, ຄະນິດສາດ ແລະ ວິທະຍາສາດທົ່ວໄປ.

ກິດຈະກຳການຫຼິ້ນ ແລະ ຮຽນຮູ້ໃນແຕ່ລະວັນປະກອບມີກິດຈະກຳເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ຫຼິ້ນກາງແຈ້ງ, ຫຼິ້ນຕາມມຸມ ແລະ ເກມການສຶກສາ; ທັງນີ້ກໍເພື່ອໃຫ້ເດັກໄດ້ຮັບການພັດທະນາຕາມສະມັດຖະພາບດ້ານການຮຽນຂອງເດັກອະນຸບານປີທີ 3 (ອາຍຸ 5 ປີ) ໃນການກຽມຄວາມພ້ອມທາງດ້ານຮ່າງກາຍ, ດ້ານອາລົມ, ຈິດໃຈ, ດ້ານສັງຄົມ, ດ້ານພາສາ ແລະ ດ້ານສະຕິປັນຍາກ່ອນເຂົ້າຮຽນໃນຊັ້ນປະຖົມ.

ແຜນການຈັດປະສົບການສະບັບນີ້ເນັ້ນໜັກການສອນແບບເອົາເດັກເປັນໃຈກາງ ໂດຍໃຫ້ເດັກໄດ້ປະຕິບັດຕົວຈິງຜ່ານການຫຼິ້ນ ແລະ ຮຽນ ໂດຍຍຶດຫຼັກການສຳຄັນດັ່ງນີ້:

1. ເດັກໄດ້ຮັບການກຽມຄວາມພ້ອມໃນທຸກດ້ານຕາມຄວາມສາມາດ ແລະ ທຳມະຊາດຂອງເດັກ.
2. ເດັກໄດ້ຮຽນຮູ້ຕາມຄວາມສົນໃຈ, ຄວາມຕ້ອງການຢ່າງອິດສະຫຼະຈາກສິ່ງໃກ້ຕົວ, ຈາກທັກສະທີ່ງ່າຍໄປສູ່ທັກສະທີ່ຍາກຕາມລຳດັບ ໂດຍໄດ້ຮຽນຮູ້ເປັນລາຍບຸກຄົນ ແລະ ກຸ່ມຕາມຄວາມສົນໃຈ.
3. ການຈັດກິດຈະກຳການຮຽນຮູ້ ແມ່ນໃຫ້ເດັກໄດ້ປະຕິບັດຕົວຈິງໃນລັກສະນະຂອງການຮຽນແບບຕັ້ງໜ້າ ຫຼື ເອົາເດັກເປັນໃຈກາງ, ເພື່ອເປີດໂອກາດໃຫ້ເດັກໄດ້ທົດລອງ, ປະດິດສ້າງຢ່າງສ້າງສັນ, ຄິດແກ້ໄຂບັນຫາ ແລະ ຄົ້ນພົບສິ່ງໃໝ່ດ້ວຍຕົນເອງ ໂດຍຜ່ານການຫຼິ້ນທີ່ເບີກບານມ່ວນຊື່ນ ສອດຄ່ອງກັບທຳມະຊາດຂອງເດັກແຕ່ລະຄົນທີ່ມີຄວາມແຕກຕ່າງກັນໃນການຫຼິ້ນ ແລະ ການຮຽນຮູ້ໃນແຕ່ລະກິດຈະກຳຄື: ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ຫຼິ້ນກາງແຈ້ງ, ຫຼິ້ນຕາມມຸມ ແລະ ເກມການສຶກສາ.
4. ການຈັດປະສົບການໄດ້ເນັ້ນໜັກເນື້ອໃນທີ່ເດັກຄວນຮຽນຮູ້ຈາກສັງຄົມ, ວັດທະນະທຳ ແລະ ສະພາບແວດລ້ອມທີ່ເດັກອາໄສຢູ່ໂດຍຄຳນຶງເຖິງຄວາມແຕກຕ່າງຂອງເດັກແຕ່ລະຄົນ.

ນອກນັ້ນໃນແຜນການຈັດປະສົບການສະບັບນີ້ຍັງໄດ້ແນະນຳການຈັດຫ້ອງ, ທັກສະທີ່ຄວນພັດທະນາເພື່ອໃຫ້ສອດຄ່ອງກັບພັດທະນາການຂອງເດັກອາຍຸ 5 ປີ ແລະ ການຈັດປະສົບການໃນໜ່ວຍການສອນໃຫ້ຄູໄດ້ນຳໄປໃຊ້ໃນການຈັດການຮຽນ-ການສອນຂອງຕົນ. ເປັນທີ່ແນ່ນອນວ່າເອກະສານສະບັບນີ້ປາສະຈາກຄວາມຂາດຕົກບົກຜ່ອງບໍ່ໄດ້ ຄະນະຮຽບຮຽງ ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາມີຄວາມຍິນດີຕ້ອນຮັບທຸກຄຳຄິດເຫັນທີ່ສ້າງສັນຈາກຜູ້ຊົມໃຊ້ ເພື່ອປັບປຸງໃຫ້ນັບມື້ດີຂຶ້ນໃນອະນາຄົດ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ


**ຈຸດປະສົງລວມ** ........ **1-5**

**ຈຸດປະສົງ ສຳລັບອາທິດທີ 1** ........ **6-10**

**1. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 1: ມື້ທີ 1**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ........ 11

ກິດຈະກຳວົງມົນ: ໂຮງຮຽນ ແລະ ຫ້ອງຮຽນ ........ 12

ກິດຈະກຳສິລະປະສ້າງສັນ: ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບໂຮງຮຽນ ........ 13

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນລູລີ່ເຂົ້າສານ ........ 14

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບເດັກນ້ອຍໄປໂຮງຮຽນ ........ 15

ກິດຈະກຳຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມອ່ານ ........ 16

**2. ໜ່ວຍໂຮງຮຽນ ຂອງຂ້ອຍ, ອາທິດທີ 1: ມື້ທີ 2**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານ ສັ່ນກະແຊັກ ........ 17

ກິດຈະກຳວົງມົນ: ໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນ ........ 18

ກິດຈະກຳສິລະປະສ້າງສັນ: ສານລາຍອັດສະຫຼັບສີແດງ ແລະ ສີຟ້າ ........ 19

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນເກັບທຸງ ........ 20

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບໂຮງຮຽນຕາມສີ ........ 21

ກິດຈະກຳຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ ........ 22

**3. ໜ່ວຍໂຮງຮຽນ ຂອງຂ້ອຍ, ອາທິດທີ 1: ມື້ທີ 3**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບບົດຄຳຄ່ອງ ມາລະຍາດທີ່ດີ 23

ກິດຈະກຳວົງມົນ: ຄູຫ້ອງຂ້າງຄຽງ ........ 24

ກິດຈະກຳສິລະປະສ້າງສັນ: ພັບເຈ້ຍເປັນຮູບສາມແຈ ........ 25

ກິດຈະກຳການຫຼິ້ນກາງແຈ້ງ: ແບບຫຼິ້ນຮ່າຍນ້ຳສີຕ່າງໆ ........ 26

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນ ........ 27

ກິດຈະກຳຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ ........ 28

**4. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 1: ມື້ທີ 4**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມທີ່ນາຍຄູກຳນົດ ........ 29

ກິດຈະກຳວົງມົນ: ຜູ້ອຳນວຍການໂຮງຮຽນ ........ 30

ກິດຈະກຳສິລະປະສ້າງສັນ: ການພິມສີໃບໄມ້ ........ 31

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນຖົງວິເສດ ........ 32

ກິດຈະກຳເກມການສຶກສາ: ເກມລຽນລຳດັບຕົວເລກແຕ່ 0-5 ........ 33

ກິດຈະກຳຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ ........ 34

**5. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 1: ມື້ທີ 5**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບເລື່ອງແມ່ລ້ຽງ ແລະ ພະນັກງານອະນາໄມ ........ 35

ກິດຈະກຳວົງມົນ: ແມ່ລ້ຽງ ແລະ ພະນັກງານອະນາໄມ ........ 36

ກິດຈະກຳສິລະປະສ້າງສັນ: ປັ້ນດິນເປັນຮູບເຕົ້າດອກໄມ້ ........ 37

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນຫາມບານ ........ 38

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບພະນັກງານອະນາໄມປັດກວາດບໍລິເວນເດີ່ນໂຮງຮຽນ ........ 39

ກິດຈະກຳຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມອ່ານ ........ 40

**ຈຸດປະສົງ ສຳລັບອາທິດທີ 2..........41-42**

**6. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 2: ມື້ທີ 1**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ .......... 43
ກິດຈະກຳວົງມົນ: ການປະຕິບັດລະບຽບຂອງໂຮງຮຽນ .......... 44
ກິດຈະກຳສິລະປະສ້າງສັນ: ຂີດຂຽນສະຫຼະ xີ ຕາມຄຳສັບ .......... 45
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນຈອບໄດ້ຈອບເອົາ .......... 46
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບເດັກນ້ອຍຍິງ-ຊາຍຢືນລຽນແຖວຕາມລຳດັບ .......... 47
ກິດຈະກຳຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ .......... 48

**7. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 2: ມື້ທີ 2**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານ ຕົບກອງ .......... 49
ກິດຈະກຳວົງມົນ: ລະບຽບໃນການເຄົາລົບທຸງຊາດ .......... 50
ກິດຈະກຳສິລະປະສ້າງສັນ: ຂີດຂຽນສະຫຼະ xີ ບໍ່ມີວັນນະຍຸດ x່, x້ ຕາມຄຳສັບ .......... 51
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ .......... 52
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ ... 53
ກິດຈະກຳຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມສິລະປະສ້າງສັນ. .......... 54

**8. ໜ່ວຍໂຮງຮຽນ ຂອງຂ້ອຍ, ອາທິດທີ 2: ມື້ທີ 3**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ .......... 55
ກິດຈະກຳວົງມົນ: ກິດຈະກຳຂອງໂຮງຮຽນ .......... 56
ກິດຈະກຳສິລະປະສ້າງສັນ: ແຕ້ມຮູບພາບດອກໄມ້ຕາມຈິນຕະນາການ .......... 57
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນມັດຕາຫອຍສຽງ .......... 58
ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ .......... 59
ກິດຈະກຳຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ. .......... 60

**9. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 2: ມື້ທີ 4**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດຄຳຄ່ອງ ສວນດອກໄມ້ . 61
ກິດຈະກຳວົງມົນ: ການປະຕິບັດຕົນໃນໂຮງຮຽນ .......... 62
ກິດຈະກຳສິລະປະສ້າງສັນ: ຂີດຂຽນຕົວເລກອາຣັບ .......... 63
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນຮ່າຍນ້ຳໃສ່ກະຕຸກຢາງ .......... 64
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ .......... 65
ກິດຈະກຳຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ .......... 66

**10. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 2: ມື້ທີ 5**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມທີ່ນາຍຄູກຳນົດ .......... 67
ກິດຈະກຳວົງມົນ: ການປະຕິບັດຕົນໃນການຫຼິ້ນ ແລະ ການພັກຜ່ອນ .......... 68
ກິດຈະກຳສິລະປະສ້າງສັນ: ພັບເຈ້ຍເປັນຮູບພາບຈອກ .......... 69
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຂັນສົ່ງພາກປຸ່ມເປົ້າລອດຫວ່າງຂາ .......... 70
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບເຄື່ອງໃນໂຮງຮຽນທີ່ສົມບູນກັບຮູບພາບທີ່ແຍກສ່ວນ .......... 71
ກິດຈະກຳຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມອ່ານ .......... 72

**ຈຸດປະສົງສຳລັບອາທິດທີ 3**..........................................................................73-75

**11. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 3: ມື້ທີ 1**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເເຄື່ອນໄຫວຕາມນາຍຄູອອກແບບປະກອບບົດຄຳຄ່ອງ ຫຼິ້ນ ແລະ ນອນຖືກເວລາ ..................................................................................................76

ກິດຈະກຳວົງມົນ: ຫ້ອງຕ່າງໆໃນໂຮງຮຽນ ....................................................................77

ກິດຈະກຳສິລະປະສ້າງສັນ: ຕິດຕົວພະຍັນຊະນະ ................................................................77

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແມວຈັບປາ .......................................................78

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບຫ້ອງຮຽນ, ຫ້ອງອ່ານ ແລະ ຫ້ອງອາຫານ ...........79

ກິດຈະກຳຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມອ່ານ ..................................................80

**12. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 3: ມື້ທີ 2**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດຄຳຄ່ອງ ຫ້ອງຕ່າງໆ .. 81

ກິດຈະກຳວົງມົນ: ຫ້ອງຮຽນ ....................................................................................82

ກິດຈະກຳສິລະປະສ້າງສັນ: ເປຍເສັ້ນຝ້າຍຕາມແບບ ...........................................................83

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຍັນສິ່ງຈິດພາຍ ................................................84

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງຮຽນ ...................................85

ກິດຈະກຳຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມອ່ານ ..................................................86

**13. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 3: ມື້ທີ 3**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມການສັນຍານ ຍົກຮູບພາບ ................................87

ກິດຈະກຳວົງມົນ: ຫ້ອງອ່ານ ....................................................................................88

ກິດຈະກຳສິລະປະສ້າງສັນ: ຜົ່ນສີໃສ່ຮູບພາບປຶ້ມ .............................................................89

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນຊອກຫາເພື່ອນ .......................................................90

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງອ່ານ ....................................91

ກິດຈະກຳຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ ........................................92

**14. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 3: ມື້ທີ 4**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ............................93

ກິດຈະກຳວົງມົນ: ຫ້ອງອາຫານ .................................................................................94

ກິດຈະກຳສິລະປະສ້າງສັນ: ຕິດຕົວພະຍັນຊະນະ ................................................................95

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງນ້ຳ, ຮ່ອນຊາຍ ........................................96

ກິດຈະກຳເກມການສຶກສາ: ເກມສຶກສາລາຍລະອຽດຮູບພາບເຄື່ອງໃຊ້ໃນຫ້ອງອາຫານ ........................97

ກິດຈະກຳຫຼິ້ນຕາມມຸມ: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ .......................................98

**15. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 3: ມື້ທີ 5**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດຄຳຄ່ອງ ຫ້ອງອາຫານ ສະອາດ ..................................................................................................99

ກິດຈະກຳວົງມົນ: ຫ້ອງນ້ຳ ....................................................................................100

ກິດຈະກຳສິລະປະສ້າງສັນ: ຂີດຂຽນສະຫຼະ ີ ທີ່ມີຢູ່ໃນຄຳສັບຕາມຮອຍຈ້ຳ ....................................101

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງຍັນເຕະບານເຂົ້າປະຕູ .........................................102

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບກ້ອນຈະຕຸລັດ, ກ້ອນສີ່ແຈ ແລະ ກ້ອນສາມແຈ .............103

ກິດຈະກຳຫຼິ້ນຕາມມຸມ: ມຸມເກມການສຶກສາ, ມຸມວິທະຍາສາດ ແລະ ທຳມະຊາດ ............................104

**ຈຸດປະສົງ ສຳລັບອາທິດທີ 4.........................................................105-106**

**16. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 4: ມື້ທີ 1**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ ........................107

ກິດຈະກຳວົງມົນ: ເດີ່ນໂຮງຮຽນ ........................................................................108

ກິດຈະກຳສິລະປະສ້າງສັນ: ຕັດ, ຕິດຮູບພາບຮົ້ວໂຮງຮຽນ ....................................................109

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນກະຕ່າຍຍາດຄອກ .................................................110

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນ ..............................................111

ກິດຈະກຳຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ .........................................112

**17. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 4: ມື້ທີ 2**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມຈິນຕະນາການປະກອບບົດຄຳຄ່ອງ ເດີ່ນໂຮງຮຽນ ... 113

ກິດຈະກຳວົງມົນ: ການບົວລະບັດຮັກສາເດີ່ນໂຮງຮຽນ .................................................114

ກິດຈະກຳສິລະປະສ້າງສັນ: ແຕ້ມຮູບພາບດອກໄມ້ຕາມຮອຍຈ້ຳ ..............................................115

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງອັນກັນຢຽບໝາກປຸມເປົ້າ ........................................116

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບທໍ່ສາມລ່ຽມ, ໜ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມ .......................117

ກິດຈະກຳຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມອ່ານ ..................................................118

**18. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 4: ມື້ທີ 3**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມການສັນຍານ ຍົກຮູບພາບ ..............................119

ກິດຈະກຳວົງມົນ: ເຄື່ອງຫຼິ້ນໃນເດີ່ນໂຮງຮຽນ ............................................................120

ກິດຈະກຳສິລະປະສ້າງສັນ: ການກໍ້ເຈ້ຍເປັນຮູບທ່ອນກົມ ......................................................121

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນດິນຊາຍ: ຫຼິ້ນປັ້ນດິນຊາຍເປັນຮູບຕ່າງໆຕາມໃຈ ..............................122

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບ ເຄື່ອງຫຼິ້ນໃນເດີ່ນ .....................................123

ກິດຈະກຳຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ .........................................124

**19. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 4: ມື້ທີ 4**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມສຽງສັນຍານ ຕີບກອງ .................................125

ກິດຈະກຳວົງມົນ: ອຸປະກອນຫຼິ້ນນ້ຳ, ຫຼິ້ນຊາຍ ........................................................126

ກິດຈະກຳສິລະປະສ້າງສັນ: ແຕ້ມຮູບພາບ: ຄຸ, ຊວ້ານຕາມຮອຍຈ້ຳ ............................................127

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນເຕັ້ນເຊືອກ ......................................................128

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການຫຼິ້ນນ້ຳ-ຫຼິ້ນຊາຍ ........................129

ກິດຈະກຳຫຼິ້ນຕາມມຸມ: ວິທະຍາສາດ ແລະ ທຳມະຊາດ ແລະ ມຸມອ່ານ ...........................................130

**20. ໜ່ວຍໂຮງຮຽນຂອງຂ້ອຍ, ອາທິດທີ 4: ມື້ທີ 5**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດເພງ ຫຼິ້ນນ້ຳ-ຫຼິ້ນຊາຍ .131

ກິດຈະກຳວົງມົນ: ເວທີການສະແດງ .....................................................................132

ກິດຈະກຳສິລະປະສ້າງສັນ: ຕັດ, ຕິດ, ຕໍ່ເຈ້ຍຕໍ່ກັນເປັນພວງມະໄລ ..............................................133

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນແບບຫຼິ້ນແຂ່ງອັນຣ່າຍນ້ຳສີຕ່າງໆ ...........................................134

ກິດຈະກຳເກມການສຶກສາ: ເກມຈັບຄູ່ທີ່ຄືກັນປະໂຫຍດຂອງເວທີການສະແດງ ...................................135

ກິດຈະກຳຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ .........................................136

- ເອກະສານອ້າງອີງ .....................................................................................137

# ຈຸດປະສົງລວມ

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມສຽງສັນຍານ ສັ່ນກະແຊັກ, ຕີບກອງໄດ້ຖືກຕ້ອງ.
3. ສະແດງທ່າທາງຕາມການສັນຍານ ຍົກຮູບພາບໄດ້ຖືກຕ້ອງ.
4. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງ, ເລື່ອງທີ່ນາຍຄູເລົ່າຢ່າງມ່ວນຊື່ນ.
5. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມທີ່ນາຍຄູກຳນົດໄດ້ຖືກຕ້ອງ.
6. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ, ບົດເພງໄດ້ຖືກຕ້ອງ.
7. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
8. ປອດໄພໃນເວລາສະແດງທ່າທາງ.
9. ກ້າສະແດງອອກໃນເວລາສະແດງທ່າທາງ.
10. ເວົ້າຄຳສຸພາບກັບໝູ່ເພື່ອນ.
11. ອົດທົນໃນເວລາສະແດງທ່າທາງ.
12. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

## ກິດຈະກຳວົງມົນ

1. ບອກຊື່ໂຮງຮຽນ, ຂັ້ນຮຽນ, ຫ້ອງຮຽນ ແລະ ຊື່ໝູ່ເພື່ອນໃນຫ້ອງທີ່ຕົນເອງຮຽນໄດ້ຖືກຕ້ອງ.
2. ບອກຊື່, ໜ້າທີ່ຮັບຜິດຊອບ, ການປະຕິບັດຕົນຕໍ່ຄູປະຈຳຫ້ອງ, ຜູ້ອຳນວຍການໂຮງຮຽນ, ຄູຫ້ອງຂ້າງຄຽງ, ແມ່ລ້ຽງ ແລະ ພະນັກງານອະນາໄມໄດ້ຖືກຕ້ອງ.
3. ປະຕິບັດຕົວຈິງໃນການປະຕິບັດຕົນຕໍ່ຄູປະຈຳຫ້ອງ, ຄູໃນໂຮງຮຽນ, ຜູ້ອຳນວຍການໂຮງຮຽນ, ແມ່ລ້ຽງ ແລະ ພະນັກງານອະນາໄມ, ການລຽນແຖວເຄົາລົບທຸງຊາດ. ການອອກແຮງງານ (ເກັບຂີ້ເຫຍື້ອ), ການຫຼິ້ນ, ການອະນາໄມມື ແລະ ການນອນພັກຜ່ອນ, ການເກັບມ້ຽນຖ້ວຍ, ບ່ວງໃຫ້ຖືກບ່ອນ, ການເຂົ້າຫ້ອງນ້ຳ, ການເກັບຂີ້ເຫຍື້ອ ແລະ ຫົດນ້ຳຕົ້ນໄມ້.
4. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ປະໂຫຍກຕາມເນື້ອໃນຄຳຄ່ອງ, ບົດເພງ, ບົດນິທານ ແລະ ຮູບພາບໄດ້ຊັດເຈນ.
5. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ ແລະ ເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບໄດ້ຊັດເຈນ.
6. ໃຊ້ຄຳເວົ້າທີ່ສຸພາບເວົ້າກັບໝູ່ເພື່ອນ.
7. ມີຄວາມເບີກບານມ່ວນຊື່ນໃນການຮ້ອງເພງ ແລະ ມີມາລະຍາດໃນການຟັງນິທານ.
8. ອ່ານຕົວເລກຕາມລຳດັບແຕ່ 1-5 ໄດ້ຖືກຕ້ອງ.
9. ບອກການປະຕິບັດລະບຽບ ແລະ ກິດຈະກຳຂອງໂຮງຮຽນໄດ້ຖືກຕ້ອງ.
10. ບອກລະບຽບໃນການເຄົາລົບທຸງຊາດ ໄດ້ຖືກຕ້ອງ.
11. ເລົ່າຄຳຄ່ອງປະກອບທ່າທາງໄດ້ຖືກຕ້ອງ.

12. ມີຄວາມດຸໝັ່ນ.
13. ບອກການປະຕິບັດຕົນໃນການຮຽນ, ການຫຼິ້ນ ແລະ ການພັກຜ່ອນໃນໂຮງຮຽນໄດ້ຖືກຕ້ອງ.
14. ບອກຫ້ອງຕ່າງໆໃນໂຮງຮຽນໄດ້ຖືກຕ້ອງ.
15. ສັງເກດ ແລະ ແຕ້ມຮູບສິ່ງທີ່ເຫັນໄດ້.
16. ອ່ານອອກສຽງຄຳສັບທີ່ມີຕົວສະກົດ ນ, ບ, ກ, ດ; ຄຳສັບທີ່ປະສົມກັບສະຫຼະ ×າ, ×ິ, ×ີ; ຄຳສັບທີ່ປະສົມກັບສະຫຼະ ×ື, ຄຳທີ່ມີ ແລະ ບໍ່ມີວັນນະຍຸດ ×່, ×້ ໄດ້ຊັດເຈນ.
17. ບອກເຄື່ອງໃຊ້, ຄຸນປະໂຫຍດ ແລະ ການບົວລະບັດຮັກສາຫ້ອງຮຽນ, ຫ້ອງອ່ານ, ຫ້ອງອາຫານ, ຫ້ອງນ້ຳ ແລະ ໄດ້ຖືກຕ້ອງ.
18. ບອກເຄື່ອງໃຊ້ ແລະ ເຄື່ອງຮຽນທີ່ເປັນຮູບສີ່ແຈ, ວົງມົນ.
19. ມີລະບຽບວິໄນໃນການເຂົ້າຫ້ອງອ່ານ, ຫ້ອງອາຫານ, ຫ້ອງນ້ຳ.
20. ບອກຜົນການປຽບທຽບຄວາມຍາວໂດຍໃຊ້ຄຳວ່າ: ຍາວກວ່າ, ສັ້ນກວ່າ, ຍາວເທົ່າກັນໄດ້ຖືກຕ້ອງ.
21. ນັບຈຳນວນຮູບພາບແຕ່ 1-5 ໄດ້ຖືກຕ້ອງ
22. ບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດເດີ່ນໂຮງຮຽນໄດ້ຖືກຕ້ອງ.
23. ບອກຊື່, ຄຸນປະໂຫຍດ, ການບົວລະບັດຮັກສາເຄື່ອງຫຼິ້ນໃນເດີ່ນ ແລະ ອຸປະກອນຫຼິ້ນນ້ຳ, ຫຼິ້ນຊາຍໄດ້ຖືກຕ້ອງ.
24. ມີຄວາມປອດໄພໃນການຫຼິ້ນເຄື່ອງຫຼິ້ນໃນເດີ່ນ.
25. ບອກຄຸນປະໂຫຍດ ແລະ ການປົກປັກຮັກສາເວທີການສະແດງໄດ້ຖືກຕ້ອງ.

## ກິດຈະກຳສິລະປະສ້າງສັນ

1. ບອກຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບເດັກນ້ອຍຍິງ, ຊາຍ, ຮູບພາບຕາ, ແຕ້ມຮູບພາບດອກໄມ້ຕາມຈິນຕະນາການ, ຮູບພາບດອກໄມ້ຕາມຮອຍຈ້ຳ, ແຕ້ມຮູບພາບ: ຄຸ, ຊວ້ານຕາມຮອຍຈ້ຳໄດ້ຖືກຕ້ອງ.
2. ບອກຂັ້ນຕອນການຂີດຂຽນສະຫຼະ ×ີ ຕາມຄຳສັບ, ຂີດຂຽນສະຫຼະ ×ິ, ຕົວສະກົດຕາມຄຳສັບ, ຂີດຂຽນສະຫຼະ ×ື, ບໍ່ມີວັນນະຍຸດ ×່, ×້ ຕາມຄຳສັບ ແລະ ບອກຂັ້ນຕອນການຂີດຂຽນຕົວເລກ 10 ຕາມຮອຍຈ້ຳ ແລະ ຕາມໃຈໄດ້ຖືກຕ້ອງ.
3. ບອກຂັ້ນຕອນການພັບພົ່ນສີໃສ່ໜ້າຄົນ ແລະ ພົ່ນສີໃສ່ຮູບພາບປຶ້ມ ໄດ້ຖືກຕ້ອງ.
4. ບອກຂັ້ນຕອນການເປຍເຊືອກຟາງ ແລະ ເປຍເສັ້ນຝ້າຍຕາມແບບໄດ້ຖືກຕ້ອງ.
5. ບອກຂັ້ນຕອນການພັບເຈ້ຍເປັນຮູບຈອກ, ພັບເຈ້ຍເປັນຮູບສາມແຈໄດ້ຖືກຕ້ອງ.
6. ບອກຂັ້ນຕອນການຕິດຕົວພະຍັນຊະນະຕົວ: ກ, ນ, ງ, ດ, ບ, ມ, ຍ, ວ ຕາມຮອຍຈ້ຳ, ຕິດເຈ້ຍຕໍ່ກັນເປັນພວງມະໄລ ແລະ ບອກຂັ້ນຕອນ ການຕັດ-ຕິດຮູບພາບຮົ້ວໂຮງຮຽນໄດ້ຖືກຕ້ອງ.
7. ບອກຂັ້ນຕອນການກໍ້ເຈ້ຍເປັນຮູບທ່ອນກົມໄດ້ຖືກຕ້ອງ.
8. ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບ ພາບເດັກນ້ອຍຍິງ, ຊາຍ, ຮູບພາບຕາ, ແຕ້ມຮູບພາບດອກໄມ້ຕາມຈິນຕະນາການ, ແຕ້ມຮູບພາບດອກໄມ້ຕາມຮອຍຈ້ຳ ແລະ ແຕ້ມຮູບພາບ: ຄຸ, ຊວ້ານຕາມຮອຍຈ້ຳໄດ້ສະອາດຈົບງາມ ແລະ ຢູ່ໃນຂອບ.
9. ຕັດ, ຕິດຮູບພາບຮົ້ວໂຮງຮຽນ, ຕິດຕົວພະຍັນຊະນະ, ແລະ ຕັດ, ຕິດ, ຕໍ່ເຈ້ຍຕໍ່ກັນເປັນພວງມະໄລໄດ້ສະອາດຈົບງາມ.

10. ກໍ້ເຈ້ຍເປັນຮູບທ່ອນກົມໄດ້ຈົບງາມ.

11. ພົ່ນສີໃສໃສ່ໜ້າຄົນ ແລະ ພົ່ນສີໃສ່ຮູບພາບປື້ມໜ້າກາກຄົນໄດ້ສະອາດຈົບງາມ.

12. ເປຍເຊືອກຟາງ ແລະ ເປຍເສັ້ນຝ້າຍໄດ້ຈົບງາມ.

13. ຂີດຂຽນສະຫຼະ ຣີ ຕາມຄຳສັບ, ຂີດຂຽນສະຫຼະຣີ ບໍ່ມີວັນນະຍຸດ ່, ້ ຕາມຄຳສັບ, ຂີດຂຽນສະຫຼະ ຣີ, ຕົວສະກົດຕາມຄຳສັບ ຂີດຂຽນຕົວເລກ 10 ຕາມຮອຍຈ້ຳ ແລະ ຕາມໃຈໄດ້ສະອາດຈົບງາມ.

14. ເຝິກໃຫ້ເດັກນ້ອຍມີຄວາມລະມັດລະວັງໃນການພົ່ນສີໃສໃສ່ໜ້າຄົນ ແລະ ໃສ່ຮູບພາບສາມແຈ.

15. ແບ່ງປັນສໍສີ ແລະ ດິນປັ້ນໃຫ້ໝູ່ເພື່ອນ.

16. ພັບເຈ້ຍເປັນຮູບຈອກ, ພັບເຈ້ຍເປັນຮູບສາມແຈໄດ້ຄ້າຍຄື.

17. ມີຄວາມອົດທົນໃນການຂີດຂຽນສະຫຼະ ຣີ ບໍ່ມີວັນນະຍຸດ ່, ້ ຕາມຄຳສັບແລະ ຂີດຂຽນສະຫຼະ ຣີ ຕາມຄຳສັບ, ແຕ້ມຮູບພາບດອກໄມ້ຕາມຈິນຕະນາການ, ເປຍເຊືອກຟາງ, ເປຍເສັ້ນຝ້າຍຕາມແບບ, ຕິດຕົວພະຍັນຊະນະ, ພົ່ນສີໃສ່ຮູບພາບປື້ມ, ຕັດ-ຕິດຮູບພາບຮົ້ວໂຮງຮຽນ, ຕັດ, ຕິດ, ຕໍ່ເຈ້ຍຕໍ່ກັນເປັນພວງມະໄລ, ແຕ້ມຮູບພາບດອກໄມ້ຕາມຮອຍຈ້ຳ, ກໍ້ເຈ້ຍເປັນຮູບທ່ອນກົມ ແລະ ການແຕ້ມຮູບພາບ: ຄຸ, ຊ້ວານຕາມຮອຍຈ້ຳ.

18. ມີການຊ່ວຍເຫຼືອໝູ່ເພື່ອນໃນເວລາພັບຜ້າ.

## ກິດຈະກຳກາງແຈ້ງ

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຍ່າງກະໂປະໝາກພ້າວ, ຫຼິ້ນແບບຫຼິ້ນແຂ່ງຂັນແລ່ນເກັບທຸງ, ຫຼິ້ນແບບຫຼິ້ນຕັ່ງວິເສດ, ການຫຼິ້ນແບບຫຼິ້ນ ແຂ່ງຂັນຫາມບານ, ຫຼິ້ນແບບຫຼິ້ນຈອບໄດ້ຈອບເອົາ, ຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ, ຫຼິ້ນແບບຫຼິ້ນມັດຕາຫວຍສຽງ ຂອງເຄື່ອງດົນຕີ: ສຽງກອງ, ກະແຊັກ ແລະ ແສ່ງ, ຫຼິ້ນແບບຫຼິ້ນຣ່າຍນ້ຳໃສ່ແກ້ວ, ຫຼິ້ນແບບຫຼິ້ນສິ່ງໝາກປຸມເປົ້າລອດຫວ່າງຂາ, ຫຼິ້ນແບບຫຼິ້ນແມວຈັບປາ, ຫຼິ້ນແບບຫຼິ້ນແຂ່ງ ຂັນສິ່ງຈົດໝາຍ, ຫຼິ້ນແບບຫຼິ້ນຊອກຫາເພື່ອນ, ຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງນ້ຳ, ຫຼິ້ນແບບຫຼິ້ນ ແຂ່ງຂັນເຕະບານເຂົ້າໂກນ, ຫຼິ້ນແບບຫຼິ້ນແຂ່ງຂັນຢຽດໝາກປຸມເປົ້າ, ຫຼິ້ນດິນຊາຍ: ປັ້ນດິນຊາຍເປັນ ຮູບຕ່າງໆ, ຫຼິ້ນແບບຫຼິ້ນເຕັ້ນເຊືອກ ແລະ ຫຼິ້ນແບບຫຼິ້ນແຂ່ງຂັນຣ່າຍນ້ຳສີຕ່າງໆ.
2. ຫຼິ້ນແບບຫຼິ້ນ ຍ່າງກະໂປະໝາກພ້າວ, ຫຼິ້ນແບບຫຼິ້ນແຂ່ງຂັນແລ່ນເກັບທຸງ, ຫຼິ້ນຣ່າຍນ້ຳໃສ່ແກ້ວ ແລະ ປັ້ນຊາຍເປັນຮູບຕ່າງໆ, ຫຼິ້ນແບບຫຼິ້ນຕັ່ງວິເສດ, ການຫຼິ້ນແບບຫຼິ້ນແຂ່ງຂັນຫາມບານ, ຫຼິ້ນແບບຫຼິ້ນຈອບໄດ້ຈອບເອົາ, ຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ, ຫຼິ້ນແບບຫຼິ້ນມັດຕາຫວຍສຽງຂອງເຄື່ອງດົນຕີ: ສຽງກອງ, ກະແຊັກ ແລະ ແສ່ງ, ຫຼິ້ນແບບຫຼິ້ນຣ່າຍນ້ຳໃສ່ແກ້ວ, ຫຼິ້ນແບບຫຼິ້ນສິ່ງໝາກປຸມເປົ້າລອດຫວ່າງຂາ, ຫຼິ້ນແບບຫຼິ້ນແມວຈັບປາ, ຫຼິ້ນແບບຫຼິ້ນແຂ່ງຂັນສິ່ງຈົດໝາຍ, ຫຼິ້ນແບບຫຼິ້ນຊອກຫາເພື່ອນ, ຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງນ້ຳ, ຫຼິ້ນແບບຫຼິ້ນແຂ່ງຂັນເຕະບານໂກນ, ຫຼິ້ນແບບຫຼິ້ນກະຕ່າຍຍາດຄອກ, ຫຼິ້ນແບບຫຼິ້ນແຂ່ງຂັນຢຽດໝາກປຸມເປົ້າ, ຫຼິ້ນດິນຊາຍ: ປັ້ນດິນຊາຍເປັນຮູບຕ່າງໆ, ຫຼິ້ນແບບຫຼິ້ນເຕັ້ນເຊືອກ ແລະ ຫຼິ້ນແບບຫຼິ້ນແຂ່ງຂັນຣ່າຍນ້ຳສີຕ່າງໆໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
4. ປອດໄພໃນເວລາຫຼິ້ນແບບຫຼິ້ນ.
5. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
6. ມີມາລະຍາດທີ່ດີໃນເວລາຫຼິ້ນແບບຫຼິ້ນ.
7. ອົດທົນໃນເວລາຫຼິ້ນແບບຫຼິ້ນ.

8. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.
9. ມີຄວາມສາມັກຄີໃນເວລາຫຼິ້ນ
10. ຄວາມຄ່ອງແຄ້ວວ່ອງໄວ.
11. ຟັງ ແລະ ຈຳແນກສຽງ.

## ກິດຈະກຳເກມການສຶກສາ

1. ບອກຊື່ເກມ, ຮູບພາບ, ອອກສຽງຕົວພະຍັນຊະນະຕົ້ນຕາມຮູບພາບ, ອອກສຽງຕົວພະຍັນຊະນະ, ອອກສຽງພະຍັນຊະນະຕາມຮູບພາບ ແລະ ຕົວເລກທີ່ມີຢູ່ໃນເກມ.
2. ຕໍ່ຮູບພາບເດັກນ້ອຍໄປໂຮງຮຽນ, ພະນັກງານອະນາໄມປັດກວາດບໍລິເວນເດີ່ນໂຮງຮຽນ, ເດັກນ້ອຍຍິງ-ຊາຍຍືນລຽນແຖວຕາມລຳດັບຕ່ຳ-ສູງ, ເຄື່ອງຫຼິ້ນໃນໂຮງຮຽນໄດ້ຖືກຕ້ອງ.
3. ລຽນລຳດັບຕົວເລກ 0-5 ໄດ້ຖືກຕ້ອງ.
4. ຈັບຄູ່ທີ່ຄືກັບຮູບພາບໂຮງຮຽນຕາມສີ, ຮູບພາບເດັກນ້ອຍປະຕິບັດກິຈະກຳໃນໂຮງຮຽນ, ຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ, ຕົວພະຍັນຊະນະ, ຮູບພາບເຄື່ອງຫຼິ້ນໃນໂຮງຮຽນທີ່ສົມບູນກັບຮູບພາບທີ່ແຍກສ່ວນ, ຮູບພາບຫ້ອງຮຽນ; ຫ້ອງອ່ານ ແລະ ຫ້ອງອາຫານ, ຮູບພາບເຄື່ອງໃຊ້ໃຫ້ອງຮຽນ, ເຄື່ອງໃຊ້ໃນຫ້ອງອ່ານ, ຮູບກ້ອນຈະຕຸລັດ, ກ້ອນສີ່ແຈ ແລະ ກ້ອນສາມແຈ, ທໍ່ສາມລ່ຽມ, ໜ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມ, ເຄື່ອງຫຼິ້ນໃນເດີ່ນ, ເຄື່ອງໃຊ້ໃນການຫຼິ້ນນ້ຳ-ຫຼິ້ນຊາຍ, ປະໂຫຍດຂອງທີ່ສະແດງ.
5. ຈັບຄູ່ຮູບພາບກັບຕົວພະຍັນຊະນະ, ຈັບຄູ່ຮູບພາບເຄື່ອງໃຊ້ໃນໂຮງຮຽນທີ່ສົມບູນກັບຮູບພາບແຍກຊິ້ນສ່ວນໄດ້ຖືກຕ້ອງ.
6. ສຶກສາລາຍລະອຽດເຄື່ອງໃຊ້ໃນຫ້ອງອາຫານໄດ້ຖືກຕ້ອງ.
7. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
8. ອົດທົນໃນເວລາຫຼິ້ນເກມ.
9. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.
10. ແບ່ງປັນເກມໃຫ້ໝູ່ເພື່ອນ.

## ກິດຈະກຳຫຼິ້ນຕາມມຸມ

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ສຳຜັດຫຼິ້ນເຄື່ອງດິນຕີ, ພິມຄຳສັບ: ບຸ, ຕຸ, ຄຸ, ບູດ ຕູ, ຕູ, ດູ ໃສ່ອ່າງດິນຊາຍ, ຕໍ່ບຼັອກເປັນຮູບໂຕະ, ຕັ່ງ, ປຶ້ມ, ພິມພະຍັນຊະນະ ກ, ນ, ງ, ດ, ບ, ມ, ຍ, ວໃສ່ອ່າງດິນຊາຍ, ຕໍ່ບຼັອກເປັນຮູບໂຮງຮຽນ, ຮົ້ວໂຮງຮຽນ, ຫຼັກທຸງ, ຕໍ່ບຼັອກເປັນຕຳຕ່າງລະດັບຕໍ່ບຼັອກຕາມຈິນຕະນາການຢ່າງມ່ວນຊື່ນ.
3. ແຕ້ມຕາມຮອຍຈ້ຳ-ທາສີຮູບພາບໂຮງຮຽນ, ເປົ່າສີເປັນຮູບພາບຕ່າງໆຕາມຈິນຕະນາການ, ສານລາຍອັດສະຫຼັບສີ: ສີແດງ, ສີຟ້າ, ພິມສີໃບໄມ້, ພັບເຈ້ຍເປັນຮູບສາມແຈ, ຂີດຂຽນສະຫຼະ ັ, ບໍ່ມີວັນນະຍຸດຕາມຄຳສັບ, ຂີດຂຽນສະຫຼະ ິ ຕາມຄຳສັບ, ຂີດຂຽນຕົວເລກ 10 ຕາມຮອຍຈ້ຳ, ແຕ້ມຮູບພາບດອກໄມ້ຕາມຈິນຕະນາການ, ເປຍເສັ້ນຝ້າຍຕາມແບບ, ຕິດຕົວພະຍັນຊະນະ ກ, ນ, ດ, ບ, ມ, ຍ, ວ, ພັບເຈ້ຍເປັນຮູບຈອກ, ຕິດຕົວພະຍັນຊະນະ ຕ, ຖ, ທ, ນ, ບ, ປ ຜ, ຟ, ຕັດ-ຕິດຮູບພາບຮົ້ວໂຮງຮຽນ, ຂຽນສະຫຼະ ິ, ຕົວສະກົດຕາມຄຳສັບ, ກໍ້ເຈ້ຍເປັນຮູບທໍ່ກົມ, ແຕ້ມຮູບພາບດອກໄມ້ຕາມແບບ, ຕັດ, ຕິດ, ຕໍ່ເຈ້ຍຕໍ່ກັນເປັນພວງມະໄລ, ແຕ້ມຮູບພາບຄຸ, ຊວ້ານຕາມຮອຍຈ້ຳໄດ້ຖືກຕ້ອງ.

4. ອ່ານອອກສຽງພະຍັນຊະຕົ້ນຕາມຄຳສັບ: ໂຮງຮຽນ (ຮ), ຫ້ອງຮຽນ (ຫ), ຂັ້ນຮຽນອະນຸບານ 3 (ຂ), ໃນຫ້ອງຮຽນ (ນ), ເພື່ອນໃນຫ້ອງ (ພ), ເວົ້າເປັນປະໂຫຍກຕາມຮູບພາບ: ເດັກນ້ອຍໄຂຕິບເຂົ້າ, ເດັກນ້ອຍໃຊ້ບ່ວງຕັກອາຫານ, ເດັກນ້ອຍຕັກແກ້ງໃສ່ຖ້ວຍ, ເດັກນ້ອຍດັງໄຟໃສ່ໝໍ້ໜຶ້ງເຂົ້າ, ເດັກນ້ອຍເດັກນ້ອຍເອົາເຂົ້າໃສ່ຫວດ, ເດັກນ້ອຍຈັບມີດຊອຍຊີ້ນໃສ່ຂຽງ, ອ່ານຕາມຮູບພາບ: ແມ່ລ້ຽງແຕ່ງກິນ, ແມ່ລ້ຽງມ້ຽນຖ້ວຍ, ຄົນອະນາໄມກວາດເດີ່ນ, ອ່ານຕາມຮູບພາບປຶ້ມນິທານ ແມ່ລ້ຽງໃຈດີ, ອ່ານອອກສຽງຄຳສັບທີ່ມີສະຫຼະຄືກັນ ແລະ ຕ່າງກັນ: ບຸ, ຕຸ, ຄຸ, ບູດ ຕູ, ຕູ, ດູ, ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ີ: ຄີ, ສີ, ຊີ, ຜີ, ຖີ, ພີ, ມີ, ລີ, ອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ: ຊີ, ຊີ່, ຊີ້, ປີ, ປີ່, ປີ້,ກີ, ກີ່, ກີ້ຈີ, ຈີ່, ຈີ້, ມີ, ມີ່, ມີ້, ພີ, ພີ່, ພີ້, ອ່ານອອກສຽງຄຳສັບທີ່ມີຕົວສະກົດ: ກ, ນ, ດ, ບ, ອ່ານຕາມຮູບພາບປຶ້ມນິທານສອງສ່ຽວທ້າວ ຕຸ້ຍ ແລະ ທ້າວຈ່ອຍ, ເວົ້າເປັນປະໂຫຍກຕາມຮູບພາບ: ຖິ້ມຂີ້ເຫຍື້ອໃສ່ກະຕ່າ, ເດັກນ້ອຍເຊັດໂຕະ, ເດັກນ້ອຍເຊັດກະດານ, ເດັກນ້ອຍມ້ຽນບ່ອນນອນ, ເວົ້າເປັນປະໂຫຍກຕາມຮູບພາບ, ເດັກນ້ອຍປູກດອກໄມ້, ເດັກນ້ອຍຫົດນ້ຳດອກໄມ້ເດັກນ້ອຍກວາດເດີ່ນໂຮງຮຽນ, ເດັກນ້ອຍເຊັດຝາໂຮງຮຽນ, ອານຕາມຮູບພາບປຶ້ມນິທານເລື່ອງ ໝີດຳ ແລະ ນາງກະຕ່າຍດຸໝັ່ນ, ເວົ້າເປັນປະໂຫຍກຕາມຮູບພາບ: ເດັກນ້ອຍຈັບບົວຫົດນ້ຳ, ຊ້ວານດິນຊາຍ, ຈັບເຂີງຮອນຊາຍ, ຕັກຊາຍໃສ່ກະປ໋ອງ, ຖອກນ້ຳໃສ່ກະໂປະ, ອ່ານຄຳສັບຕາມຮູບພາບ: ອ່າງ, ຄຸ, ບົວນ້ອຍ, ກະປ໋ອງ, ຊ້ວານ ແລະ ເຂີງໄດ້ຊັດເຈນ.
5. ຫຼິ້ນບົດບາດສົມມຸດເປັນນາຍຄູສອນນັກຮຽນຮຽນໜັງສື, ເປັນແມ່ລ້ຽງປຸ່ງແຕ່ງອາຫານ, ເສີບອາຫານ, ເປັນນາຍຄູພາເດັກນ້ອຍກິນເຂົ້າ, ນອນ, ເປັນພະນັກງານອະນາໄມຫົດນ້ຳດອກໄມ້, ເປັນພໍ່ຄ້າ-ແມ່ຄ້າ ແລະ ລູກຄ້າຊື່ຂາຍອາຫານ, ຢ່າງມ່ວນຊື່ນ.
6. ຈັບຄູ່ທີ່ຄືກັນຮູບພາບໂຮງຮຽນຕາມສີ, ຮູບພາບເດັກນ້ອຍປະຕິບັດກິຈະກຳໃນໂຮງຮຽນ, ລຽນລຳດັບຕົວເລກແຕ່ 0-5, ຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ, ຈັບຄູ່ທີ່ຄືກັນກັບຕົວພະຍັນຊະນະ, ຈັບຄູ່ຮູບພາບຮູບພາບກັບຕົວພະຍັນຊະນະ, ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງຮຽນ, ຈັບຄູ່ທີ່ຄືກັນເຄື່ອງໃຊ້ໃນຫ້ອງອ່ານ, ສຶກສາລາຍລະອຽດຮູບພາບເຄື່ອງໃຊ້ໃນຫ້ອງອາຫານ, ຈັບຄູ່ທີ່ຄືກັນຮູບກ້ອນຈະຕຸລັດ; ກ້ອນສີ່ແຈ; ກ້ອນສາມແຈ, ຈັບຄູ່ທີ່ຄືກັນຮູບທໍ່ສາມລ່ຽມ, ໜ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມ, ຕໍ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນໄດ້ຖືກຕ້ອງ.
7. ທົດລອງການຈົມ-ຟູຂອງວັດຖຸ, ສັງເກດການຈະເລີນເຕີບໃຫຍ່ຂອງຕົ້ນດອກໄມ້ ແລະ ຫົດນ້ຳຕົ້ນດອກໄມ້, ທົດລອງຮອນຊາຍ, ທົດລອງຜອງນ້ຳກະຕຸກຢາງນ້ອຍໃສ່ຕຸກຢາງໃຫຍ່ໄດ້ຖືກຕ້ອງ,
8. ເກັບມ້ຽນເຄື່ອງຫຼິ້ນໄວເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
9. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
10. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
11. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ຈຸດປະສົງສຳລັບ ອາທິດທີ 1

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມສຽງສັນຍານ ສັ່ນກະແຊັກໄດ້ຖືກຕ້ອງ.
3. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງ, ເລື່ອງທີ່ນາຍຄູເລົ່າຢ່າງມ່ວນຊື່ນ.
4. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມທີ່ນາຍຄູກຳນົດໄດ້ຖືກຕ້ອງ.
5. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
6. ປອດໄພໃນເວລາສະແດງທ່າທາງ.
7. ກ້າສະແດງອອກໃນເວລາສະແດງທ່າທາງ.
8. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
9. ເວົ້າຄຳສຸພາບກັບໝູ່ເພື່ອນ.



# ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ໂຮງຮຽນ, ຂັ້ນຮຽນ, ຫ້ອງຮຽນ ແລະ ຊື່ໝູ່ເພື່ອນໃນຫ້ອງທີ່ຕົນເອງຮຽນໄດ້ຖືກຕ້ອງ.
2. ບອກຊື່, ໜ້າທີ່ຮັບຜິດຊອບ, ການປະຕິບັດຕົນຕໍ່ຄູປະຈຳຫ້ອງ, ຜູ້ອຳນວຍການໂຮງຮຽນ, ຄູຫ້ອງຂ້າງຄຽງ, ແມ່ລ້ຽງ ແລະ ພະນັກງານອະນາໄມໄດ້ຖືກຕ້ອງ.
3. ປະຕິບັດຕົວຈິງໃນການປະຕິບັດຕົນຕໍ່ຄູປະຈຳຫ້ອງ, ຄູໃນໂຮງຮຽນ, ຜູ້ອຳນວຍການໂຮງຮຽນ, ແມ່ລ້ຽງ ແລະ ພະນັກງານອະນາໄມ.
4. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ປະໂຫຍກຕາມເນື້ອໃນຄຳຄ່ອງ, ບົດເພງ, ບົດນິທານ ແລະ ຮູບພາບໄດ້ຊັດເຈນ.
5. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບໄດ້ຊັດເຈນ.
6. ໃຊ້ຄຳເວົ້າທີ່ສຸພາບເວົ້າກັບໝູ່ເພື່ອນ.
7. ມີຄວາມເບີກບານມ່ວນຊື່ນໃນການຮ້ອງເພງ ແລະ ຟັງນິທານ.
8. ອ່ານຕົວເລກຕາມລຳດັບແຕ່ 1-5 ໄດ້ຖືກຕ້ອງ.
9. ມີມາລະຍາດໃນການຟັງນິທານ.



## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບໂຮງຮຽນ, ສານລາຍອັດສະຫຼັບກຕ້ອງສີຟ້າ, ພັບເຈ້ຍເປັນຮູບສາມແຈ, ພິມສີໃບໄມ້ ແລະ ບອກຂັ້ນຕອນການປັ້ນດິນເປັນຮູບເຕົ້າດອກໄມ້ໄດ້ຖືກຕ້ອງ.
2. ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບໂຮງຮຽນໄດ້ສະອາດຈົບງາມ.
3. ສານລາຍອັດສະຫຼັບສີແດງ ແລະ ສີຟ້າ ແລະ  ພັບເຈ້ຍເປັນຮູບສາມແຈໄດ້ຄ້າຍຄື.
4. ພິມສີໃບໄມ້ໄດ້ສະອາດຈົບງາມ.
5. ປັ້ນດິນເປັນຮູບເຕົ້າດອກໄມ້ໄດ້ຄ້າຍຄື.
6. ແບ່ງປັນສໍສີ ແລະ ດິນປັ້ນໃຫ້ໝູ່ເພື່ອນ.
7. ມີຄວາມອົດທົນໃນການສານລາຍອັດສະລັບສີ, ພັບເຈ້ຍເປັນຮູບປື້ມ ແລະ ພິມສີໃບໄມ້.



## ກິດຈະກໍາກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ຫຼິ້ນແບບຫຼິ້ນລູ່ລີ່ເຂົ້າສານ, ຫຼິ້ນແບບຫຼິ້ນແຂ່ງຂັນແລ່ນເກັບທຸງ, ຫຼິ້ນຣ່າຍນໍ້າໃສ່ແກ້ວ ແລະ ປັ້ນຊາຍເປັນຮູບຕ່າງໆ, ຫຼິ້ນແບບຫຼິ້ນຕັ່ງວິເສດ ແລະ ການຫຼິ້ນແບບຫຼິ້ນແຂ່ງຂັນຫາມບານໄດ້ຖືກຕ້ອງ.
2. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຢ່າງກະໂປະໝາກພ້າວ, ຫຼິ້ນແບບຫຼິ້ນແຂ່ງຂັນແລ່ນເກັບທຸງ, ຫຼິ້ນຣ່າຍນໍ້າໃສ່ແກ້ວ ແລະ ປັ້ນຊາຍເປັນຮູບຕ່າງໆ, ຫຼິ້ນແບບຫຼິ້ນຕັ່ງວິເສດ ແລະ ການຫຼິ້ນແບບຫຼິ້ນແຂ່ງຂັນ ຫາມບານ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
4. ປອດໄພໃນເວລາຫຼິ້ນແບບຫຼິ້ນ.
5. ຟັງ ແລະ ຈໍາແນກສຽງ ໃນເວລາຫຼິ້ນແບບຫຼິ້ນ.
6. ອົດທົນໃນເວລາຫຼິ້ນແບບຫຼິ້ນ.
7. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.
8. ຄວາມຄ່ອງແຄ້ວ ແລະ ວ່ອງໄວ.



## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ, ຮູບພາບ ແລະ ຕົວເລກທີ່ມີຢູ່ໃນເກມ.
2. ຕໍ່ຮູບພາບເດັກນ້ອຍໄປໂຮງຮຽນ, ຮູບພາບພະນັກງານອະນາໄມປັດກວາດບໍລິເວນເດີ່ນໂຮງຮຽນໄດ້ຖືກຕ້ອງ.
3. ຈັບຄູ່ທີ່ຄືກັນຮູບພາບໂຮງຮຽນຕາມສີ, ຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນໄດ້ຖືກຕ້ອງ.
4. ລຽນລຳດັບຕົວເລກແຕ່ 0-5 ໄດ້ຖືກຕ້ອງ.
5. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
6. ອົດທົນໃນເວລາລຽນລຳດັບຕົວເລກ.
7. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.
8. ແບ່ງປັນເກມໃຫ້ໝູ່ເພື່ອນ.

## ກິດຈະກຳຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ແຕ້ມຕາມຮອຍຈ້ຳ-ທາສີຮູບພາບໂຮງຮຽນ, ເປົ່າສີເປັນຮູບພາບຕ່າງໆຕາມຈິນຕະນາການ, ສານລາຍອັດສະຫຼັບສີ: ສີແດງ, ສີຟ້າ, ພິມສີໃບໄມ້, ພັບເຈ້ຍເປັນສາມແຈຕາມແບບໄດ້ຖືກຕ້ອງ.
3. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ: ໂຮງຮຽນ (ຮ), ຫ້ອງຮຽນ (ຫ), ຂັ້ນຮຽນອະນຸບານ 3 (ຂ), ໃນຫ້ອງຮຽນ (ນ), ເພື່ອນໃນຫ້ອງ (ພ), ເວົ້າເປັນປະໂຫຍກຕາມຮູບພາບ: ເດັກນ້ອຍໄຂຕິບເຂົ້າ, ເດັກນ້ອຍໃຊ້ບ່ວງຕັກອາຫານ, ເດັກນ້ອຍຕັກແກງໃສ່ຖ້ວຍ, ເດັກນ້ອຍດັງໄຟໃສ່ໝໍ້ໜຶ້ງເຂົ້າ, ເດັກນ້ອຍເດັກນ້ອຍເອົາເຂົ້າໃສ່ຫວດ, ເດັກນ້ອຍຈັບມີດຊອຍຊີ້ນໃສ່ຂຽງ, ອ່ານຕາມຮູບພາບ: ແມ່ລ້ຽງແຕ່ງກິນ, ແມ່ລ້ຽງມ້ຽນຖ້ວຍ, ຄົນອະນາໄມກວາດເດີ່ນ, ອ່ານຕາມຮູບພາບປຶ້ມນິທານແມ່ລ້ຽງໃຈດີໄດ້ຊັດເຈນ.
4. ຫຼິ້ນບົດບາດສົມມຸດເປັນນາຍຄູສອນນັກຮຽນຮຽນໜັງສື, ເປັນແມ່ລ້ຽງປຸ່ງແຕ່ງອາຫານ, ເສີບອາຫານ, ເປັນນາຍຄູພາເດັກນ້ອຍກິນເຂົ້າ, ນອນ, ເປັນພະນັກງານອະນາໄມຫົດນ້ຳດອກໄມ້ຢ່າງມ່ວນຊື່ນ.
5. ຈັບຄູ່ທີ່ຄືກັນຮູບພາບໂຮງຮຽນຕາມສີ, ຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນ, ລຽນລຳດັບຕົວເລກແຕ່ 0-5 ໄດ້ຖືກຕ້ອງ.
6. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
7. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
8. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ:

- ຈັດກຸ່ມ 2 ຄົນໃຫ້ເດັກນ້ອຍແລ່ນຈັບມືກັນ 2 ຄົນ.
- ຈັດກຸ່ມ 3 ຄົນໃຫ້ເດັກນ້ອຍແລ່ນຈັບມືກັນ 3 ຄົນ.
- ຈັດກຸ່ມ 4 ຄົນໃຫ້ເດັກນ້ອຍແລ່ນຈັບມືກັນ 4 ຄົນ.

### III. ສື່ການຮຽນ-ການສອນ

1. ບົດເພງປະຢັດ.
2. ຮູບພາບໄຫນ້ຳ ຫຼື ອ່າງນ້ຳ, ຄຸ, ໂອ, ສະບູ, ຢາສະຜົມ, ຟອຍຖູແຂ້ວ ແລະ ຢາຖູແຂ້ວ.
3. ທ່າຫັດກາຍະບໍລິຫານລຳຄໍ ແລະ ແຂນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ແຂນ: ທ່າຫງ່ຽງລຳຄໍໄປທາງເບື້ອງຊ້າຍ ແລະ ທ່າໂຄ້ງແຂນຂວາໄປທາງຊ້າຍ, ແຂນຊ້າຍໂຄ້ງໄປທາງຂວາ.
2. ໃຫ້ເດັກນ້ອຍແລ່ນຕາມສຽງເພງ ປະຢັດ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຍ່າງເອົາມືກອດເອິກໄປມາຕາມສະບາຍ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ໂຮງຮຽນ ແລະ ຫ້ອງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ໂຮງຮຽນ, ຂັ້ນຮຽນ, ຫ້ອງຮຽນ ແລະ ຊື່ໝູ່ເພື່ອນໃນຫ້ອງທີ່ຕົນເອງຮຽນໄດ້ຖືກຕ້ອງ.
2. ຮ້ອງເພງ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດເພງໄດ້ຊັດເຈນ.
3. ອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບໄດ້ຊັດເຈນ.
4. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

1. ຊື່ໂຮງຮຽນ, ຂັ້ນຮຽນ, ຫ້ອງຮຽນ ແລະ ຊື່ໝູ່ເພື່ອນໃນຫ້ອງທີ່ຕົນເອງຮຽນ (ທ້າວ, ນາງ).
2. ການຮ້ອງເພງໂຮງຮຽນ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດເພງ.
3. ການອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ: ໂຮງຮຽນ (ຮ), ຫ້ອງຮຽນ (ຫ), ໃນຫ້ອງຮຽນ (ນ), ເພື່ອນໃນຫ້ອງ (ພ), ຂັ້ນຮຽນອະນຸບານ 3 (ຂ).

### III. ສື່ການຮຽນ-ການສອນ

1. ປ້າຍໂຮງຮຽນ, ປ້າຍຫ້ອງຮຽນ; ບົດເພງ ໂຮງຮຽນ (ເບິ່ງປຶ້ມຄູ່ມືຄູ).
2. ບັດພະຍັນຊະນະຕົ້ນຕາມຄຳສັບ: ໂຮງຮຽນ(ຮ), ຫ້ອງຮຽນ (ຫ), ໃນຫ້ອງຮຽນ (ນ), ເພື່ອນໃນຫ້ອງ(ພ), ຂັ້ນຮຽນອະນຸບານ 3 (ຂ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ໂຮງຮຽນ, ຫ້ອງຮຽນ ແລະ ຊື່ໝູ່ເພື່ອນໃນຫ້ອງຮຽນ.
2. ນາຍຄູພາເດັກນ້ອຍຮ້ອງເພງ, ສົນທະນາ, ເວົ້າຄຳສັບ ແລະ ເວົ້າປະໂຫຍກຕາມເນື້ອໃນບົດເພງ.
3. ນາຍຄູພາເດັກນ້ອຍອ່ານອອກສຽງພະຍັນຊະນະຕົ້ນຕາມຄຳສັບ.
4. ໃຫ້ເດັກນ້ອຍເວົ້າຄືນຊື່ໂຮງຮຽນ, ຊັ້ນຮຽນ ແລະ ຫ້ອງຮຽນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມດຸໝັ່ນໃນການມາໂຮງຮຽນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ໂຮງຮຽນ, ຂັ້ນຮຽນ, ຫ້ອງຮຽນ ແລະ ຊື່ໝູ່ເພື່ອນໃນ ຫ້ອງທີ່ຕົນເອງຮຽນ.
2. ຄວາມເບີກບານມ່ວນຊື່ນ, ຄວາມຊັດເຈນໃນການເວົ້າເປັນຄຳ ສັບ ແລະ ເປັນປະໂຫຍກຕາມບົດເພງ.
3. ຄວາມຊັດເຈນໃນການອ່ານອອກສຽງ ພະຍັນຊະນະຕົ້ນຕາມຄຳສັບ.
4. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບໂຮງຮຽນໄດ້ຖືກຕ້ອງ.
2. ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບໂຮງຮຽນໄດ້ສະອາດຈົບງາມ.
3. ແບ່ງປັນສໍສີໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບໂຮງຮຽນ.

### III. ສື່ການຮຽນ-ການສອນ

1. ສໍສີທຽນ ຫຼື ສີໄມ້ ແລະ ສໍດຳ.
2. ຮູບພາບໂຮງຮຽນມີຮອຍຈ້ຳ.
3. ແບບຮູບພາບໂຮງຮຽນທີ່ແຕ້ມ ແລະ ທາສີແລ້ວ.

### VI. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງແຕ້ມ ແລະ ທາສີຢູ່ເທິງກາງຫາວ.
2. ໃຫ້ເດັກນ້ອຍສັງເກດຮູບພາບໂຮງຮຽນ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບໂຮງຮຽນ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບໂຮງຮຽນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມຈົບງາມ ແລະ ເກັບມ້ຽນຜົນງານໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບໂຮງຮຽນ.
2. ຄວາມຈົບງາມໃການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບໂຮງຮຽນ.
3. ການແບ່ງປັນສໍສີໃຫ້ໝູ່ເພື່ອນ.

# ກິດຈະກໍາການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນຍ່າງເທິງກະໂປະໝາກພ້າວ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຍ່າງເທິງກະໂປະໝາກພ້າວໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນ ຍ່າງເທິງກະໂປະໝາກພ້າວ ໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ຍ່າງເທິງກະໂປະໝາກພ້າວ.

### III. ສື່ການຮຽນ-ການສອນ

1. ກອງ, ກະໂປະໝາກພ້າວ.
2. ບົດເພງ ໂຮງຮຽນ.
3. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ໂຮງຮຽນ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ຍ່າງເທິງກະໂປະໝາກພ້າວ ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ຍ່າງເທິງກະໂປະໝາກພ້າວ, ນາຍຄູຕິດຕາມ ແລະ ຊ່ວຍແນະນໍາ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີການອະນາໄມຕົນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍນັ່ງລົງຢຽດຂາຊື່ແລ້ວຄ່ອຍກົ້ມຫົວລົງ ແລະ ເງີຍຫົວຂຶ້ນຊ້າໆ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ ຍ່າງເທິງກະໂປະໝາກພ້າວ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນ ຍ່າງເທິງກະໂປະໝາກພ້າວ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບເດັກນ້ອຍໄປໂຮງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບເດັກນ້ອຍໄປໂຮງຮຽນໄດ້ຖືກຕ້ອງ.
3. ແບ່ງປັນເກມໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບເດັກນ້ອຍໄປໂຮງຮຽນ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບເດັກນ້ອຍໄປໂຮງຮຽນ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ຮູບພາບການເຄື່ອງໃຊ້ທີ່ຄືກັນ.
3. ບົດເພງ ໂຮງຮຽນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ໂຮງຮຽນ.
2. ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຕໍ່ຮູບພາບທີ່ຢູ່ໃນແຜ່ນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບເດັກນ້ອຍໄປໂຮງຮຽນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການແບ່ງປັນເກມໃຫ້ໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແບະ ຮູບພາບທີ່ຢູ່ໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບເດັກນ້ອຍໄປໂຮງຮຽນ.
3. ການແບ່ງປັນເກມໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ແຕ້ມຮູບພາບໂຮງຮຽນຕາມຮອຍຈໍ້າ ແລະ ທາສີໄດ້ຖືກຕ້ອງ; ເປົ່າສີເປັນຮູບພາບຕ່າງໆຕາມຈິນຕະນາການຢ່າງມ່ວນຊື່ນ.
3. ເວົ້າເປັນຄຳສັບຕາມຮູບພາບ ແລະ ອ່ານຄຳສັບທີ່ມີສະຫຼະ ×າ, ×ິ ໄດ້ຊັດເຈນ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມ, ເຄື່ອງຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
2. ການແຕ້ມຮູບພາບໂຮງຮຽນຕາມຮອຍຈໍ້າ, ທາສີຮູບ ແລະ ເປົ່າສີເປັນຮູບພາບຕ່າງໆຕາມຈິນຕະນາການ.
3. ການສັງເກດ ແລະ ເວົ້າຄຳສັບຕາມຮູບພາບ: ໂຮງຮຽນ, ຫ້ອງຮຽນ, ຂັ້ນຮຽນອະນຸບານ 3 ເພື່ອນໃນຫ້ອງ ແລະ ການອ່ານຄຳສັບຕາມສະຫຼະ ×ິ, ×າ: ສາລີ, ຝາຊີ, ລີດຜ້າ, ຢາດີ, ທາສີ, ໝາກປີ, ໝາກສີດາ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ສໍສີໄມ້ ຫຼື ສີທຽນ, ສີນໍ້າ, ທໍ່ດູດ ຫຼື ຫຼອດໄມ້ໄຜ່, ເຈ້ຍຂາວ, ເຈ້ຍຮູບພາບໂຮງຮຽນທີ່ມີຮອຍຈໍ້າ.
2. ມຸມອ່ານ: ບັດຄຳສັບໂຮງຮຽນ, ຫ້ອງຮຽນ, ຂັ້ນຮຽນອະນຸບານ 3, ເພື່ອນໃນຫ້ອງ, ປຶ້ມບົດເຝິກຫັດພາສາລາວເຫຼັ້ມ 1 (ໜ້າ 17) ຫຼື ເຈ້ຍຄຳສັບ: ສາລີ, ຝາຊີ, ລີດຜ້າ, ຢາດີ, ທາສີ, ໝາກປີ, ໝາກສີດາ; ກະດານສຽບ ຫຼື ຕິດ; ບົດເພງ ໂຮງຮຽນ; ບັດສັນຍະລັກ ເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ໂຮງຮຽນ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ມຸມ, ເຄື່ອງຫຼິ້ນຕາມມຸມ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການແຕ້ມ ແລະ ທາສີຮູບພາບໂຮງຮຽນ, ຄວາມມ່ວນຊື່ນໃນການເປົ່າສີເປັນຮູບພາບຕ່າງໆຕາມຈິນຕະນາການ.
3. ຄວາມຊັດເຈນໃນການເວົ້າເປັນຄຳສັບຕາມຮູບພາບ ແລະ ອ່ານຄຳສັບທີ່ມີສະຫຼະ ×າ, ×ິ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມສຽງສັນຍານສັ່ນກະແຊັກ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກໄດ້ຖືກຕ້ອງ.
2. ປອດໄພໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກ:

- ສັ່ນກະແຊັກ 1 ບາດຍ່າງໄປທາງໜ້າ.
- ສັ່ນກະແຊັກ 2 ບາດຍ່າງຖອຍຫຼັງ.
- ສັ່ນກະແຊັກ 3 ບາດຍ່າງໄປທາງຊ້າຍ.
- ສັ່ນກະແຊັກ 4 ບາດຍ່າງໄປທາງຂວາ.

### III. ສື່ການຮຽນ-ການສອນ

1. ກະແຊັກ.
2. ທ່າຫັດກາຍະບໍລິຫານມື ແລະ ແຂນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານມື ແລະ ແຂນ: ຕົບມືມາທາງໜ້າ, ຂ້າງຊ້າຍ, ຂ້າງຂວາ ແລະ ທ່າໝູນແຂນໄປອ້ອມຮອບ.
2. ໃຫ້ເດັກນ້ອຍຍ່າງຢ້ຳເທົ້າຕາມຈັງຫວະສຽງກອງຊ້າ-ໄວ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາ, ເອົາມືທັງສອງຄໍ່າພື້ນທາງຫຼັງ, ພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສຽງສັນຍານສັ່ນກະແຊັກ.
2. ຄວາມປອດໄພໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກບອກໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນຕໍ່ຄູປະຈຳຫ້ອງ.
2. ປະຕິບັດຕົວຈິງໃນການປະຕິບັດຕົນຕໍ່ຄູປະຈຳຫ້ອງ.
3. ເລົ່າຄຳຄ່ອງ, ເວົ້າຄຳສັບ ແລະ ປະໂຫຍກຕາມຄຳຄ່ອງໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນຕໍ່ຄູປະຈຳຫ້ອງ:

- ຊື່ຄູປະຈຳຫ້ອງ ແລະ ໜ້າທີ່ຮັບຜິດຊອບ: ຊື່ຄູ...; ໜ້າທີ່ຮັບຜິດຊອບ: ເບິ່ງແຍງລ້ຽງດູ ແລະ ນຳພາເດັກເຄື່ອນໄຫວກິດຈະກຳຕ່າງໆເຊັ່ນ: ຫຼິ້ນ, ກິນ, ນອນ, ຮຽນໜັງສື, ອະນາໄມ, ປະດັບປະດາຫ້ອງຮຽນໃຫ້ສວຍງາມ.
- ການປະຕິບັດຕົນ: ໄປມາລາຄອບ; ເວົ້າຈາສຸພາບ; ຂານຕອບໂດຍ, ເຈົ້າ, ຍໍມືນົບຖາມສະບາຍດີ; ເວລາໄດ້ຮັບສິ່ງຂອງຈາກນາຍຄູ ຫຼື ຜູ້ໃຫຍ່ຕ້ອງກ່າວຄຳວ່າ "ຂອບໃຈ", ຊ່ວຍເຫຼືອຄູອະນາໄມຫ້ອງ; ຫິ້ວຂອງຊ່ວຍຄູຕາມຄວາມສາມາດແລະຊ່ວຍເກັບມ້ຽນເຄື່ອງຮຽນ, ເຄື່ອງໃຊ້ໃຫ້ເປັນລະບຽບ.

2. ການເລົ່າຄຳຄ່ອງ ມາລະຍາດດີ, ເວົ້າຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.

- ຄຳສັບ: ເວົ້າຈາ, ຍ່າງ, ປ້າ, ຄູ, ລາວ, ຍໍມື, ໄຫວ້, ຖາມ, ສະບາຍດີ, ປື້ມ, ຍິ້ມ, ດີໃຈ, ຂອບໃຈ.
- ປະໂຫຍກ: ນາງໜີນ້ອຍຄ່ອຍເວົ້າຄ່ອຍຈາ, ນາງໜີນ້ອຍຍໍມືໄຫວ້ຖາມສະບາຍດີປ້າຄູ, ນາງໜີນ້ອຍຂອບໃຈນາຍຄູ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ນາຍຄູປະດັບປະດາຫ້ອງຮຽນ, ນາຍຄູພາເດັກນ້ອຍຫຼິ້ນ, ນາຍຄູນັ່ງເຝົ້າເດັກນ້ອຍນອນ, ເດັກນ້ອຍຍໍມືນົບສະບາຍດີນາຍຄູ.
2. ບົດຄຳຄ່ອງ ມາລະຍາດດີ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ຄູປະຈຳຫ້ອງ.
2. ນາຍຄູພາເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າຄຳສັບ ແລະ ເວົ້າເປັນປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາກ່ຽວກັບໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນຕໍ່ຄູປະຈຳຫ້ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງກ່ຽວກັບການປະຕິບັດຕົນຕໍ່ຄູປະຈຳຫ້ອງ.
5. ໃຫ້ເດັກນ້ອຍເວົ້າຄືນໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນຕໍ່ຄູປະຈຳຫ້ອງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການມາໂຮງຮຽນ ແລະ ການປະຕິບັດຕົນຕໍ່ຄູປະຈຳຫ້ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນຕໍ່ຄູປະຈຳຫ້ອງ.
2. ການປະຕິບັດຕົວຈິງໃນການປະຕິບັດຕົນຕໍ່ຄູປະຈຳຫ້ອງ.
3. ຄວາມຊັດເຈນໃນການເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ປະໂຫຍກຕາມຄຳຄ່ອງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ສານລາຍອັດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການສານລາຍອັດສະຫຼັບກັນໄດ້ຖືກຕ້ອງ.
2. ສານລາຍອັດສະຫຼັບສີແດງ ແລະ ສີຟ້າໄດ້ຄ້າຍຄື.
3. ມີຄວາມອົດທົນໃນການສານລາຍອັດສະຫຼັບສີ.

### II. ເນື້ອໃນຕົ້ນຕໍ

ການສານລາຍອັດສະຫຼັບສີແດງ ແລະ ສີຟ້າ.

### III. ສື່ການຮຽນ-ການສອນ

1. ຕັດເຈ້ຍສີແດງ ແລະ ສີຟ້າເປັນເສັ້ນ.
2. ແບບແຜ່ນເຈ້ຍທີ່ສານແລ້ວ.
3. ບົດຄຳຄ່ອງມາລະຍາດດີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ມາລະຍາດດີ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດແຜ່ນລາຍອັດທີ່ສານແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການສານລາຍອັດ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການສານລາຍອັດສະຫຼັບສີແດງ ແລະ ສີຟ້າ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການສານລາຍອັດສະຫຼັບສີແດງ ແລະ ສີຟ້າ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສາມັກຄີ ແລະ ເກັບຜົນງານໄປເກັບມ້ຽນໄວ້ບ່ອນທີ່ຄູກຳນົດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການສານລາຍອັດສະຫຼັບສີແດງ ແລະ ສີຟ້າ.
2. ຄວາມຄ້າຍຄືໃນການສານລາຍອັດສະລັບສີ.
3. ຄວາມອົດທົນໃນການສານລາຍອັດສະລັບສີແດງ ແລະ ສີຟ້າ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຂັນແລ່ນເກັບທຸງ

### I. ຈຸດປະສົງ

ໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນ ແຂ່ງຂັນແລ່ນເກັບທຸງໄດ້ຖືກຕ້ອງ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນ ແຂ່ງຂັນແລ່ນເກັບທຸງ.
3. ຄວາມຄ່ອງແຄ້ວວ່ອງໄວໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນແລ່ນເກັບທຸງ.

### III. ສື່ການຮຽນ-ການສອນ.

1. ບົດຄຳຄ່ອງ ມາລະຍາດທີ່ດີ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).
3. ກະຕ່ານ້ອຍ, ໝາກຫວິດ ແລະ ທຸງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ມາລະຍາດທີ່ດີ ປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ແຂ່ງຂັນແລ່ນເກັບທຸງ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກ ຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍ ຫຼິ້ນແບບຫຼິ້ນ ແຂ່ງຂັນແລ່ນເກັບທຸງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ມີຄວາມອົດທົນຫຼິ້ນຕາມລຳດັບ ການອະນາໄມຕົນ, ມືໃຫ້ສະອາດ ແລະ ເກັບມ້ຽນອຸປະກອນຊ່ວຍກັນ.
6. ໃຫ້ເດັກນ້ອຍເຄື່ອນໄຫວຊ້າໆ ຕາມສຽງສັນຍານ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ.

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນແລ່ນເກັບທຸງ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນແລ່ນເກັບທຸງ.
3. ຄວາມຄ່ອງແຄ້ວວ່ອງໄວໃນເວລາຫຼິ້ນແບບຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບໂຮງຮຽນຕາມສີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບໂຮງຮຽນຕາມສີໄດ້ຖືກຕ້ອງ.
3. ແບ່ງປັນເກມໃຫ້ໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບໂຮງຮຽນຕາມສີ: ສີແດງ, ສີເຫຼືອງ, ສີຟ້າ, ສີຂາວ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບໂຮງຮຽນຕາມສີ: ສີແດງ, ສີເຫຼືອງ, ສີຟ້າ, ສີຂາວ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບເດັກນ້ອຍໄປໂຮງຮຽນ.
3. ບົດຄຳຄ່ອງ ມາລະຍາດທີ່ດີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ມາລະຍາດທີ່ດີ.
2. ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບໂຮງຮຽນຕາມສີ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການແບ່ງປັນເກມໃຫ້ໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບນາຍຄູສອນໜັລສື.
3. ການແບ່ງປັນເກມໃຫ້ໝູ່ເພື່ອນໃນເວລາຫຼິ້ນເກມ..

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນນາຍຄູ, ນັກຮຽນ, ແມ່ລ້ຽງ ແລະ ພະນັກງານອະນາໄມຢ່າງມ່ວນຊື່ນ.
3. ສານລາຍອັດສະຫຼັບສີແດງ, ສີຟ້າ; ແຕ້ມ ແລະ ທາສີຮູບພາບໂຮງຮຽນໄດ້ຖືກຕ້ອງ.
4. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ມຸມ, ເຄື່ອງຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
2. ການຫຼິ້ນບົດບາດສົມມຸດເປັນນາຍຄູສອນ: ເປັນນັກຮຽນຮຽນ, ເປັນແມ່ລ້ຽງປຸງແຕ່ງອາຫານ ແລະ ເສີບອາຫານ: ຕຳໝາກຫຸ່ງ, ແກງປາ.
3. ການສານລາຍອັດສະຫຼັບສີແດງ, ສີຟ້າ; ການແຕ້ມ ແລະ ການທາສີຮູບພາບໂຮງຮຽນ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ໂຕະ, ຕັ່ງ, ກະດານ, ເຈ້ຍ, ເຄື່ອງໃຊ້ໃນຫ້ອງຄົວຂອງຈິງ ຫຼື ຈຳລອງ: ຖ້ວຍ, ບ່ວງ, ໝໍ້, ຈອງ.
2. ມຸມສິລະປະສ້າງສັນ: ເຈ້ຍສີແດງ, ສີຟ້າເປັນເສັ້ນ, ຮູບພາບໂຮງຮຽນ, ສໍດຳ, ສໍສີໄມ້ ຫຼື ສີທຽນ, ເຈ້ຍຮູບພາບໂຮງຮຽນ.
3. ບົດຄຳຄ່ອງ ມາລະຍາດທີ່ດີ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ມາລະຍາດທີ່ດີ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ມຸມ, ເຄື່ອງຫຼິ້ນຕາມມຸມ ແລະ ແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ມຸມ ແລະ ເຄື່ອງຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນນາຍຄູ, ນັກຮຽນ, ແມ່ລ້ຽງ.
3. ຄວາມຖືກຕ້ອງໃນການສານລາຍອັດສະຫຼັບສີ; ແຕ້ມ ແລະ ທາສີຮູບພາບ.
4. ການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບບົດຄຳຄ່ອງ ມາລະຍາດທີ່ດີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງຢ່າງມ່ວນຊື່ນ.
2. ກ້າສະແດງອອກໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງມາລະຍາດທີ່ດີ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ມາລະຍາດທີ່ດີ.
2. ທ່າຫັດກາຍະບໍລິຫານລຳຕົວ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).
3. ເຊືອກ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຕົວ ແລະ ຂາ: ທ່າໝູນລຳຕົວ ແລະ ທ່າໂຍ່ງໂຢະຂາລົງ.
2. ໃຫ້ເດັກນ້ອຍຍ່າງຊິກແຊັກຢຽບເຊືອກຍາວ 3 ແມັດ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນເອົາມືກອດເອິກຫຼັບຕາຫາຍໃຈເຂົ້າອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບກ້າສະແດງອອກໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງ.
2. ການກ້າສະແດງອອກໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ຄູຫ້ອງຂ້າງຄຽງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກບອກໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນຕໍ່ຄູຫ້ອງຂ້າງຄຽງ.
2. ປະຕິບັດຕົວຈິງໃນການປະຕິບັດຕົນຕໍ່ຄູຫ້ອງຂ້າງຄຽງ.
3. ເວົ້າເປັນປະໂຫຍກຕາມຮູບພາບໄດ້ຊັດເຈນ.
4. ປະຕິບັດຕົນຕໍ່ຄູປະຈຳຫ້ອງ.

### II. ເນື້ອໃນຕົ້ນຕໍ

1. ຄູຫ້ອງຂ້າງຄຽງ, ໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນ:
- ຊື່ຄູຫ້ອງຂ້າງຄຽງ ແລະ ໜ້າທີ່ຮັບຜິດຊອບ: ຊື່ຄູ...; ໜ້າທີ່ຮັບຜິດຊອບ: ເບິ່ງແຍງລ້ຽງດູ ແລະ ນຳພາເດັກເຄື່ອນໄຫວກິດຈະກຳຕ່າງໆເຊັ່ນ: ຫຼິ້ນ, ກິນ, ນອນ, ຮຽນໜັງສື, ອະນາໄມ, ປະດັບປະດາຫ້ອງຮຽນໃຫ້ສວຍງາມ.
- ການປະຕິບັດຕົນ: ເວົ້າຈາສຸພາບ; ຂານຕອບໂດຍ, ເຈົ້າ, ຍໍມືນົບຖາມສະບາຍດີ; ເວລາໄດ້ຮັບສິ່ງຂອງຈາກນາຍຄູ ຫຼື ຜູ້ໃຫຍ່ຕ້ອງກ່າວຄຳວ່າ "ຂອບໃຈ".

2. ການເວົ້າເປັນປະໂຫຍກຕາມຮູບພາບ: ນາຍຄູປະຈຳຫ້ອງຂ້າງຄຽງ, ນາຍຄູຕັກອາຫານໃຫ້ເດັກນ້ອຍ, ນາຍຄູສອນໜັງສືໃຫ້ເດັກນ້ອຍ, ເດັກນ້ອຍກວາດຫ້ອງຊ່ວຍນາຍຄູ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ນາຍຄູ, ນາຍຄູຕັກອາຫານໃຫ້ເດັກນ້ອຍ, ນາຍຄູສອນໜັງສືໃຫ້ເດັກນ້ອຍ, ເດັກນ້ອຍກວາດຫ້ອງຊ່ວຍນາຍຄູ.
2. ຫ້ອງຮຽນຫ້ອງຂ້າງຄຽງ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະກັບເດັກນ້ອຍກ່ຽວກັບໜ້າທີ່ຮັບຜິດຊອບຂອງຄູຫ້ອງຂ້າງຄຽງ ແລະ ການປະຕິບັດຕົນ.
2. ໃຫ້ເດັກນ້ອຍໄປຢ້ຽມຢາມຫ້ອງຂ້າງຄຽງ, ປະຕິບັດຕົວຈິງການປະຕິບັດຕົນຕໍ່ຄູຫ້ອງຂ້ງຄຽງ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູພາເດັກເວົ້າເປັນປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍເວົ້າຄືນການປະຕິບັດຕົນຕໍ່ຄູຫ້ອງຂ້າງຄຽງ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການປະຕິບັດຕົນຕໍ່ຄູປະຈຳຫ້ອງ ແລະ ຄູຫ້ອງຂ້າງຄຽງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກໜ້າທີ່ຮັບຜິດຊອບຄູຫ້ອງຂ້າງຄຽງ ແລະ ການປະຕິບັດຕົນ.
2. ການປະຕິບັດຕົວຈິງໃນການປະຕິບັດ ຕົນຕໍ່ຄູຫ້ອງຂ້າງຄຽງ.
3. ຄວາມຊັດເຈນໃນການເວົ້າເປັນປະໂຫຍກຕາມຮູບພາບ.
4. ການປະຕິບັດຕົນຕໍ່ຄູຫ້ອງຂ້າງຄຽງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພັບເຈ້ຍ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການພັບເຈ້ຍເປັນຮູບສາມແຈໄດ້ຖືກຕ້ອງ.
2. ພັບເຈ້ຍເປັນຮູບສາມແຈໄດ້ຄ້າຍຄື.
3. ມີຄວາມອົດທົນໃນການພັບເຈ້ຍເປັນຮູບສາມແຈ.

## II. ເນື້ອໃນຕົ້ນຕໍ

ການພັບເຈ້ຍເປັນຮູບສາມແຈ.

## III. ສື່ການຮຽນ-ການສອນ

1. ເຈ້ຍສີ່ແຈ.
2. ແບບຮູບສາມແຈທີ່ພັບແລ້ວ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງເອົານິ້ວມືທັງ 2 ເບື້ອງປະສານກັນແລ້ວແອນໄປມາ.
2. ໃຫ້ເດັກນ້ອຍສັງເກດຮູບສາມແຈທີ່ພັບແລ້ວ, ສົນທະນາກ່ຽວກັບປະໂຫຍດ ແລະ ບອກຂັ້ນຕອນການພັບເຈ້ຍ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການພັບເຈ້ຍເປັນຮູບສາມແຈ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການພັບເຈ້ຍເປັນຮູບສາມແຈ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຊ່ວຍກັນ, ຄວາມອົດທົນ ແລະ ເກັບຜົນງານໄປມ້ຽນໄວ້.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນໃນການພັບເປັນຮູບສາມແຈ.
2. ຄວາມຄ້າຍຄືໃນການພັບເຈ້ຍເປັນຮູບສາມແຈ.
3. ຄາວມອົດທົນໃນການພັບເຈ້ຍເປັນຮູບສາມແຈ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນຮ່າຍນ້ຳສີຕ່າງໆ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຮ່າຍນ້ຳສີຕ່າງໆໄດ້ຖືກຕ້ອງ.
2. ຫຼິ້ນຮ່າຍນ້ຳສີຕ່າງໆໄດ້ຄ່ອງແຄ້ວ.
3. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນຮ່າຍນ້ຳສີຕ່າງໆ

### III. ສື່ການຮຽນ-ການສອນ

1. ນ້ຳສີແດງ, ແກ້ວ, ຄຸ, ຈອກ, ນ້ຳສີເຫຼືອງ, ກອງ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍຍ່າງຊ້າໆ ຕາມສຽງຕີບກອງ.
2. ນາຍຄູສະເໜີ ແບບຫຼິ້ນຮ່າຍນ້ຳສີຕ່າງໆ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນຮ່າຍນ້ຳສີຕ່າວໆ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ບໍ່ວ່ານດິນຊາຍ ຫຼື ຫົວນ້ຳໃສ່ກັນ, ຫຼັງຈາກຫຼິ້ນແລ້ວອະນາໄມຕີນ, ມືໃຫ້ສະອາດ ແລະ ຊ່ວຍກັນເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍຢືນຂຶ້ນສັ່ນມື ແລະ ທຶບຕີນ ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2, ຄວາມຄ່ອງແຄ້ວໃນການຫຼິ້ນຮ່າຍນ້ຳສີຕ່າງໆ.
3. ຄວາມແຂງແຮງຂອງກ້າມຊີ້ນມືໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນໄດ້ຖືກຕ້ອງ.
3. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນ: ເດັກນ້ອຍຍໍມືນົບນາຍຄູ, ນັ່ງຂຽນໜັງສື, ກິນເຂົ້າ, ຫຼິ້ນກັບໝູ່, ລຽນແຖວ, ນອນພັກຜ່ອນ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນ: ເດັກນ້ອຍຍໍມືນົບນາຍຄູ, ນັ່ງຂຽນໜັງສື, ກິນເຂົ້າ, ຫຼິ້ນກັບໝູ່, ລຽນແຖວ, ນອນພັກຜ່ອນ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບໂຮງຮຽນຕາມສີ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດຕົນ.
2. ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການເວົ້າຄຳທີ່ສຸພາບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນ.
3. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຈັບຄູ່ທີ່ຄືກັນຮູບພາບໂຮງຮຽນຕາມສີ, ຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນໄດ້ຖືກຕ້ອງ.
3. ຫຼິ້ນບົດບາດສົມມຸດເປັນນາຍຄູ ແລະ ນັກຮຽນຢ່າງມ່ວນຊື່ນ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ.
2. ຈັບຄູ່ທີ່ຄືກັນຮູບພາບໂຮງຮຽນຕາມສີ: ສີແດງ, ສີເຫຼືອງ, ສີຟ້າ, ສີຂາວ, ຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນ: ເດັກນ້ອຍຍໍມືນົບນາຍຄູ, ນັ່ງຂຽນໜັງສື, ກິນເຂົ້າ, ຫຼິ້ນກັບໝູ່, ລຽນແຖວ, ນອນພັກຜ່ອນ.
3. ການຫຼິ້ນບົດບາດສົມມຸດເປັນນາຍຄູພາເດັກນ້ອຍກິນເຂົ້າ ແລະ ນອນ; ເປັນນາຍຄູສອນນັກຮຽນຮຽນໜັງສື.

### III. ສື່ການຮຽນ-ການສອນ

1. ມຸມເກມການສຶກສາ: ຈັບຄູ່ທີ່ຄືກັນຮູບພາບໂຮງຮຽນຕາມສີ: ສີແດງ, ສີເຫຼືອງ, ສີຟ້າ, ສີຂາວ, ຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນ: ເດັກນ້ອຍຍໍມືນົບນາຍຄູ, ນັ່ງຂຽນໜັງສື, ກິນເຂົ້າ, ຫຼິ້ນກັບໝູ່, ລຽນແຖວ, ນອນພັກຜ່ອນ.
2. ມຸມບົດບາດສົມມຸດ: ໂຕະ, ຕັ່ງ, ກະດານ, ເຈ້ຍ, ເຄື່ອງໃຊ້ໃນຫ້ອງຄົວຂອງຈິງ ຫຼື ຈຳລອງ: ຖ້ວຍ, ບ່ວງ, ເຄື່ອງນອນ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມການສຶກສາ ແລະ ມຸມບົດບາດສົມມຸດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບໂຮງຮຽນຕາມສີ, ຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນ.
3. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນນາຍຄູ ແລະ ນັກຮຽນ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມທີ່ນາຍຄູກຳນົດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມຕາມທີ່ນາຍຄູກຳນົດໄດ້ຖືກຕ້ອງ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມຕາມທີ່ນາຍຄູກຳນົດ: ຮັບສິ່ງຂອງ, ຍໍມືນົບ, ຍ່າງໂຢະ ຕົວລົງເມື່ອຍ່າງກາຍຜູ້ໃຫຍ່.

### III. ສື່ການຮຽນ-ການສອນ

1. ຮູບພາບເດັກນ້ອຍນົບນາຍຄູ.
2. ທ່າຫັດກາຍະບໍລິຫານແຂນ ແລະ ຂາ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຂາ: ທ່າຍົກແຂນຂຶ້ນເທິງຫົວ, ພັບແຂນສອກເຂົ້າປາຍນິ້ວມືຈຸບ່າ ແລະ ທ່າຢືນຂາດຽວຍົກຂາຊ້າຍຄູ້ເຂົ້າທາງຫຼັງພ້ອມທັງເອົາມືຈັບໄວ້ (ຜັດປ່ຽນເບື້ອງ).
2. ໃຫ້ເດັກນ້ອຍເຕັ້ນຊິກແຊັກຊ້າຍ-ຂວາ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມຕາມທີ່ນາຍຄູກຳນົດ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນອນຫງາຍຫຼັບຕາວາແຂນອອກ, ພ້ອມທັງຈ່າງຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມຕາມທີ່ນາຍຄູກຳນົດ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມຕາມທີ່ນາຍຄູກຳນົດ.
2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ຜູ້ອຳນວຍການໂຮງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກບອກຊື່, ໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນຕໍ່ຜູ້ອຳນວຍການໂຮງຮຽນໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການປະຕິບັດຕົນຕໍ່ຜູ້ອຳນວຍການໂຮງຮຽນ.
3. ອ່ານຕົວເລກຕາມລຳດັບແຕ່ 0-5 ໄດ້ຖືກຕ້ອງ.
4. ປະຕິບັດຕົນຕໍ່ຜູ້ອຳນວຍການໂຮງຮຽນ.

### II. ເນື້ອໃນຕົ້ນຕໍ

1. ຊື່ຜູ້ອຳນວຍການ, ໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນ:

- ຊື່ຜູ້ອຳນວຍການ...; ໜ້າທີ່ຮັບຜິດຊອບ: ເຮັດວຽກຫ້ອງການ, ນຳພາ ແລະ ຊ່ວຍ ເຫຼືອນາຍຄູທຸກຄົນໃນໂຮງຮຽນ.
- ການປະຕິບັດຕົນ: ເວົ້າຈາສຸພາບ, ຂານຕອບໂດຍ, ເຈົ້າ, ຍໍມືນົບຖາມສະບາຍດີ, ແນະນຳໃຊ້ແທນຊື່ຕົນເອງດ້ວຍຄຳວ່າ: ຂ້ານ້ອຍ, ລູກຫຼານ; ເວລາໄດ້ຮັບສິ່ງຂອງຈາກຄູ ຫຼື ຜູ້ໃຫຍ່ກ່າວຄຳວ່າ "ຂອບໃຈ".

2. ການອ່ານຕົວເລກຕາມລຳດັບແຕ່ 0-5.

### III. ສື່ການຮຽນ-ການສອນ

ຫ້ອງຜູ້ອຳນວຍການ; ບັດຕົວເລກ 0-5.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະກັບເດັກນ້ອຍກ່ຽວກັບຊື່ຜູ້ອຳນວຍການ ແລະ ການປະຕິບັດຕົນ.
2. ນາຍຄູພາເດັກນ້ອຍໄປຢ້ຽມຢາມຫ້ອງຜູ້ອຳນວຍການ, ປະຕິບັດຕົວຈິງການປະຕິບັດຕົນຕໍ່ຜູ້ອຳນວຍການ.
3. ໃຫ້ເດັກນ້ອຍອ່ານບັດຕົວເລກແຕ່ 0-5.
4. ໃຫ້ເດັກນ້ອຍເວົ້າຄືນການປະຕິບັດຕົນຕໍ່ຜູ້ອຳນວຍການໂຮງຮຽນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການປະຕິບັດຕົນຕໍ່ຜູ້ອຳນວຍການໂຮງຮຽນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ຜູ້ອຳນວຍການ, ໜ້າທີ່ຮັບຜິດຊອບ ແລະ ການປະ ຕິບັດຕົນ.
2. ການປະຕິບັດຕົວຈິງໃນການປະຕິບັດ ຕົນຕໍ່ຄູຜູ້ອຳນວຍການໂຮງຮຽນ
3. ຄວາມຖືກຕ້ອງໃນການອ່ານຕົວເລກຕາມລຳດັບແຕ່ 1-5.
4. ການປະຕິບັດຕົນຕໍ່ຜູ້ອຳນວຍການໂຮງຮຽນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພິມສີໃບໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການພິມສີໃບໄມ້ໄດ້ຖືກຕ້ອງ.
2. ພິມສີໃບໄມ້ໄດ້ສະອາດຈົບງາມ.
3. ມີຄວາມອົດທົນໃນການພິມສີໃບໄມ້.

### II. ເນື້ອໃນຕົ້ນຕໍ

ການພິມສີໃບໄມ້.

### III. ສື່ການຮຽນ-ການສອນ

1. ເຈ້ຍຂາວ.
2. ສໍສີທຽນ.
3. ໃບໄມ້.
4. ເຈ້ຍແບບທີ່ພິມສີໃບໄມ້.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງສັ່ນຄໍ່ມື ແລະ ຢືບນິ້ວມືຕາມລຳດັບແຕ່ນິ້ວຊີ້ຫານິ້ວກ້ອຍ.
2. ໃຫ້ເດັກນ້ອຍສັງເກດຮູບໃບໄມ້ທີ່ພິມສີແລ້ວ ແລະ ສົນທະນາກັບກ່ຽວກັບການພິມສີຮູບໃບໄມ້.
3. ນາຍຄູແນະນຳ ແລະ ສາທິດການຂັ້ນຕອນການພິມສີໃບໄມ້.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການພິມສີໃບໄມ້.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມງາມ ແລະ ເກັບມ້ຽນຜົນງານໄວ້ບ່ອນທີ່ຄູກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນໃນການພິມສີໃບໄມ້.
2. ຄວາມສະອາດຈົບງາມໃນການພິມສີໃບໄມ້.
3. ຄວາມອົດທົນໃນການພິມສີໃບໄມ້.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນຖົງວິເສດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຖົງວິເສດໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນຖົງວິເສດໄດ້ຖືກຕ້ອງ.
3. ຄວາມຄ່ອງແຄ້ວວ່ອງໄວໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ:

ການຫຼິ້ນແບບຫຼິ້ນ ຖົງວິເສດ.

### III. ສື່ການຮຽນ-ການສອນ

1. ຖົງຜ້າ, ດອກໄມ້, ບົດເພງ ໂຮງຮຽນ ແລະ ກະແຊັກ.
2. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍລຽນແຖວເປັນ2ແຖວຂວາງ ຍົກເຂົ່າ, ກະໂດດ ແລະ ເຕັ້ນຢູ່ກັບທີ່.
2. ນາຍຄູສະເໜີ ແບບຫຼິ້ນຖົງວິເສດ, ສາທິດວິທີ ແລະ ຂັ້ນຕອນ ໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍ ຫຼິ້ນແບບຫຼິ້ນຖົງວິເສດ, ນາຍຄູຕິດຕາມ ແລະຊ່ວຍແນະນຳ
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ການລະມັດລະວັງ ແລະ ການເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍເອົາມືສອງເບື້ອງ ຍົກຂຶ້ນກາຍຫົວ ແລະ ເຮັດທ່າທາງພັດມາຊ້າໆ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ.

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນຖົງວິເສດ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນຖົງວິເສດ.
3. ຄວາມຄ່ອງແຄ້ວ ແລະ ວ່ອງໄວໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມລຽນລຳດັບຕົວເລກແຕ່ 0-5

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຕົວເລກທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ລຽນລຳດັບຕົວເລກແຕ່ 0-5 ໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການລຽນລຳດັບຕົວເລກແຕ່ 0-5: 0, 1, 2, 3, 4, 5.

### III. ສື່ການຮຽນ-ການສອນ

1. ແຜ່ນເກມລຽນລຳດັບຕົວເລກແຕ່ 0-5: 0, 1, 2, 3, 4, 5 (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນ.
3. ບົດລຳຄ່ອງ ມາລະຍາດທີ່ດີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍນັບປາກເປົ່າ 1-5.
2. ໃຫ້ເດັກນ້ອຍສັງເກດຕົວເລກ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຕົວເລກທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຕົວເລກ ແລະ ການຫຼິ້ນເກມລຽນລຳດັບຕົວເລກ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຕົວເລກທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການລຽນລຳດັບຕົວເລກແຕ່ 0-5.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ພິມສີ ແລະ ພັບເຈ້ຍເປັນຮູບສາມແຈໄດ້ຖືກຕ້ອງ.
3. ຫຼິ້ນເກມລຽນລຳດັບຕົວເລກ ແລະ ເກມເກມຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນໄດ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
2. ການພິມສີໃບໄມ້ ແລະ ພັບເຈ້ຍເປັນຮູບສາມແຈ.
3. ການລຽນລຳດັບຕົວເລກແຕ່ 0-5; ຫຼິ້ນເກມເກມຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນ: ເດັກນ້ອຍຍໍມືນົບນາຍຄູ, ນັ່ງຂຽນໜັງສື, ກິນເຂົ້າ, ຫຼິ້ນກັບໝູ່, ລຽນແຖວ,ນອນພັກຜ່ອນ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ເຈ້ຍສຳລັບພັບ, ໃບໄມ້, ເຈ້ຍຂາວ, ສໍສີໄມ້ ຫຼື ສີທຽນ.
2. ມຸມເກມການສຶກສາ: ເກມລຽນລຳດັບຕົວເລກແຕ່ 0-5; ເກມຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນ: ເດັກນ້ອຍຍໍມືນົບນາຍຄູ, ນັ່ງຂຽນໜັງສື, ກິນເຂົ້າ, ຫຼິ້ນກັບໝູ່, ລຽນແຖວ, ນອນພັກຜ່ອນ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການພິມສີ ແລະ ພັບເຈ້ຍເປັນຮູບສາມແຈ.
3. ຄວາມຖືກຕ້ອງໃນການຫຼິ້ນເກມລຽນລຳດັບຕົວເລກ ແລະ ເກມຈັບຄູ່ທີ່ຄືກັນຮູບພາບເດັກນ້ອຍປະຕິບັດກິດຈະກຳໃນໂຮງຮຽນ
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບເລື່ອງແມ່ລ້ຽງ ແລະ ພະນັກງານອະນາໄມ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າຢ່າງມ່ວນຊື່ນ.
2. ເວົ້າຄຳສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ:

- ແມ່ລ້ຽງແຕ່ງອາຫານ ແລະ ລ້າງຖ້ວຍ.
- ພະນັກງານອະນາໄມກວາດເດີ່ນໂຮງຮຽນ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານແຂນ ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຕີນ: ທ່າແຂນຂວາໂຄ້ງໄປທາງຊ້າຍ, ແຂນຊ້າຍໂຄ້ງໄປທາງຂວາ ແລະ ທ່າຢ່ຳເທົ້າ.
2. ໃຫ້ເດັກນ້ອຍໂດດຢຽດຢາງ ສູງ 30 ຊມ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຄູ້ຂາເອົາມືທັງສອງຄ່ຳພື້ນທາງຫຼັງພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບເວົ້າຄຳສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເລື່ອງທີ່ນາຍຄູເລົ່າ.
2. ການເວົ້າຄຳສຸພາບກັບໝູ່ເພື່ອນ.

# ກິດຈະກຳວົງມົນ

## ຫົວຂໍ້: ແມ່ລ້ຽງ ແລະ ພະນັກງານອະນາໄມ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກບອກຊື່, ໜ້າທີ່ຮັບຜິດຊອບ ແລະ ການປະຕິບັດຕົນຕໍ່ແມ່ລ້ຽງ ແລະ ພະນັກງານອະນາໄມໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການປະຕິບັດຕົນຕໍ່ແມ່ລ້ຽງ ແລະ ພະນັກງານອະນາໄມ.
3. ການຟັງນິທານ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນນິທານໄດ້ຊັດເຈນ.
4. ປະຕິບັດຕົນຕໍ່ແມ່ລ້ຽງ ແລະ ພະນັກງານອະນາໄມ.

### II. ເນື້ອໃນຕົ້ນຕໍ

1. ຊື່ແມ່, ໜ້າທີ່ຮັບຜິດຊອບ, ການປະຕິບັດຕົນຕໍ່ແມ່ລ້ຽງ ແລະ ພະນັກງານອະນາໄມ.
- ຊື່ແມ່ລ້ຽງ...; ໜ້າທີ່ຮັບຜິດຊອບ: ແຕ່ງອາຫານໃຫ້ເດັກກິນ, ຈັດມ້ຽນເຄື່ອງໃຊ້ໃນເຮືອນຄົວໃຫ້ເປັນລະບຽບ.
- ຊື່ພະນັກງານອະນາໄມ...; ໜ້າທີ່ຮັບຜິດຊອບ: ປັດກວາດບໍລິເວນໂຮງຮຽນໃຫ້ສະອາດ; ປູກ ແລະ ບົວລະບັດຕົ້ນດອກໄມ້ໃຫ້ສວຍງາມ.
- ການປະຕິບັດຕົນ: ເວົ້າຈາສຸພາບ, ຂານຕອບໂດຍ, ເຈົ້າ, ຍໍມືນົບຖາມສະບາຍດີ, ແນະນຳໃຊ້ແທນຊື່ຕົນເອງດ້ວຍຄຳວ່າ: ຂ້ານ້ອຍ, ຫຼານ, ລູກ, ເວລາໄດ້ຮັບສິ່ງຂອງກ່າວຄຳວ່າ: " ຂອບໃຈ " ທຸກຄັ້ງ.

2. ການຟັງນິທານເລື່ອງ ແມ່ລ້ຽງໃຈດີ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນນິທານ.
- ຄຳສັບ: ແມ່ລ້ຽງ, ຕົກເຮ່ຍ, ຕັກ, ລ້າງ, ຮັກ, ຖົ້ມ, ຊະຊາຍ, ຂອບໃຈ.
- ປະໂຫຍກ: ແມ່ລ້ຽງແຕ່ງອາຫານໃຫ້ເດັກນ້ອຍກິນ, ພວກຫຼານມ້ຽນຈານຊ່ວຍແມ່ລ້ຽງ, ພວກເດັກນ້ອຍມີຄວາມສາມັກຄີກັນ, ພວກຫຼານໝົດທຸກຄົນຮັກແມ່ລ້ຽງ, ພວກຫຼານຂອບໃຈແມ່ລ້ຽງ.

### III. ສື່ການຮຽນ-ການສອນ

1. ຫ້ອງຄົວ; ຮູບພາບ: ແມ່ລ້ຽງແຕ່ງກິນ, ແມ່ລ້ຽງມ້ຽນຖ້ວຍ, ຄົນອະນາໄມກວາດເດີ່ນ.
2. ນິດນິທານເລື່ອງ ແມ່ລ້ຽງໃຈດີ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍສັງເກດຮູບພາບ, ສົນທະນາກັບເດັກນ້ອຍກ່ຽວກັບຊື່ແມ່ລ້ຽງ, ຊື່ພະນັກງານອະນາໄມ ແລະ ການປະຕິບັດຕົນ.
2. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນນິທານ.
3. ນາຍຄູພາເດັກນ້ອຍໄປຢ້ຽມຢາມຫ້ອງຄົວ, ປະຕິບັດຕົວຈິງການປະຕິບັດຕົນຕໍ່ແມ່ລ້ຽງ ແລະ ພະນັກງານອະນາໄມ.
4. ໃຫ້ເດັກນ້ອຍເວົ້າຄືນການປະຕິບັດຕົນຕໍ່ແມ່ລ້ຽງ ແລະ ພະນັກງານອະນາໄມ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການປະຕິບັດຕົນຕໍ່ແມ່ລ້ຽງ ແລະ ພະນັກງານອະນາໄມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ແມ່ລ້ຽງ, ພະນັກງານອະນາໄມ, ໜ້າທີຮັບຜິດຊອບ ແລະ ການປະຕິບັດຕົນ.
2. ການປະຕິບັດຕົວຈິງໃນການປະຕິບັດຕົນຕໍ່ແມ່ລ້ຽງ ແລະ ພະນັກງານອະນາໄມ.
3. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນນິທານ.
4. ການປະຕິບັດຕົນຕໍ່ແມ່ລ້ຽງ ແລະ ພະ ນັກງານອະນາໄມ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ປັ້ນດິນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຂັ້ນຕອນການປັ້ນດິນເປັນຮູບເຕົ້າດອກໄມ້ໄດ້ຖືກຕ້ອງ.
2. ປັ້ນດິນເປັນຮູບເຕົ້າດອກໄມ້ໄດ້ຄ້າຍຄື.
3. ແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການປັ້ນດິນເປັນຮູບເຕົ້າດອກໄມ້.

### III. ສື່ການຮຽນ-ການສອນ

1. ດິນປັ້ນ ຫຼື ແປ້ງສຳລັບປັ້ນ.
2. ຜ້າຮອງປັ້ນ.
3. ເສື້ອກັນເປື້ອນ.
4. ຮູບເຕົ້າດອກໄມ້ທີ່ປັ້ນແລ້ວ.
5. ຊາມນ້ຳ, ຜ້າເຊັດມື ແລະ ສະບູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງບີບນວດອຶ້ງມື, ລີ້ງດິນ ແລະ ປັ້ນດິນ.
2. ໃຫ້ເດັກນ້ອຍສັງເກດຮູບເຕົ້າດອກໄມ້ທີ່ປັ້ນແລ້ວ ແລະ ບອກກ່ຽວກັບຂັ້ນຕອນການປັ້ນດິນ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການປັ້ນດິນເປັນຮູບເຕົ້າດອກໄມ້.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການປັ້ນດິນເປັນຮູບເຕົ້າດອກໄມ້.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີແບ່ງປັນ, ຮັກສາຄວາມສະອາດ ແລະ ເກັບມ້ຽນອຸປະກອນໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການປັ້ນດິນ.
2. ຄວາມຄ້າຍຄືຂອງການປັ້ນດິນເປັນຮູບເຕົ້າດອກໄມ້.
3. ການແບ່ງປັນດິນປັ້ນໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້ : ແບບຫຼິ້ນ ແຂ່ງຍັບຫາມບານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຍັບຫາມບານໄດ້ຖືກຕ້ອງ.
2. ເຝິກກ້າມຊີ້ນມື, ແຂນ ແລະ ຂາໃຫ້ມີຄວາມ ແຂງແຮງ.
3. ມີຄວາມອົດທົນໃນການຫຼິ້ນ.

### II. ເນື້ອໃນຕົ້ນຕໍ:

ການຫຼິ້ນແບບຫິ້ນແຂ່ງຍັບຫາມບານ.

### III. ສື່ການຮຽນ-ການສອນ.

1. ໝາກບານ, ເຈ້ຍໜັງສືພິມ, ຖົງຢາງໃຫຍ່, ໄມ້ນ້ອຍ, ສຳລັບຂີດເສັ້ນໄຊ- ເສັ້ນເລີ່ມ ແລະ ກອງ.
2. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍໝູນເອົາ, ເບັດແອວ ແລະ ແກວ່ງແຂນໄປ-ມາ.
2. ນາຍຄູສະເໜີແບບຫຼິ້ນແຂ່ງຍັບ ຫາມບານ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຍັບ ຫາມບານ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນຮ່ວມກັນດ້ວຍຄວາມອົດທົນ, ຫຼິ້ນຕາມລຳດັບ ແລະ ການເກັບມ້ຽນອຸປະກອນ,

6 ໃຫ້ເດັກນ້ອຍນັ່ງເປັນວົງມົນທັນຫຼັງ ແລະ ບີບບ່າໄລ່ໃຫ້ກັນ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນ ແຂ່ງຍັບຫາມບານ.
3. ຄວາມອົດທົນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບພະນັກງານອະນາໄມປັດກວາດບໍລິເວນເດີ່ນໂຮງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບພະນັກງານອະນາໄມປັດກວາດບໍລິເວນເດີ່ນໂຮງຮຽນໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບພະນັກງານອະນາໄມປັດກວາດບໍລິເວນເດີ່ນໂຮງຮຽນ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບພະນັກງານອະນາໄມປັດກວາດບໍລິເວນເດີ່ນໂຮງຮຽນ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລຽນລຳດັບຕົວເລກແຕ່ 0-5.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ແມ່ລ້ຽງ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບພະນັກງານອະນາໄມປັດກວາດບໍລິເວນເດີ່ນໂຮງຮຽນ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນແມ່ລ້ຽງ ແລະ ພະນັກງານອະນາໄມຢ່າງມ່ວນຊື່ນ.
3. ເວົ້າເປັນປະໂຫຍດຕາມຮູບພາບ ແລະ ອ່ານຕາມຮູບພາບໃນປຶ້ມນິທານໄດ້ຊັດເຈນ.
4. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
2. ການຫຼິ້ນບົດບາດສົມມຸດເປັນແມ່ລ້ຽງປຸງແຕ່ງອາຫານ: ຕຳໝາກຫຸ່ງ, ແກງປາ, ເປັນພະນັກງານອະນາໄມຫົດນ້ຳດອກໄມ້.
3. ການສັງເກດ ແລະ ອ່ານເປັນປະໂຫຍດຕາມຮູບພາບ: ແມ່ລ້ຽງແຕ່ງກິນ, ແມ່ລ້ຽງມ້ຽນຖ້ວຍ ແລະ ຄົນອະນາໄມ ກວາດເດີ່ນ; ສັງເກດ ແລະ ອ່ານຕາມຮູບພາບໃນປຶ້ມນິທານເລື່ອງ: ແມ່ລ້ຽງໃຈດີ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຄື່ອງໃຊ້ໃນຫ້ອງຄົວຂອງຈິງ ຫຼື ຈຳລອງ, ຕົ້ນດອກໄມ້ຈຳລອງ, ບົວນ້ອຍ.
2. ມຸມອ່ານ: ຮູບພາບແມ່ລ້ຽງແຕ່ງກິນ, ແມ່ລ້ຽງມ້ຽນຖ້ວຍ, ຄົນກວາດເດີ່ນ; ປຶ້ມນິທານເລື່ອງ ແມ່ລ້ຽງໃຈດີ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນແມ່ລ້ຽງ ແລະ ພະນັກງານອະນາໄມ.
3. ຄວາມຊັດເຈນໃນການອ່ານເປັນປະໂຫຍດຕາມຮູບພາບ ແລະ ອ່ານຕາມຮູບພາບໃນປຶ້ມນິທານ.
4. ການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

## ຈຸດປະສົງສຳລັບ ອາທິດທີ 2

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມສຽງສັນຍານ ຕົບກອງໄດ້ຖືກຕ້ອງ.
3. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງໄດ້ຖືກຕ້ອງ.
4. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມທີ່ນາຍຄູກຳນົດໄດ້ຖືກຕ້ອງ.
5. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
6. ປອດໄພໃນເວລາສະແດງທ່າທາງ.
7. ອົດທົນໃນເວລາສະແດງທ່າທາງ.
8. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການປະຕິບັດລະບຽບ ແລະ ກິດຈະກຳຂອງໂຮງຮຽນໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການລຽນແຖວເຄົາລົບທຸງຊາດ.
3. ບອກລະບຽບໃນການເຄົາລົບທຸງຊາດໄດ້ຖືກຕ້ອງ.
4. ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນບົດເພງ, ຮູບພາບໄດ້ຊັດເຈນ.
5. ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ີ, ຄຳທີ່ມີ ແລະ ບໍ່ມີວັນນະຍຸດ ່, ້ ໄດ້ຊັດເຈນ.
6. ມີຄວາມເບີກບານມ່ວນຊື່ນໃນການຮ້ອງເພງ.
7. ປະຕິບັດຕົວຈິງໃນການອອກແຮງງານ (ເກັບຂີ້ເຫຍື້ອ), ການຫຼິ້ນ, ການອະນາໄມມື ແລະ ການນອນພັກຜ່ອນ.
8. ເລົ່າຄຳຄ່ອງປະກອບທ່າທາງໄດ້ຖືກຕ້ອງ.
9. ມີຄວາມດຸໝັ່ນ.
10. ບອກການປະຕິບັດຕົນໃນການຮຽນ, ການຫຼິ້ນ ແລະ ການພັກຜ່ອນໃນໂຮງຮຽນໄດ້ຖືກຕ້ອງ.
11. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນສະຫຼະ ີ ຕາມຄຳສັບ, ຂີດຂຽນສະຫຼະ ີ , ຕົວສະກົດຕາມຄຳສັບ, ຂີດຂຽນສະຫຼະ ີ ມີວັນນະຍຸດ ່, ້ ຕາມຄຳສັບ, ຂີດຂຽນຕົວເລກ 10 ຕາມຮອຍຈ້ຳ ແລະ ຕາມໃຈ, ແຕ້ມຮູບພາບດອກໄມ້ຕາມຈິນຕະນາການ ແລະ ບອກຂັ້ນຕອນການພັບເຈ້ຍເປັນຮູບຈອກໄດ້ຖືກຕ້ອງ.
2. ຂີດຂຽນສະຫຼະ ີ ຕາມຄຳສັບໄດ້ຈົບງາມ.
3. ຂີດຂຽນສະຫຼະ ີ ມີວັນນະຍຸດ ່, ້ ຕາມຄຳສັບ ແລະ ຂີດຂຽນຕົວເລກ 10 ຕາມຮອຍຈ້ຳ ແລະ ຕາມໃຈໄດ້ຈົບງາມ.
4. ແຕ້ມຮູບພາບດອກໄມ້ຕາມຈິນຕະນາການໄດ້ສະອາດ ແລະ ຈົບງາມ.
5. ພັບເຈ້ຍເປັນຮູບຈອກໄດ້ຄ້າຍຄື.
6. ມີຄວາມອົດທົນໃນການຂີດຂຽນສະຫຼະ ີ ຕາມຄຳສັບ, ຂີດຂຽນສະຫຼະ ີ ບໍ່ມີວັນນະຍຸດ ່, ້ ຕາມຄຳສັບ ແລະ ຂີດຂຽນຕົວເລກ 10 ຕາມຮອຍຈ້ຳ ແລະ ຂຽນຕາມໃຈ ແລະ ມີຄວາມອົດທົນໃນການແຕ້ມຮູບພາບດອກໄມ້ຕາມຈິນຕະນາການ.
7. ມີການຊ່ວຍເຫຼືອໝູ່ເພື່ອນໃນເວລາພັບ.

# ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຈອບໄດ້ຈອບເອົາ, ຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ, ຫຼິ້ນ ແບບຫຼິ້ນມັດຕາທວາຍສຽງຂອງເຄື່ອງດົນຕີ: ສຽງກອງ, ກະແຊ່ກ ແລະ ແສ່ງ, ຫຼິ້ນແບບຫຼິ້ນຣ່າຍນ້ຳໃສ່ແກ້ວ ແລະ ຫຼິ້ນແບບຫຼິ້ນສິ່ງພາກປຸມເປົ້າລອດຫວ່າງຂາ.
2. ຫຼິ້ນແບບຫຼິ້ນຈອບໄດ້ຈອບເອົາ, ຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ, ຫຼິ້ນແບບຫຼິ້ນມັດຕາທວາຍສຽງຂອງເຄື່ອງດົນຕີ: ສຽງກອງ, ກະແຊັກ ແລະ ແສ່ງ, ຫຼິ້ນແບບຫຼິ້ນຣ່າຍນ້ຳໃສ່ແກ້ວ ແລະ ຫຼິ້ນແບບຫຼິ້ນສິ່ງພາກປຸມເປົ້າລອດຫວ່າງຂາໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
4. ປອດໄພໃນເວລາຫຼິ້ນແບບຫຼິ້ນ.
5. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
6. ການຟັງ ແລະ ຈຳແນກສຽງ ໃນເວລາຫຼິ້ນແບບຫຼິ້ນ.
7. ອົດທົນໃນເວລາຫຼິ້ນແບບຫຼິ້ນ.
8. ຄວາມຄ່ອງແຄ້ວ ແລະ ວ່ອງໄວ.

# ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ, ຮູບພາບ ແລະ ອອກສຽງພະຍັນຊະນະ, ອອກສຽງຕົວພະຍັນຊະນະຕົ້ນທີ່ມີຢູ່ໃນເກມ.
2. ຕໍ່ຮູບພາບເດັກນ້ອຍຍິງຮຽຊາຍຢືນລຽນແຖວຕາມລຳດັບຕ່ຳ-ສູງໄດ້ຖືກຕ້ອງ.
3. ຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະ, ພະຍັນຊະນະກັບຕົວພະຍັນຊະນະ, ຮູບພາບກັບຕົວພະຍັນຊະນະ, ຈັບຄູ່ຮູບພາບເຄື່ອງໃຊ້ໃນໂຮງຮຽນທີ່ສົມບູນກັບຮູບພາບທີ່ແຍກສ່ວນໄດ້ຖືກຕ້ອງ.
4. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
5. ອົດທົນໃນເວລາຫຼິ້ນເກມ.
6. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ສຳຜັດຫຼິ້ນເຄື່ອງດົນຕີ, ພິມຄຳສັບ: ບຸ, ຕຸ, ຄຸ, ບູດ ຕູ, ຕູ, ດູ ໃສ່ອ່າງດິນຊາຍ, ຢ່າງມ່ວນຊື່ນ.
3. ຂຽນຕົວເລກອາຣັບແຕ່ 0-9, ແຕ້ມຮູບພາບດອກໄມ້ຕາມຈິນຕະນາການຖືກຕ້ອງ.
4. ອ່ານຕາມຮູບພາບ: ແມ່ລ້ຽງແຕ່ງກິນ, ແມ່ລ້ຽງມ້ຽນຖ້ວຍ, ຄົນອະນາໄມກວາດເດີ່ນ, ອ່ານຕາມຮູບພາບປຶ້ມນິທານແມ່ລ້ຽງໃຈດີ, ອ່ານອອກສຽງຄຳສັບທີ່ມີສະຫຼະຄືກັນ ແລະ ຕ່າງກັນ: ບຸ, ຕຸ, ຄຸ, ບູດ ຕູ, ຕູ, ດູ, ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ◌ີ: ຄີ, ສີ, ຊີ, ຜີ, ຖີ, ພີ, ມີ, ລີ, ອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ: ຊີ, ຊີ່, ຊີ້, ປີ, ປີ່, ປີ້, ກີ, ກີ່, ກີ້, ຈີ, ຈີ່, ຈີ້, ມີ, ມີ່, ມີ້, ພີ, ພີ່, ພີ້ ໄດ້ຊັດເຈນ.
5. ຫຼິ້ນບົດບາດສົມມຸດເປັນນາຍຄູສອນນັກຮຽນຮຽນໜັງສື, ເປັນແມ່ລ້ຽງປຸງແຕ່ງອາຫານ, ເປັນນາຍຄູພາເດັກນ້ອຍກິນເຂົ້າ, ນອນ, ເປັນພະນັກງານອະນາໄມຫົດນ້ຳດອກໄມ້ຢ່າງມ່ວນຊື່ນ.
6. ຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ, ຈັບຄູ່ທີ່ຄືກັນກັບຕົວພະຍັນຊະນະ, ຈັບຄູ່ທີ່ຄືກັນຮູບພາບກັບຕົວພະຍັນຊະນະໄດ້ຖືກຕ້ອງ.
7. ເກັບມ້ຽນເຄື່ອງຫຼິ້ນໄວເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
8. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
9. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ນຸ່ງເຄື່ອງ, ໄປໂຮງຮຽນ ແລະ ນົບນາຍຄູ.

### III. ສື່ການຮຽນ-ການສອນ

1. ທ່າຫັດກາຍະບໍລິຫານຂາ ແລະ ແອວ (ເບິ່ງປຶ້ມຄູ່ມືຄູ).
2. ກະແຊັກ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ແອວ: ທ່າຢືນຂາດຽວຍົກຂາຊ້າຍຂຶ້ນທາງໜ້າພ້ອມທັງເອົາມືຈັບໄວ້ (ຜັດປ່ຽນເບື້ອງ) ແລະ ທ່າແອວໄປທາງຊ້າຍ-ຂວາ.
2. ໃຫ້ເດັກນ້ອຍເຕັ້ນທາງໜ້າທາງຫຼັງຕາມສຽງບາດເຄາະ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງອັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ການປະຕິບັດລະບຽບຂອງໂຮງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການປະຕິບັດກົດລະບຽບຂອງໄດ້ຖືກຕ້ອງ.
2. ຮ້ອງເພງ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດເພງໄດ້ຊັດເຈນ.
3. ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ◌ີ ໄດ້ຊັດເຈນ.
4. ປະຕິບັດຕົນຕາມລະບຽບຂອງໂຮງຮຽນ.

### II. ເນື້ອໃນຕົ້ນຕໍ

1. ການປະຕິບັດລະບຽບຂອງໂຮງຮຽນ:
- ການນຸ່ງເຄື່ອງ: ນຸ່ງເຄື່ອງເປັນລະບຽບຕາມມື້ທີ່ໂຮງຮຽນກຳນົດ.
- ການປະຕິບັດໂມງເວລາ: ມາໂຮງຮຽນ ແລະ ກັບບ້ານໃຫ້ຖືກຕ້ອງຕາມເວລາທີ່ທາງໂຮງຮຽນກຳນົດໄວ້.
2. ການຮ້ອງເພງ ໄປໂຮງຮຽນໃຫ້ທັນເວລາ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດເພງ.
- ຄຳສັບ: ໂຮງຮຽນ, ໂມງ, ອະນາໄມ, ຫ້ອງຮຽນ.
- ປະໂຫຍກ: ພວກເຮົາໄປໂຮງຮຽນໃຫ້ທັນໂມງ, ພວກເຮົາອະນາໄມຫ້ອງຮຽນ.
3. ການອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ◌ີ: ຄີ, ສີ, ຊີ, ຜີ, ຖີ, ພີ, ມີ, ລີ.

### III. ສື່ການຮຽນ-ການສອນ

1. ເຄື່ອງແບບຂອງໂຮງຮຽນ: ໂສ້ງ, ເສື້ອ, ສິ້ນ ຫຼື ກະໂປງ; ບັດຄຳສັບ: ຄີ, ສີ, ຊີ, ຜີ, ຖີ, ພີ, ມີ, ລີ.
2. ບົດເພງ ໄປໂຮງຮຽນໃຫ້ທັນເວລາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດໂມງເວລາໃນການມາໂຮງຮຽນ.
2. ໃຫ້ເດັກນ້ອຍຮ້ອງເພງ, ສົນທະນາ, ເວົ້າຄຳສັບ ແລະ ເວົ້າປະໂຫຍກຕາມເນື້ອໃນບົດເພງ.
3. ໃຫ້ເດັກນ້ອຍສັງເກດເຄື່ອງນຸ່ງ(ເຄື່ອງແບບ)ຂອງໂຮງຮຽນ, ສົນທະນາກ່ຽວກັບການປະຕິບັດລະບຽບໃນການນຸ່ງເຄື່ອງ
4. ໃຫ້ເດັກນ້ອຍອ່ານອອກສຽງຄຳທີ່ປະສົມກັບສະຫຼະ ◌ີ.
5. ໃຫ້ເດັກນ້ອຍເວົ້າຄືນການປະຕິບັດລະບຽບໃນການມາໂຮງຮຽນ ແລະ ການນຸ່ງເຄື່ອງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການນຸ່ງເຄື່ອງ ແລະ ການປະຕິບັດຕາມລະບຽບຂອງໂຮງຮຽນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການປະຕິບັດລະບຽບຂອງໂຮງຮຽນ.
2. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດເພງ.
3. ຄວາມຊັດເຈນໃນການອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ◌ີ.
4. ການປະຕິບັດຕົນຕາມລະບຽບຂອງໂຮງຮຽນ.

# ກິດຈະກຳສີລະປະສ້າງສັນ

## ຫົວຂໍ້: ຂີດຂຽນສະຫຼະ ີ ຕາມຄຳສັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນສະຫຼະ ີ ຕາມຄຳສັບໄດ້ຖືກຕ້ອງ.
2. ຂີດຂຽນສະຫຼະ ີ ຕາມຄຳສັບໄດ້ຈົບງາມ.
3. ມີຄວາມອົດທົນໃນການຂີດຂຽນສະຫຼະ ີ ທີ່ມີຢູ່ໃນຄຳສັບ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນສະຫຼະ ີ ຕາມຄຳສັບ: ກີ, ຄີ, ສີ, ຖີ, ພີ, ປີ, ດີ, ຈີ, ອີ.

### III. ສື່ການຮຽນ-ການສອນ

1. ສໍດຳ ແລະ ຢາງລຶບ.
2. ປຶ້ມບົດເຝິກຫັດພາສາລາວເຫຼັ້ມທີ 1 (ໜ້າ 20) ຫຼື ເຈ້ຍຂີດຂຽນສະຫຼະ ີ ຕາມຄຳສັບ: ກີ, ຄີ, ສີ, ຖີ, ພີ, ປີ, ດີ, ຈີ, ອີ.
2. ເຈ້ຍສະຫຼະ ີ ຕາມຄຳສັບ: ກີ, ຄີ, ສີ, ຖີ, ພີ, ປີ, ດີ, ຈີ, ອີ.
3. ບົດເພງ ໄປໂຮງຮຽນໃຫ້ທັນເວລາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ໄປໂຮງຮຽນໃຫ້ທັນເວລາປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດສະຫຼະ ີ ແລ້ວອ່ານຄຳສັບ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຂີດຂຽນສະຫຼະ ີ ຕາມຄຳສັບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນສະຫຼະ ີ ຕາມຄຳສັບ: ກີ, ຄີ, ສີ, ຖີ, ພີ, ປີ, ດີ, ຈີ, ອີ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຂີດຂຽນສະຫຼະ ີ ຕາມຄຳສັບ: ກີ, ຄີ, ສີ, ຖີ, ພີ, ປີ, ດີ, ຈີ, ອີ.
6. ສຶກສາອົບຮົມເດັກນ້ອຍ ກ່ຽວກັບຄວາມອົດທົນ, ຂີດຂຽນໃຫ້ຈົບງາມ ແລະ ເກັບມ້ຽນຜົນງານໄວ້ໃຫ້ຖືກບ່ອນທີ່ຄູກຳນົດ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນສະຫຼະ ີ ຕາມຄຳສັບ.
2. ຄວາມຈົບງາມໃນການຂີດຂຽນສະຫຼະ ີ ຕາມຄຳສັບ.
3. ຄວາມອົດທົນໃນການ ຂີດຂຽນສະຫຼະ ີ ຕາມຄຳສັບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນຈອບໄດ້ຈອບເອົາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຈອບໄດ້ຈອບເອົາໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນຈອບໄດ້ຈອບເອົາໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນຈອບໄດ້ຈອບເອົາ.

### III. ສື່ການຮຽນ-ການສອນ

1. ສາດປູ ແລະ ເຄື່ອງເຄາະຈັງຫວະ.
2. ບົດເພງ ໄປໂຮງຮຽນໃຫ້ທັນເວລາ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ໄປໂຮງຮຽນໃຫ້ທັນເວລາ ປະກອບທ່າທາງ.
2. ນາຍຄູສະເໜີ ແບບຫຼິ້ນຈອບໄດ້ຈອບເອົາ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກບອກຂັ້ນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນຈອບໄດ້ຈອບເອົາ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນດ້ວຍຄວາມສາມັກຄີ, ການແລ່ນໃຫ້ລະວັງ, ການອະນາໄມຫຼັງຈາກຫຼິ້ນແລ້ວ.
6. ໃຫ້ເດັກນ້ອຍນັ່ງລົງແລ້ວໃຊ້ມືທັງສອງເບື້ອງບີບຕາມຂາຂຶ້ນ-ລົງຊ້າໆ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງການບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນຈອບໄດ້ຈອບເອົາ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນຈອບໄດ້ຈອບເອົາ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບເດັກນ້ອຍຍິງ-ຊາຍຢືນລຽນແຖວຕາມລຳດັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບເດັກນ້ອຍຍິງ-ຊາຍຢືນລຽນແຖວຕາມລຳດັບໄດ້ຖືກຕ້ອງ.
3. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບເດັກນ້ອຍຍິງ-ຊາຍຢືນລຽນແຖວຕາມລຳດັບ: ຕ່ຳ-ສູງ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບເດັກນ້ອຍຍິງ-ຊາຍຢືນລຽນແຖວຕາມລຳດັບ: ຕ່ຳ-ສູງ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບພະນັກງານອະນາໄມປັດກວາດບໍລິເວນເດີ່ນໂຮງຮຽນ.
3. ບົດເພງ ໄປໂຮງຮຽນໃຫ້ທັນເວລາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ໄປໂຮງຮຽນໃຫ້ທັນເວລາ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຕໍ່ຮູບພາບເດັກນ້ອຍຍິງ-ຊາຍຢືນລຽນແຖວຕາມລຳດັບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການເວົ້າຄຳທີ່ສຸພາບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຕໍ່ຮູບພາບເດັກນ້ອຍຍິງ-ຊາຍຢືນລຽນແຖວຕາມລຳດັບ.
3. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເຄື່ອງດົນຕີຢ່າງມ່ວນຊື່ນ, ຂຽນສະຫຼະ ີ ໃສ່ອ່າງດິນຊາຍໄດ້ຖືກຕ້ອງ.
3. ອ່ານອອກສຽງຄຳສັບທີ່ມີສະຫຼະ ີ, ອ່ານຕາມຮູບພາບໃນປຶ້ມນິທານໄດ້ຊັດເຈນ.
4. ເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນທີ່ກຳນົດໄວ້.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ.
2. ການຫຼິ້ນເຄື່ອງດົນຕີ: ຕີກອງ, ສັ່ນກະແຊັກ, ດີດກີຕ້າ ແລະ ຈັບໄມໂຄໂຟນຮ້ອງເພງ, ຂຽນສະຫຼະ ີ ໃສ່ອ່າງດິນຊາຍ.
3. ການສັງເກດ ແລະ ອ່ານອອກສຽງຄຳສັບທີ່ມີສະຫຼະ ີ: ກີ, ຄີ ສີ, ຖີ, ພີ, ດີ, ຈີ, ອີ ແລະ ອ່ານຕາມຮູບພາບໃນປຶ້ມນິທານເລື່ອງ ແມ່ລ້ຽງໃຈດີ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ເຄື່ອງດົນຕີຂອງຈິງ ຫຼື ຈຳລອງ ກອງ, ກະແຊັກ, ກີຕ້າ, ໄມໂຄໂຟນ, ອ່າງດິນຊາຍ.
2. ມຸມອ່ານ: ປຶ້ມບົດເຝິກຫັດພາສາລາວເຫຼັ້ມ 1 ( ໜ້າ 21) ຫຼື ເຈ້ຍຄຳສັບ: ກີ, ຄີ ສີ, ຖີ, ພີ, ດີ, ຈີ, ອີ ແລະ ປຶ້ມນິທານເລື່ອງ ແມ່ລ້ຽງໃຈດີ; ກະດານສຽບ ຫຼື ຕິດ.
3. ບົດເພງ ໄປໂຮງຮຽນໃຫ້ທັນເວລາ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ໄປໂຮງຮຽນໃຫ້ທັນເວລາ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບຊື່ເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນທີ່ກຳນົດໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນເຄື່ອງດົນຕີ ແລະ ຄວາມຖືກຕ້ອງຂຽນສະຫຼະ ີ ໃສ່ອ່າງດິນຊາຍ.
3. ຄວາມຊັດເຈນໃນການອ່ານອອກສຽງຄຳສັບທີ່ມີສະຫຼະ ີ; ອ່ານຕາມຮູບພາບໃນປຶ້ມນິທານ.
4. ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນທີ່ກຳນົດໄວ້.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມສຽງສັນຍານ ຕີບກອງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມສຽງສັນຍານຕີບກອງໄດ້ຖືກຕ້ອງ.
2. ປອດໄພໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສຽງສັນຍານ ຕີບກອງ:

- ຕີບກອງ 1 ບາດແລ່ນໄປທາງໜ້າ.
- ຕີບກອງ 2 ບາດຢືນຢູ່ກັບທີ່.
- ຕີບກອງ 3 ບາດຍ່າງຖອຍຫຼັງ.

### III. ສື່ການຮຽນ-ການສອນ

1. ກອງ.
2. ທ່າຫັດກາຍະບໍລິຫານມື ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານມື ແລະ ຂາ: ກຳມືເຂົ້າ, ແບມືອອກ ແລະ ທ່າໂຢ່ງໂຢະຂາລົງ.
2. ໃຫ້ເດັກນ້ອຍແລ່ນເຕະຂາໄປທາງໜ້າຊ້າໆ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມສຽງສັນຍານ ຕີບກອງ.
4. ໃຫ້ເດັກນ້ອຍປະຕິດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢ່ອງຢໍ້ເອົາແຂນໄຂວ່ກັນວາງເທິງຫົວເຂົ່າ, ເງີຍໜ້າຂຶ້ນຫາຍໃຈເຂົ້າ, ກົ້ມໜ້າລົງຫາຍໃຈອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານ ຕີບກອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສຽງສັນຍານຕີບກອງ.
2. ຄວາມປອດໄພໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ລະບຽບໃນການເຄົາລົບທຸງຊາດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກລະບຽບໃນການເຄົາລົບທຸງຊາດໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການເຄົາລົບທຸງຊາດ.
3. ອ່ານອອກສຽງຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ ່, ້ ໄດ້ຊັດເຈນ.
4. ປະຕິບັດຕົນໃນການເຄົາລົບທຸງຊາດ.

### II. ເນື້ອໃນຕົ້ນຕໍ

1. ທຸງຊາດ ແລະ ລະບຽບໃນການເຄົາລົບທຸງຊາດ:
- ທຸງຊາດ: ເຮັດດ້ວຍຜ້າ, ເປັນຮູບສີ່ແຈ, ສີແດງສອງຂ້າງ, ສີຟ້າຢູ່ກາງ, ສີຂາວວົງເດືອນ, ພື້ນທຸງຊາດມີນ້ອຍ ແລະ ໃຫຍ່.
- ການປະຕິບັດລະບຽບໃນການເຄົາລົບທຸງຊາດ: ຢືນລຽນແຖວຕາມລຳດັບ, ບໍ່ໃສ່ໝວກ ຫຼື ບໍ່ເອົາຜ້າປົກຫົວ, ເມື່ອໄດ້ຍິນສຽງເພງຊາດລາວໃຫ້ຢືນກົງຢູ່ກັບທີ່, ບໍ່ຢອກ ແລະ ບໍ່ລົມກັນ; ເມື່ອ ສຽງເພງຈົບໃຫ້ກົ້ມຫົວລົງເພື່ອຄຳນັບ.

2. ການອ່ານອອກສຽງຄຳທີ່ມີ ແລະ ບໍ່ມີວັນນະຍຸດ ່, ້: ຄື, ຄື່, ຄື້; ຊື, ຊື່, ຊື້; ພື, ພື່, ພື້; ມື, ມື່, ມື້; ລື, ລື່, ລື້.

### III. ສື່ການຮຽນ-ການສອນ

1. ທຸງຊາດ ແລະ ເພງຊາດລາວ.
2. ບັດຄຳສັບ: ຄື, ຄື່, ຄື້; ຊື, ຊື່, ຊື້; ພື, ພື່,ພື້; ມື, ມື່, ມື້; ລື, ລື່, ລື້.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດລະບຽບຂອງໂຮງຮຽນ.
2. ໃຫ້ເດັກນ້ອຍສັງເກດທຸງຊາດ, ສົນທະນາ ແລະ ບອກກ່ຽວກັບລັກສະນະ, ສີຂອງທຸງຊາດ, ການປະຕິບັດລະບຽບໃນການເຄົາລົບທຸງຊາດ.
3. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການເຄົາລົບທຸງຊາດ.
4. ໃຫ້ເດັກນ້ອຍອ່ານອອກສຽງຄຳທີ່ມີ ແລະ ບໍ່ມີວັນນະຍຸດ.
5. ໃຫ້ເດັກນ້ອຍເວົ້າຄືນການປະຕິບັດລະບຽບໃນການເຄົາລົບທຸງຊາດ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການປະຕິບັດຕາມລະບຽບໃນການເຄົາລົບທຸງຊາດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກລະ ບຽບຂອງການເຄົາລົບທຸງຊາດ.
2. ການປະຕິບັດຕົວຈິງໃນການໃນການ ເຄົາລົບທຸງຊາດ.
3. ຄວາມຊັດເຈນໃນການອ່ານອອກສຽງ ຄຳສັບທີ່ມີ ແລະ ບໍ່ມີວັນນະຍຸດ ່, ້.
4. ການປະຕິບັດຕົນໃນການເຄົາລົບທຸງຊາດ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນສະຫຼະ ີ ບໍ່ມີວັນນະຍຸດ ່, ້ ຕາມຄຳສັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນສະຫຼະ ີ ບໍ່ມີວັນນະຍຸດ ່, ້ ຕາມຄຳສັບໄດ້ຖືກຕ້ອງ.
2. ຂີດຂຽນສະຫຼະ ີ ບໍ່ມີວັນນະຍຸດ ່, ້ ຕາມຄຳສັບໄດ້ຈົບງາມ.
3. ມີຄວາມອົດທົນໃນການຂີດຂຽນສະຫຼະ ີ ບໍ່ມີວັນນະຍຸດ ່, ້ ຕາມຄຳສັບ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນສະຫຼະ ີ ບໍ່ມີວັນນະຍຸດ ່, ້ ຕາມຄຳສັບ: ຊີ, ຊີ່, ຊີ້; ກີ, ກີ່, ກີ້; ຄີ, ຄີ່, ຄີ້; ພີ, ພີ່, ພີ້; ມີ. ມີ່, ມີ້.

### III. ສື່ການຮຽນ-ການສອນ

1. ສໍດຳ ແລະ ຢາງລຶບ.
2. ປື້ມບົດເຝິກຫັດພາສາລາວເຫຼັ້ມທີ 1 (ໜ້າ 24) ຫຼື ເຈ້ຍຂີດຂຽນສະຫຼະ ີ ບໍ່ມີວັນນະຍຸດ ່, ້ ຕາມຄຳສັບ: ຊີ, ຊີ່, ຊີ້; ກີ, ກີ່, ກີ້; ຄີ, ຄີ່, ຄີ້; ພີ, ພີ່, ພີ້; ມີ. ມີ່, ມີ້.
2. ເຈ້ຍແບບສະຫຼະ ີ ມີວັນນະຍຸດ ່, ້ ຕາມຄຳສັບທີ່ຂຽນແລ້ວ.
3. ບົດເພງຊາດລາວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຊາດລາວ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດສະຫຼະ ີ ແລ້ວອ່ານຄຳສັບ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຂີດຂຽນສະຫຼະ ີ ມີວັນນະຍຸດຕາມຄຳສັບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນສະຫຼະ ີ ບໍ່ມີວັນນະຍຸດ ່, ້ ຕາມຄຳສັບ: ຊີ, ຊີ່, ຊີ້; ກີ, ກີ່, ກີ້; ຄີ, ຄີ່, ຄີ້; ພີ, ພີ່, ພີ້; ມີ. ມີ່, ມີ້.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຂີດຂຽນສະຫຼະ ີ ບໍ່ມີວັນນະຍຸດ ່, ້ ຕາມຄຳສັບ: ຊີ, ຊີ່, ຊີ້; ກີ, ກີ່, ກີ້; ຄີ, ຄີ່, ຄີ້; ພີ, ພີ່, ພີ້; ມີ. ມີ່, ມີ້.
6. ສຶກສາອົບຮົມເດັກນ້ອຍ ກ່ຽວກັບຄວາມອົດທົນ, ຂີດຂຽນໃຫ້ຈົບງາມ ແລະ ເກັບມ້ຽນຜົນງານໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນສະຫຼະ ີ ມີວັນນະຍຸດ ່, ້ ຕາມຄຳສັບ.
2. ຄວາມຈົບງາມໃນການຂີດຂຽນສະຫຼະ ີ ມີວັນນະຍຸດ ່, ້ ຕາມຄຳສັບ.
3. ຄວາມອົດທົນໃນການຂີດຂຽນສະຫຼະ ີ ມີວັນນະຍຸດ ່, ້ ຕາມຄຳສັບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີໄດ້ຖືກຕ້ອງ.
3. ມີຄວາມປອດໄພໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ.

### III. ສື່ການຮຽນ-ການສອນ

1. ເຈ້ຍສີແດງ, ສີເຫຼືອງ, ສີຟ້າ ແລະ ໝາກຫວິດ.
2. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍແລ່ນຕາມເດີ່ນ ແລະ ຢືນພູນຄໍ່ຕີນ, ຫົວເຂົ່າ, ບິດແອວ.
2. ນາຍຄູສະເໜີ ແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກຳ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການ ຫຼິ້ນດ້ວຍຄວາມສາມັກຄີ, ບໍ່ດຶງແຂນກັນ, ບໍ່ຍູ້ຫຼັງກັນ, ຫຼັງຈາກຫຼິ້ນແລ້ວອະນາໄມຕີນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍຢືນບິດແອວໄປຂ້າງຊ້າຍ-ຂ້າງຂວາຊ້າໆ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນຍ້າຍບ່ອນຕາມສີ.
3. ຄວາມປອດໄພໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ອອກສຽງພະຍັນຊະນະຕົ້ນຕາມຮູບພາບໃນແຜ່ນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ: ກ(ໄກ່), ຈ(ຈອກ), ດ(ເດັກ, ຕ(ຕາ), ບ(ແບ້), ປ(ປາ), ຢ(ຢາ), ອ(ໂອ).

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ: ກ(ໄກ່), ຈ(ຈອກ), ດ(ເດັກ, ຕ(ຕາ), ບ(ແບ້), ປ(ປາ), ຢ(ຢາ), ອ(ໂອ) (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບເດັກນ້ອຍຍິງ-ຊາຍຢືນລຽນແຖວຕາມລຳດັບ: ຕ່ຳ-ສູງ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບລະບຽບໃນການເຄົາລົບທຸງຊາດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຕົວພະຍັນຊະນ ແລະ ຮູບພາບໃນແຜ່ນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຕົວພະຍັນຊະນະ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບກັບການອອກສຽງພະຍັນຊະນະຕົ້ນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການອອກສຽງຕົວພະຍັນຊນະນະຕົ້ນຕາມຮູບພາບໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ິ ແລະ ຕົວສະກົດ: ນ, ບ, ດ ໄດ້ຊັດເຈນ.
3. ຂີດຂຽນຄຳສັບທີ່ມີສະຫຼະ ິ ແລະ ຕົວສະກົດ: ນ, ບ, ດ ໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມອ່ານ ແລະ ມຸມສິລະສ້າງສັນ.
2. ການອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ິ ແລະ ຕົວສະກົດ: ນ, ບ, ດ: ຈິນ, ຝົນ, ຢືນ, ມີດ, ຄືບ,
3. ຂີດຂຽນສະຫຼະ ິ ຕາມຄຳສັບ: ກີ, ສີ, ມີ, ບີ, ພີ, ປີ.

### III. ສື່ການຮຽນ-ການສອນ

1. ມຸມອ່ານ: ບັດຄຳສັບທີ່ມີສະຫຼະ ິ ແລະ ຕົວສະກົດ: ນ, ບ, ດ: ຈິນ, ຝົນ, ຢືນ, ມີດ, ຄືບ.
2. ມຸມສິລະປະສ້າງສັນ: ສໍດຳ, ຢາງລຶບ, ປຶ້ມບົດເຝິກຫັດພາສາລາວເຫຼັ້ມ 1 (ໜ້າ 20, 24) ຫຼື ເຈ້ຍແບບຂຽນສະຫຼະ ິ ຕາມຄຳສັບ: ກີ, ສີ, ມີ, ບີ, ພີ, ປີ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຊັດເຈນໃນການອອກສຽງຄຳສັບທີ່ປະສົມສະຫຼະ ິແລະ ຕົວສະກົດ: ນ, ບ, ດ.
3. ຄວາມຖືກຕ້ອງໃນການຂີດຂຽນສະຫຼະ ິ ຕາມຄຳສັບ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ໄປໂຮງຮຽນ, ຮ້ອງເພງ, ຟ້ອນລຳວົງ, ທົດນ້ຳດອກໄມ້.

### III. ສື່ການຮຽນ-ການສອນ

1. ຢາງລົດ.
2. ທ່າຫັດກາຍະບໍລິຫານຄໍ່ມື ແລະ ແອວ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຄໍ່ມື ແລະ ແອວ: ສັ່ນຄໍ່ມື ແລະ ທ່າໝູນແອວໄປອ້ອມຮອບ.
2. ໃຫ້ເດັກນ້ອຍໂດດລົງຢາງລົດ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງອັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຟັງຄຳສັ່ງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ກິດຈະກຳຂອງໂຮງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກກິດຈະກຳຂອງໂຮງຮຽນໄດ້ຖືກຕ້ອງ.
2. ເລົ່າຄຳຄ່ອງປະກອບທ່າທາງໄດ້ຖືກຕ້ອງ.
3. ຫ້າວຫັນໃນການອອກແຮງງານ.

### II. ເນື້ອໃນຕົ້ນຕໍ

1. ກິດຈະກຳໃນໂຮງຮຽນປະກອບມີ: ການໄປທັດສະນະສຶກສາ, ຮ້ອງເພງ, ຟ້ອນ, ຫຼິ້ນກິລາ, ປູກ ແລະ ຫົດນ້ຳຕົ້ນດອກໄມ້; ອອກແຮງງານ.
2. ການເລົ່າຄຳຄ່ອງ ສວນດອກໄມ້ ປະກອບທ່າທາງ.
3. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ:

- ຄຳສັບ: ຮ້ອງເພງ, ຟ້ອນ, ຫຼິ້ນກິລາ, ປູກຕົ້ນໄມ້, ຫົດນ້ຳ, ດອກໄມ້.
- ປະໂຫຍກ: ເດັກນ້ອຍຟ້ອນ, ເດັກນ້ອຍຮ້ອງເພງ, ເດັກນ້ອຍຫຼິ້ນກິລາ, ເດັກນ້ອຍເກັບຂີ້ເຫຍື້ອ, ເດັກນ້ອຍໄປທັດສະນະສຶກສາ.

### III. ສື່ການຮຽນ-ການສອນ

1. ກະຕ່າຂີ້ເຫຍື້ອ; ບົດຄຳຄ່ອງ ສວນດອກໄມ້ (ເບິ່ງປຶ້ມຄູ່ມືຄູ).
2. ຮູບພາບ: ເດັກນ້ອຍຟ້ອນ, ເດັກນ້ອຍຮ້ອງເພງ, ເດັກນ້ອຍຫຼິ້ນກິລາ, ເດັກນ້ອຍເກັບຂີ້ເຫຍື້ອ, ເດັກນ້ອຍໄປທັດສະນະສຶກສາ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບກິດຈະກຳໃນໂຮງຮຽນ.
2. ໃຫ້ເດັກນ້ອຍເລົ່າຄຳຄ່ອງປະກອບທ່າທາງ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການເກັບຂີ້ເຫຍື້ອໃນເດີ່ນໂຮງຮຽນ.
5. ໃຫ້ເດັກນ້ອຍເວົ້າຄືນກິດຈະກຳໃນໂຮງຮຽນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ຄວາມດຸໝັ່ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກກິດຈະກຳຂອງໂຮງຮຽນ.
2. ການປະຕິບັດຕົວຈິງໃນການອອກແຮງງານ.
3. ຄວາມຖືກຕ້ອງໃນການການເລົ່າຄຳຄ່ອງປະກອບທ່າທາງ.
4. ຄວາມຫ້າວຫັນໃນການອອກແຮງງານ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມຮູບພາບດອກໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມຮູບພາບດອກໄມ້ຕາມຈິນຕະນາການໄດ້ຖືກຕ້ອງ.
2. ແຕ້ມຮູບພາບດອກໄມ້ຕາມຈິນຕະນາການໄດ້ສະອາດ ແລະ ຈົບງາມ.
3. ມີຄວາມອົດທົນໃນການແຕ້ມຮູບພາບດອກໄມ້ຕາມຈິນຕະນາການ.

### II. ເນື້ອໃນຕົ້ນຕໍ

ການແຕ້ມຮູບພາບດອກໄມ້ຕາມຈິນຕະນາການ.

### III. ສື່ການຮຽນ-ການສອນ

1. ເຈ້ຍຂາວ, ສໍດຳ, ສໍສີໄມ້.
2. ເຈ້ຍແບບຮູບດອກໄມ້ທີ່ແຕ້ມແລ້ວ.
3. ບົດຄຳຄ່ອງ ສວນດອກໄມ້.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ສວນດອກໄມ້ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບດອກໄມ້, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຮູບພາບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການແຕ້ມຮູບພາບດອກໄມ້ຕາມຈິນຕະນາການ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນການແຕ້ມຮູບພາບດອກໄມ້ຕາມຈິນຕະນາການ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສະອາດຈົບງາມ, ຄວາມສາມັກຄີ ແລະ ເກັບຜົນງານໄປໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມຮູບພາບດອກໄມ້ຕາມຈິນຕະນາການ.
2. ຄວາມສະອາດຈົບງາມໃນການແຕ້ມຮູບພາບດອກໄມ້ຕາມຈິນຕະນາການ.
3. ຄວາມອົດທົນໃນການແຕ້ມຮູບພາບດອກໄມ້ຕາມຈິນຕະນາການ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນມັດຕາທວຍ ສຽງຂອງເຄື່ອງດົນຕີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນມັດຕາທວາຍສຽງຂອງເຄື່ອງດົນຕີໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນມັດຕາທວາຍສຽງ ຂອງເຄື່ອງດົນຕີໄດ້ຖືກຕ້ອງ.
3. ຟັງ ແລະ ຈຳແນກສຽງໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນມັດຕາທວຍສຽງຂອງເຄື່ອງດົນຕີ: ສຽງກອງ, ກະແຊັກ ແລະ ແສ່ງ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ສວນດອກໄມ້.
2. ແສ່ງ, ຜ້າ 1 ຜືນ, ກອງ ແລະ ກະແຊັກ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ສວນດອກໄມ້ ປະກອບທ່າທາງ.
2. ນາຍຄູສະເໜີ ແບບຫຼິ້ນມັດຕາທວາຍສຽງຂອງເຄື່ອງດົນຕີ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກ ນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນມັດຕາທວາຍສຽງຂອງເຄື່ອງດົນຕີ, ນາຍຄູ ຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນດ້ວຍຄວາມສາມັກຄີ, ມີສະມາທິໃນການຟັງ, ການເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍນັ່ງລົງເອົາມືທັງສອງວາງໃສ່ເທິງຕັກແລ້ວຫາຍໃຈອອກ-ເຂົ້າຊ້າໆ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນມັດຕາທວາຍສຽງຂອງເຄື່ອງດົນຕີ.
3. ການຟັງ ແລະ ຈຳແນກສຽງໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ອອກສຽງຕົວພະຍັນຊະນະໃນແຜ່ນໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຕົວພະຍັນຊະນະໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຕົວພະຍັນຊະນະ: ກ, ຈ, ດ, ຕ, ບ, ປ, ຢ, ອ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ: ກ, ຈ, ດ, ຕ, ບ, ປ, ຢ, ອ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມັບຄູ່ທີ່ຄືກັນຮູບພາບກັບຮູບພາບຕາມການອອກສຽງພະຍັນຊະນະຕົ້ນ.
3. ບົດຄຳຄ່ອງ ສວນດອກໄມ້.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ສວນດອກໄມ້ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຕົວພະຍັນຊະນະໃນແຜ່ນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຕົວພະຍັນຊະນະ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການອອກສຽງຕົວພະຍັນຊະນະໃນແຜ່ນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຕົວພະຍັນຊະນະ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຈັບຄູ່ທີ່ຄືກັນຕົວພະຍັນຊະນະ ແລະ ຈັບຄູ່ຮູບພາບກັບຕາມການອອກສຽງພະຍັນຊະນະຕົ້ນໄດ້ຖືກຕ້ອງ.
3. ຫຼິ້ນບົດບາດສົມມຸດເປັນນາຍຄູ ແລະ ນັກຮຽນຢ່າງມ່ວນຊື່ນ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ.
2. ການຈັບຄູ່ທີ່ຄືກັນຮູບພາບກັບຕາມການອອກສຽງພະຍັນຊະນະຕົ້ນ: ກ(ໄກ່), ຈ(ຈອກ), ດ(ເດັກ, ຕ(ຕາ), ບ(ແບ້), ປ(ປາ), ຢ(ຢາ), ອ(ໂອ) ແລະ ຈັບຄູ່ທີ່ຄືກັນຕົວພະຍັນຊະນະ: ກ ຈ ດ ຕ ບ ປ ຢ ອ.
2. ການຫຼິ້ນບົດບາດສົມມຸດເປັນນາຍຄູພາເດັກນ້ອຍກິນເຂົ້າ ແລະ ນອນ; ເປັນນາຍຄູສອນນັກຮຽນ.

### III. ສື່ການຮຽນ-ການສອນ

1. ມຸມເກມການສຶກສາ: ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບກັບຕາມການອອກສຽງພະຍັນຊະນະຕົ້ນ: ກ(ໄກ່), ຈ(ຈອກ), ດ(ເດັກ, ຕ(ຕາ), ບ(ແບ້), ປ(ປາ), ຢ(ຢາ), ອ(ໂອ) ແລະ ແຜ່ນເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ: ກ ຈ ດ ຕ ບ ປ ຢ ອ.
2. ມຸມບົດບາດສົມມຸດ: ໂຕະ, ຕັ່ງ, ກະດານ, ເຈ້ຍ, ເຄື່ອງໃຊ້ໃນຫ້ອງຄົວຂອງຈິງ ຫຼື ຈຳລອງ: ຖ້ວຍ, ບ່ວງ, ເຄື່ອງນອນ.
3. ບົດຄຳຄ່ອງ ສວນດອກໄມ້; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳ ການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ສວນດອກໄມ້ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບຊື່ເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຫຼິ້ນເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ ແລະ ຈັບຄູ່ຮູບພາບກັບຕາມການອອກສຽງພະຍັນຊະນະຕົ້ນ.
3. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນນາຍຄູ ແລະ ນັກຮຽນ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດລຳລ່ອງ ສວນດອກໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ ສວນດອກໄມ້.

### III. ສື່ການຮຽນ-ການສອນ

1. ບົດລຳລ່ອງ ສວນດອກໄມ້.
2. ທ່າຫັດກາຍະບໍລິຫານຂາ ແລະ ທ່າລຳຕໍ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ທ່າລຳ: ທ່າໝູນລຳຕໍ ແລະ ທ່າຢືນຂາດຽວຍົກຂາຊ້າຍຂຶ້ນທາງໜ້າພ້ອມທັງເອົາມືຈັບໄວ້ (ຜັດປ່ຽນເບື້ອງ).
2. ໃຫ້ເດັກນ້ອຍຍ່າງເຢ່ງເຢ້ຕາມເສັ້ນຊື່.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາຊື່ໄປທາງໜ້າ, ເອົາມືທັງສອງຄ່ຳພື້ນທາງຫຼັງ, ເງີຍໜ້າຫາຍໃຈເຂົ້າອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ການປະຕິບັດຕົນໃນໂຮງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການປະຕິບັດຕົນໃນໂຮງຮຽນໄດ້ຖືກຕ້ອງ.
2. ມີຄວາມເບີກບານມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.
3. ເວົ້າປະໂຫຍກຕາມຮູບພາບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ການປະຕິບັດຕົນໃນໂຮງຮຽນ ແລະ ການປະຕິບັດຕົນໃນການຮຽນ:

- ການປະຕິບັດຕົນໃນໂຮງຮຽນປະກອບມີ: ການຮຽນ, ການຫຼິ້ນ, ການພັກຜ່ອນ.
- ການປະຕິບັດຕົນໃນການຮຽນ: ບໍ່ບົ່ນແຊວ, ຕັ້ງໃຈຟັງຄູເວົ້າ, ບໍ່ຢອກໝູ່ໃນເວລາຮຽນ, ແບ່ງປັນເຄື່ອງໃຊ້ ແລະ ຊ່ວຍເຫຼືອໝູ່ໃນເວລາເຮັດກິດຈະກຳຕ່າງໆ ແລະ ຍອມຮັບຟັງຄຳຄິດຄຳເຫັນຂອງໝູ່ເພື່ອນ.

2. ການຟັງນິທານເລື່ອງ ສອງສ່ຽວທ້າວຕຸ້ຍ ແລະ ທ້າວຈ່ອຍ.
3. ການເວົ້າປະໂຫຍກຕາມຮູບພາບ: ເດັກນ້ອຍຕັ້ງໃຈຟັງຄູ, ເດັກນ້ອຍແບ່ງປັນເຄື່ອງໃຊ້ໃຫ້ໝູ່, ເດັກນ້ອຍຊ່ວຍເຫຼືອກັນຫົດດອກໄມ້.

### III. ສື່ການຮຽນ-ການສອນ

1. ຮູບພາບ: ເດັກນ້ອຍນັ່ງຮຽນ, ເດັກນ້ອຍແບ່ງເຄື່ອງໃຊ້ໃຫ້ໝູ່, ເດັກນ້ອຍຊ່ວຍເຫຼືອກັນຫົດດອກໄມ້.
2. ປຶດນິທານ ເລື່ອງສອງສ່ຽວທ້າວຕຸ້ຍ ແລະ ທ້າວຈ່ອຍ ເບິ່ງໃນປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດຕົນໃນໂຮງຮຽນທີ່ເດັກນ້ອຍເຄີຍປະຕິບັດ.
2. ນາຍຄູເລົ່ານິທານ, ສົນທະນາກ່ຽວກັບເນື້ອໃນຂອງປຶດນິທານ, ການປະຕິບັດຕົນໃນໂຮງຮຽນ ແລະ ໃນເວລາຮຽນ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ເວົ້າເປັນປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການປະຕິບັດຕົນໃນເວລາຮຽນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບມາລະຍາດໃນການຟັງນິທານ ແລະ ການປະຕິບັດຕົນໃນໂຮງຮຽນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການປະຕິບັດຕົນໃນໂຮງຮຽນ.
2. ຄວາມເບີກບານມ່ວນຊື່ນ ແລະ ມາລະຍາດໃນການຟັງນິທານ.
3. ຄວາມຊັດເຈນໃນການເວົ້າປະໂຫຍກຕາມຮູບພາບ.

# ກິດຈະກໍາສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກອາຣັບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຕົວບອກຂັ້ນຕອນການຂີດຂຽນຕົວເລກອາຣັບແຕ່ 0-9 ຕາມຮອຍຈໍ້າໄດ້ຖືກຕ້ອງ.
2. ຂີດຂຽນຕົວເລກ0-9 ຕາມຮອຍຈໍ້າໄດ້ສະອາດຈົບງາມ.
3. ມີຄວາມອົດທົນໃນການຂີດຂຽນຕົວເລກອາຣັບແຕ່ 0-9.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕົວເລກອາຣັບແຕ່ 0-9 ຕາມຮອຍຈໍ້າ.

### III. ສື່ການຮຽນ-ການສອນ

1. ປື້ມບົດເຝິກຫັດລະບົດສາດເຫຼັ້ມທີ 1 ຫຼື ເຈ້ຍຕົວເລກ 0-9 ທີ່ມີຮອຍຈໍ້າ.
2. ເຈ້ຍແບບຕົວເລກອາຣັບ 0-9 ທີ່ຂຽນແລ້ວ ແລະ ສໍດໍາ.

### IV. ກິດຈະກໍາການຮຽນ -ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງແກວ່ງຝາມືໄປມາຊ້າຍ, ຂວາ, ດີດນີ້ວມືເທື່ອລະນີ້ວ.
2. ໃຫ້ເດັກນ້ອຍສັງເກດຕົວເລກ 0-9 ແລ້ວອ່ານ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຂີດຂຽນຕົວເລກ.
3. ນາຍຄູແນະນໍາ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນຕົວເລກອາຣັບແຕ່ 0-9 ຕາມຮອຍຈໍ້າ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນໍາເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕົນການຂີດຂຽນຕົວເລກອາຣັບແຕ່ 0-9 ຕາມຮອຍຈໍ້າ.
6. ສຶກສາອົບຮົມເດັກນ້ອຍ ກ່ຽວກັບຄວາມອົດທົນ, ຂີດຂຽນໃຫ້ຈົບງາມ ແລະ ເກັບມ້ຽນຜົນງານໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຂີດຂຽນຕົວເລກ 0-9 ຕາມຮອຍຈໍ້າ.
2. ຄວາມສະອາດຈົບງາມໃນການຂີດຂຽນຕົວເລກ 0-9 ຕາມຮອຍຈໍ້າ.
3. ຄວາມອົດທົນໃນການຂີດຂຽນຕົວເລກແຕ່ 0-9 ຕາມຮອຍຈໍ້າ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນແບບຫຼິ້ນຮ່າຍນ້ຳໃສ່ຕຸກຢາງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຮ່າຍນ້ຳໃສ່ຕຸກຢາງໄດ້ຖືກຕ້ອງ.
2. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
3. ຄວາມຄ່ອງແຄ້ວ ແລະ ວ່ອງໄວໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ຮ່າຍນ້ຳໃສ່ຕຸກຢາງ.

### III. ສື່ການຮຽນ-ການສອນ

1. ຄຸນ້ຳ, ແກ້ວ, ຕຸກຢາງ, ໝາກຫວິດ ແລະ ກະແຊັກ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍສັ່ນຂໍ້ມື, ໝູນເອິ່ງ ແລະ ຢ່ຳເທົ້າກັບທີ່.
2. ນາຍຄູສະເໜີ ແບບຫຼິ້ນ ຮ່າຍນ້ຳໃສ່ຕຸກຢາງ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນ ແບບຫຼິ້ນ ຮ່າຍນ້ຳໃສ່ຕຸກຢາງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນດ້ວຍຄວາມສາມັກຄີ, ການຫຼິ້ນຕາມລຳດັບ ແລະ ການເກັບມ້ຽນອຸປະກອນ
6. ໃຫ້ເດັກນ້ອຍເຮັດທ່າງແມງກະເບື້ອບິນຊ້າໆ, ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາ ການຫຼິ້ນ ຮ່າຍນ້ຳໃສ່ຕຸກຢາງ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນຮ່າຍນ້ຳໃສ່ຕຸກຢາງ.
3. ຄວາມຄ່ອງແຄ້ວ ແລະ ວ່ອງໄວ ໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບກັບຕົວພະຍັນຊະນະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ອອກສຽງຕົວພະຍັນຊະນະຕາມຮູບພາບໃນແຜ່ນເກມໄດ້ຖືກຕ້ອງ.
2. ຈັບຄູ່ຮູບພາບກັບຕົວພະຍັນຊະນະໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ຮູບພາບກັບຕົວພະຍັນຊະນະ: ຮູບພາບໄກ່, ຈອກ, ເດັກ, ຕາ, ແບ້, ປາ, ຢາ, ໂອ; ຕົວພະຍັນະຊະນະ: ກ, ຈ, ດ, ຕ, ບ, ປ, ຢ, ອ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມ ຮູບພາບໄກ່, ຈອກ, ເດັກ, ຕາ, ແບ້, ປາ, ຢາ, ໂອ; ແຜ່ນເກມຕົວພະຍັນະຊະນະ: ກ, ຈ, ດ, ຕ, ບ, ປ, ຢ, ອ. (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະ: ກ, ຈ, ດ, ຕ, ບ, ປ, ຢ, ອ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຮູບເລຂາຄະນິດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຕົວພະຍັນຊະນະ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຕົວພະຍັນຊະນະ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ຮູບພາບຕົວພະຍັນ ຊະນະ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາ ຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການອອກສຽງຕົວພະຍັນຊະນະຕາມຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບກັບຕົວພະຍັນຊະນະ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຂຽນດ້ວຍຕົນເອງ, ແຕ້ມຮູບພາບດອກໄມ້ຕາມຈິນຕະນາການໄດ້ຖືກຕ້ອງ.
3. ຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບກັບຕົວພະຍັນຊະນະ ແລະ ເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະກັບຕົວພະຍັນຊະນະໄດ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
2. ການຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຂຽນດ້ວຍຕົນເອງ, ແຕ້ມຮູບພາບດອກໄມ້ຕາມຈິນຕະນາການ.
3. ການຈັບຄູ່ທີ່ຄືກັນຮູບພາບກັບຕົວພະຍັນຊະນະ: ຮູບພາບໄກ່, ຈອກ, ເດັກ, ຕາ, ແບ້, ປາ, ຢາ, ໂອ; ກັບພະຍັນະຊະນະ: ກ, ຈ, ດ, ຕ, ບ, ປ, ຢ, ອ ແລະ ຈັບຄູ່ທີ່ຄືກັນຕົວພະຍັນຊະນະກັບຕົວພະຍັນຊະນະ: ກ, ຈ, ດ, ຕ, ບ, ປ, ຢ, ອ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ເຈ້ຍຂາວ, ສໍສີໄມ້ ຫຼື ສີທຽນ, ປື້ມບົດເຝິກຫັດຄະນິດສາດ (ໜ້າ 5) ຫຼື ເຈ້ຍຕົວເລກ 6-7 ຕາມຮອຍຈ້ຳ, ສໍດຳ, ຢາງລຶບ.
2. ມຸມເກມການສຶກສາ: ເກມຈັບຄູ່ທີ່ຄືກັນຮູບພາບກັບຕົວພະຍັນຊະນະ: ຮູບພາບໄກ່, ຈອກ, ເດັກ, ຕາ, ແບ້, ປາ, ຢາ, ໂອ; ຕົວພະຍັນະຊະນະ: ກ, ຈ, ດ, ຕ, ບ, ປ, ຢ, ອ; ແຜ່ນເກມຈັບຄູ່ທີ່ຄືກັນກັບຕົວພະຍັນຊະນະ: ກ, ຈ, ດ, ຕ, ບ, ປ, ຢ, ອ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນຂຽນຕົວເລກ 6-7 ຕາມຮອຍຈ້ຳ ແລະ ຂຽນດ້ວຍຕົນເອງ, ແຕ້ມຮູບພາບດອກໄມ້ຕາມຈິນຕະນາການ.
3. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບກັບຕົວພະຍັນຊະນະ ແລະ ເກມຈັບຄູ່ທີ່ຄືກັນຕົວພະຍັນຊະນະກັບຕົວພະຍັນຊະນະ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມທີ່ນາຍຄູກຳນົດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມທີ່ນາຍຄູກຳນົດໄດ້ຖືກຕ້ອງ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມທີ່ນາຍຄູກຳນົດ: ລ້າງມື, ລ້າງຕີນ, ນອນພັກຜ່ອນ.

### III. ສື່ການຮຽນ-ການສອນ

ທ່າຫັດກາຍະບໍລິຫານມື ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານມື ແລະ ຕີນ: ທ່າຫັກນິ້ວມືລົງ, ຂຶ້ນເທື່ອລະນິ້ວ ແລະ ທ່າຢໍ່າເທົ້າຂຶ້ນ ແລະ ລົງ.
2. ໃຫ້ເດັກນ້ອຍຍ່າງຕາມທາງແຄບ 10 ຊມ, ຍາວ 3 ແມັດ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມທີ່ນາຍຄູກຳນົດ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນເຮັດທ່າທາງຈັບດອກໄມ້ມາດົມ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມທີ່ນາຍຄູກຳນົດ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງເປັນຜູ້ນຳ-ຜູ້ປະຕິບັດຕາມ ຕາມທີ່ນາຍຄູກຳນົດ.
2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ການປະຕິບັດຕົນໃນການຫຼິ້ນ ແລະ ການພັກຜ່ອນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການປະຕິບັດຕົນໃນການຫຼິ້ນ ແລະ ພັກຜ່ອນ.
2. ປະຕິບັດຕົວຈິງໃນການຫຼິ້ນ, ການອະນາໄມມື ແລະ ການນອນພັກຜ່ອນ.
3. ເລົ່າຄຳຄ່ອງ ປະກອບທ່າທາງໄດ້ຖືກຕ້ອງ.
4. ເວົ້າປະໂຫຍກຕາມຮູບພາບໄດ້ຊັດເຈນ.
5. ປະຕິບັດຕົນໃນການຫຼິ້ນ ແລະ ພັກຜ່ອນ.

### II. ເນື້ອໃນຕົ້ນຕໍ

1. ການປະຕິບັດຕົນໃນການຫຼິ້ນ ແລະ ພັກຜ່ອນ
- ການປະຕິບັດຕົນໃນການຫຼິ້ນ: ແບ່ງປັນເຄື່ອງຫຼິ້ນ, ຫຼິ້ນຢ່າງລະມັດລະວັງ, ຫຼິ້ນດ້ວຍຄວາມມ່ວນຊື່ນ ແລະ ປອດໄພ; ຊ່ວຍກັນເກັບມ້ຽນເຄື່ອງຫຼິ້ນ; ອະນາໄມຕີນ ແລະ ມືໃຫ້ສະອາດ.
- ການປະຕິບັດຕົນໃນການພັກຜ່ອນ: ໃນເວລາພັກຜ່ອນບໍ່ລົມ ແລະ ບໍ່ຢອກກັນ; ນອນພັກ ຜ່ອນ ແລະ ຕື່ນຖືກເວລາ.
2. ການເລົ່າຄຳຄ່ອງ  ຫຼິ້ນ ແລະ ນອນຖືກເວລາ ປະກອບທ່າທາງ.
3. ການເວົ້າປະໂຫຍກຕາມຮູບພາບ: ພວກເຂົາຫຼິ້ນໃຫ້ປອດໄພ, ເດັກນ້ອຍແບ່ງປັນເຄື່ອງຫຼິ້ນໃຫ້ໝູ່, ເດັກນ້ອຍອະນາໄມມື ແລະ ຕີນ; ເດັກນ້ອຍນອນຖືກເວລາ, ເດັກນ້ອຍຊ່ວຍກັນເກັບມ້ຽນເຄື່ອງຫຼິ້ນ, ເດັກນ້ອຍຫຼິ້ນດ້ວຍຄວາມມ່ວນຊື່ນ.

### III. ສື່ການຮຽນ-ການສອນ

1. ເຄື່ອງຫຼິ້ນ: ລົດນ້ອຍ, ຕຸກກະຕາ, ບັ້ອກ, ໂອ, ຄຸນ້ຳ.
2. ບົດຄຳຄ່ອງ ຫຼິ້ນ ແລະ ນອນຖືກເວລາ ເບິ່ງປຶ້ມຄູ່ມືຄູ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງປະກອບທ່າທາງ, ສົນທະນາກ່ຽວກັບເນື້ອໃນບົດຄຳຄ່ອງ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບການປະຕິບັດຕົນໃນການຫຼິ້ນ ແລະ ການພັກຜ່ອນ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ເວົ້າປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການຫຼິ້ນເຄື່ອງຫຼິ້ນ, ການເກັບມ້ຽນ ແລະ ການອະນາໄມ.
5. ໃຫ້ເດັກນ້ອຍເວົ້າຄືນການປະຕິບັດຕົນໃນການຫຼິ້ນ ແລະ ການພັກຜ່ອນ
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ການປະຕິບັດຕົນໃນການຫຼິ້ນ ແລະ ການພັກຜ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການປະຕິບັດຕົນໃນການຫຼິ້ນ ແລະ ພັກຜ່ອນ.
2. ການປະຕິບັດຕົວຈິງໃນການຫຼິ້ນ, ການອະນາໄມ.
3. ຄວາມຖືກຕ້ອງໃນການເລົ່າຄຳຄ່ອງປະກອບທ່າທາງ.
4. ຄວາມຊັດເຈນໃນການເວົ້າປະໂຫຍກຕາມຮູບພາບ.
5. ການປະຕົນໃນການຫຼິ້ນ ແລະ ພັກຜ່ອນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພັບເຈ້ຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການພັບເຈ້ຍເປັນຮູບຈອກໄດ້ຖືກຕ້ອງ.
2. ພັບເຈ້ຍເປັນຮູບຈອກໄດ້ຄ້າຍຄື.
3. ມີການຊ່ວຍເຫຼືອໝູ່ເພື່ອນໃນເວລາພັບ.

### II. ເນື້ອໃນຕົ້ນຕໍ

ການພັບເຈ້ຍເປັນຮູບພາບຈອກ.

### III. ສື່ການຮຽນ-ການສອນ

1. ກຳນົດຂະໜາດແຜ່ນເຈ້ຍເປັນຮູບຈະຕຸລັດ.
2. ແບບຮູບຈອກທີ່ພັບແລ້ວ.
3. ບົດຄຳຄ່ອງ ຫຼິ້ນ ແລະ ນອນຖືກເວລາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫຼິ້ນ ແລະ ນອນຖືກເວລາ ປະກອບທ່າທາງ .
2. ໃຫ້ເດັກນ້ອຍສັງເກດຮູບຈອກທີ່ພັບແລ້ວ; ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການພັບເຈ້ຍ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການພັບເຈ້ຍເປັນຮູບຈອກ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການພັບເຈ້ຍເປັນຮູບຈອກ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີຊ່ວຍເຫຼືອກັນ, ຄວາມອົດທົນ ແລະ ເກັບມ້ຽນຜົນງານໄປໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການພັບເຈ້ຍເປັນຮູບຈອກ.
2. ຄວາມຄ້າຍຄືໃນການພັບເຈ້ຍເປັນຮູບຈອກ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາພັບເຈ້ຍ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ແຂ່ງຂັນສົ່ງໝາກປຸມເປົ້າລອດຫວ່າງຂາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນ ສົ່ງໝາກປຸມເປົ້າລອດຫວ່າງຂາໄດ້ຖືກຕ້ອງ.
2. ເຝິກກ້າມຊີ້ນຂາໃຫ້ມີຄວາມແຂງແຮງ.
3. ຄວາມປອດໄພໃນການຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ສົ່ງໝາກປຸມເປົ້າລອດຫວ່າງຂາ.

### III. ສື່ການຮຽນ-ການສອນ.

1. ໝາກປຸມເປົ້າ, ໝາກວິດ ແລະ ຢາງບ້ວງ.
2. ບົດຄຳຄ່ອງ ຫຼິ້ນ ແລະ ບອນຖືກເວລາ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫຼິ້ນ ແລະ ບອນຖືກເວລາ ປະກອບທ່າທາງ.
2. ນາຍຄູສະເໜີ ແບບຫຼິ້ນສົ່ງໝາກປຸມເປົ້າລອດຫວ່າງຂາ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນສົ່ງໝາກປຸມເປົ້າລອດຫວ່າງຂາ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍ ກ່ຽວກັບການຫຼິ້ນດ້ວຍຄວາມສາມັກຄີ, ມີຄວາມລະມັດລະວັງ ແລະ ເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍນັ່ງລົງຢຽດຂາອອກຊື່ແລ້ວຫົດຢືດຂາເຂົ້າ-ອອກຊ້າໆ ຫຼັງຈາກນັ້ນໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນສົ່ງໝາກປຸມເປົ້າລອດຫວ່າງຂາ.
2. ຄວາມແຂງແຮງຂອງກ້າມຊີ້ນຂາໃນເວລາຫຼິ້ນ.
3. ຄວາມປອດໄພໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບເຄື່ອງໃນໂຮງຮຽນທີ່ສົມບູນກັບຮູບພາບທີ່ແຍກສ່ວນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ຮູບພາບເຄື່ອງໃນໂຮງຮຽນທີ່ສົມບູນກັບຮູບພາບທີ່ແຍກສ່ວນໄດ້ຖືກຕ້ອງ.
3. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ຮູບພາບເຄື່ອງໃນໂຮງຮຽນທີ່ສົມບູນກັບຮູບພາບທີ່ແຍກສ່ວນ: ໂຕະ, ຕັ່ງ, ຮົ້ວ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ຮູບພາບເຄື່ອງໃນໂຮງຮຽນທີ່ສົມບູນກັບຮູບພາບທີ່ແຍກສ່ວນ: ໂຕະ, ຕັ່ງ, ຮົ້ວ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ຮູພາບກັບຕົວພະຍັນຊະນະ: ຮູບພາບໄກ່, ຈອກ, ເດັກ, ຕາ, ແບ້, ປາ, ຢາ, ໂອ; ຕົວພະຍັນຊະນະ: ກ, ຈ, ດ, ຕ, ບ, ປ, ຢ, ອ.
3. ບົດຄຳຄ່ອງ ຫຼິ້ນ ແລະ ນອນຖືກເວລາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫຼິ້ນ ແລະ ນອນຖືກເວລາ.
2. ໃຫ້ເດັກນ້ອຍສັງເກດຄຳສັບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ຮູບພາບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການເວົ້າຄຳທີ່ສຸພາບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບເຄື່ອງໃນໂຮງຮຽນທີ່ສົມບູນກັບຮູບພາບທີ່ແຍກສ່ວນ.
3. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນແມ່ລ້ຽງ ແລະ ພະນັກງານອະນາໄມຢ່າງມ່ວນຊື່ນ.
3. ເວົ້າເປັນປະໂຫຍດຕາມຮູບພາບ ແລະ ອ່ານຄຳສັບທີ່ມີວັນນະຍຸດ x່, x້ ໄດ້ຊັດເຈນ.
4. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມມຸມບົດບາດສົມມຸດ ແລະ ມຸມອ່ານ.
2. ການຫຼິ້ນບົດບາດສົມມຸດເປັນແມ່ລ້ຽງປຸງແຕ່ງອາຫານ, ເປັນພະນັກງານອະນາໄມຫົດນ້ຳດອກໄມ້.
3. ການສັງເກດ ແລະ ເວົ້າເປັນປະໂຫຍກຕາມຮູບພາບ: ແມ່ລ້ຽງແຕ່ງກິນ, ແມ່ລ້ຽງມ້ຽນຖ້ວຍ ແລະ ປ້າອະນາໄມກວາດ ເດີ່ນ; ສັງເກດ ແລະ ອ່ານຄຳສັບທີ່ມີວັນນະຍຸດ x່, x້.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຄື່ອງໃຊ້ໃນຫ້ອງຄົວຂອງຈິງ ຫຼື ຈຳລອງ, ຕົ້ນດອກໄມ້ຈຳລອງ, ບົວນ້ອຍ.
2. ມຸມອ່ານ: ຮູບພາບແມ່ລ້ຽງແຕ່ງກິນ, ແມ່ລ້ຽງມ້ຽນຖ້ວຍ, ຄົນກວາດເດີ່ນ; ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມ 1 (ໜ້າ 23) ຫຼື ເຈ້ຍຄຳສັບທີ່ມີວັນນະຍຸດ x່, x້: ຊີ, ຊີ່, ຊີ້; ກີ, ກີ່, ກີ້; ປີ, ປີ່, ປີ້; ມີ, ມີ່, ມີ້; ພີ, ພີ່, ພີ້.
3. ບົດຄຳຄ່ອງ ຫຼິ້ນ ແລະ ນອນຖືກເວລາ ແລະ ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫຼິ້ນ ແລະ ນອນຖືກເວລາ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບຊື່ເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກ ເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນແມ່ລ້ຽງ ແລະ ພະນັກງານອະນາໄມ.
3. ຄວາມຊັດເຈນໃນການອ່ານເປັນປະໂຫຍດຕາມຮູບພາບ ແລະ ອ່ານຄຳສັບທີ່ມີວັນນະຍຸດ x່, x້.
4. ການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ຈຸດປະສົງສຳລັບ ອາທິດທີ 3

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມການສັນຍານ ຍົກຮູບພາບໄດ້ຖືກຕ້ອງ.
3. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.
5. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.
6. ອົດທົນໃນເວລາສະແດງທ່າທາງ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຫ້ອງຕ່າງໆໃນໂຮງຮຽນໄດ້ຖືກຕ້ອງ.
2. ສັງເກດ ແລະ ແຕ້ມຮູບສິ່ງທີ່ເຫັນໄດ້.
3. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມເນື້ອໃນຄຳຄ່ອງ, ບົດເພງ, ຮູບພາບໄດ້ຊັດເຈນ.
4. ອ່ານອອກສຽງຄຳສັບທີ່ມີຕົວສະກົດ ນ, ບ, ກ, ດ ໄດ້ຊັດເຈນ.
5. ບອກເຄື່ອງໃຊ້, ຄຸນປະໂຫຍດ ແລະ ການບົວລະບັດຮັກສາຫ້ອງຮຽນ, ຫ້ອງອ່ານ, ຫ້ອງອາຫານ, ຫ້ອງນໍ້າ ແລະ ໄດ້ຖືກຕ້ອງ.
6. ບອກເຄື່ອງໃຊ້ ແລະ ເຄື່ອງຮຽນທີ່ເປັນຮູບສີ່ແຈ, ວົງມົນ.
7. ມີລະບຽບວິໄນໃນການເຂົ້າຫ້ອງອ່ານ, ຫ້ອງອາຫານ, ຫ້ອງນໍ້າ.
8. ມີຄວາມເບີກບານມ່ວນຊື່ນໃນການຮ້ອງເພງ.
9. ບອກຜົນການປຽບທຽບຄວາມຍາວໂດຍໃຊ້ຄຳວ່າ: ຍາວກວ່າ, ສັ້ນກວ່າ, ຍາວເທົ່າກັນໄດ້ຖືກຕ້ອງ.
10. ປະຕິບັດຕົວຈິງໃນການເກັບມ້ຽນຖ້ວຍ, ບ່ວງໃຫ້ຖືກບ່ອນ.
11. ນັບຈຳນວນຮູບພາບແຕ່ 1-5 ໄດ້ຖືກຕ້ອງ.
12. ປະຕິບັດຕົວຈິງໃນການເຂົ້າຫ້ອງນໍ້າ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຕິດຕົວພະຍັນຊະນະຕາມຮອຍຈໍ້າ, ເປຍເສັ້ນຝ້າຍຕາມແບບ, ພົ່ນສີໃສ່ຮູບພາບປຶ້ມ, ພັບຜ້າຮູບວົງມົນເປັນຮູບສາມແຈ ແລະ ພີຜ້າແພຮູບສາມແຈເປັນຮູບວົງມົນ ແລະ ຂີດຂຽນສະຫຼະ ຶ ທີ່ມີຢູ່ໃນຄຳສັບໄດ້ຖືກຕ້ອງ.
2. ຕິດຕົວພະຍັນຊະນະຕາມຮອຍຈໍ້າ, ເປຍເສັ້ນຝ້າຍຕາມແບບ ແລະ ພົ່ນສີໃສ່ຮູບພາບປຶ້ມໄດ້ຈົບງາມ.
3. ພັບຜ້າຮູບວົງມົນເປັນຮູບສາແຈ ແລະ ພີຜ້າແພຮູບສາມແຈເປັນຮູບວົງມົນໄດ້ຄ້າຍຄື.
4. ຂີດຂຽນສະຫຼະ ຶ ທີ່ມີຢູ່ໃນຄຳສັບຕາມຮອຍຈໍ້າໄດ້ຈົບງາມ, ມີຄວາມອົດທົນໃນການຕິດຕົວພະຍັນຊະນະ, ເປຍເສັ້ນຝ້າຍຕາມແບບ.
5. ເຝິກໃຫ້ເດັກມີຄວາມລະມັດລະວັງໃນການພົ່ນສີ.
6. ມີການຊ່ວຍເຫຼືອໝູ່ເພື່ອນໃນເວລາພັບຜ້າ.
7. ມີຄວາມອົດທົນໃນການຂີດຂຽນສະຫຼະ ຶ ທີ່ມີຢູ່ໃນຄຳສັບ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນ ແມວຈັບປາ, ຫຼິ້ນແບບຫຼິ້ນແຂ່ງຂັນ ສິ່ງຈິດໝາຍ, ຫຼິ້ນແບບຫຼິ້ນຊອກຫາເພື່ອນ, ຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງນ້ຳ, ຜອງຊາຍ ແລະ ຫຼິ້ນແບບຫຼິ້ນແຂ່ງຂັນເຕະບານເຂົ້າໂກນ.
2. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນ ແມວຈັບປາ, ຫຼິ້ນແບບຫຼິ້ນແຂ່ງຂັນ ສິ່ງຈິດໝາຍ, ຫຼິ້ນແບບຫຼິ້ນຊອກຫາເພື່ອນ, ຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງນ້ຳ, ຜອງຊາຍ ແລະ ຫຼິ້ນແບບຫຼິ້ນແຂ່ງຂັນເຕະບານເຂົ້າໂກນໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
4. ປອດໄພໃນເວລາຫຼິ້ນແບບຫຼິ້ນ.
5. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
6. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.
7. ມີສະຕິລະວັງຕົວ.
8. ມີຄວາມສາມັກຄີໃນເວລາຫຼິ້ນ.
9. ມີການກະຕວງ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຈັບຄູ່ທີ່ຄືກັນຮູບພາບຫ້ອງຮຽນ, ຫ້ອງອ່ານ, ຫ້ອງອາຫານ, ເຄື່ອງໃຊ້ໃນຫ້ອງຮຽນ, ເຄື່ອງໃຊ້ໃນຫ້ອງອ່ານ, ຮູບກ້ອນຈະຕຸລັດ, ກ້ອນສາມແຈ, ກ້ອນສີ່ແຈໄດ້ຖືກຕ້ອງ.
3. ສຶກສາລາຍລະອຽດຮູບພາບເຄື່ອງໃຊ້ໃນຫ້ອງອາຫານໄດ້ຖືກຕ້ອງ.
4. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.
5. ອົດທົນໃນເວລາຫຼິ້ນເກມ.
6. ແບ່ງປັນເກມໃຫ້ໝູ່ເພື່ອນ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຕໍ່ບູ້ອກເປັນຮູບໂຕະ, ຕັ່ງ, ປຶ້ມ, ພິມພະຍັນຊະນະ ກ, ນ, ງ, ດ, ບ, ມ, ຍ, ວໃສ່ອ່າງດິນຊາຍຢ່າງມ່ວນຊື່ນ.
3. ເປຍເສັ້ນຝ້າຍຕາມແບບ, ຕິດຕົວພະຍັນຊະນະຕາມຮ້ອຍຈ້ຳ, ກ, ນ, ດ, ບ, ມ, ຍ, ວ, ພັບເຈ້ຍເປັນຮູບຈອກ, ພັບຜ້າຮູບວົງມົນເປັນຮູບສາມແຈ, ແລະ ພີຜ້າຮູບສາມແຈເປັນຮູບວົງມົນ, ປັ້ນດິນເປັນຮູບຕໍຕ່າງລະດັບຕາມແບບໄດ້ຖືກຕ້ອງ.
4. ອ່ານອອກສຽງຄຳສັບທີ່ມີຕົວສະກົດ: ກ, ນ, ດ, ບ, ອ່ານຕາມຮູບພາບປຶ້ມນິທານ ສອງສ່ຽວ ທ້າວ ຕຸ້ຍ ແລະ ທ້າວຈ່ອຍ, ເວົ້າເປັນປະໂຫຍກຕາມຮູບພາບ: ຖິ້ມຂີ້ເຫຍື້ອໃສ່ກະຕ່າ, ເດັກນ້ອຍເຊັດໂຕະ, ເດັກນ້ອຍເຊັດກະດານ, ເດັກນ້ອຍມ້ຽນບ່ອນນອນໄດ້ຊັດເຈນ.
5. ຫຼິ້ນບົດບາດສົມມຸດເປັນແມ່ລ້ຽງປຸ່ງແຕ່ງອາຫານ, ເສີບອາຫານ, ເປັນພໍ່ຄ້າ-ແມ່ຄ້າ ແລະ ລູກຄ້າຊື້ຂາຍອາຫານ, ຢ່າງມ່ວນຊື່ນ.
6. ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງຮຽນ, ຫ້ອງອ່ານ, ຫ້ອງອາຫານ, ເຄື່ອງໃຊ້ໃນຫ້ອງຮຽນ, ເຄື່ອງໃຊ້ໃນຫ້ອງອ່ານ, ຮູບກ້ອນຈະຕຸລັດ, ກ້ອນສາມແຈ, ກ້ອນສີ່ແຈ, ສຶກສາລາຍລະອຽດຮູບພາບເຄື່ອງໃຊ້ໃນຫ້ອງອາຫານໄດ້ຢ່າງຖືກຕ້ອງ.
7. ທົດລອງການຈົມ-ຟູຂອງວັດຖຸ, ສັງເກດການຈະເລີນເຕີບໃຫຍ່ຂອງຕົ້ນດອກໄມ້ ແລະ ຫົດນ້ຳຕົ້ນດອກໄມ້ໄດ້ຖືກຕ້ອງ,
8. ເກັບມ້ຽນເຄື່ອງຫຼິ້ນໄວເປັນລະບຽບ ແລະ ຖືກບ່ອນທີ່ກຳນົດໄວ້.
9. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
10. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
11. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດຄຳຄ່ອງ ຫຼິ້ນ ແລະ ນອນຖືກເວລາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ ຫຼິ້ນ ແລະ ນອນຖືກເວລາ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ຫຼິ້ນ ແລະ ນອນຖືກເວລາ.
2. ທ່າຫັດກາຍະບໍລິຫານລຳຄໍ ແລະ ແຂນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ແຂນ: ທ່າໝູນລຳຄໍ ແລະ ທ່າຍົກແຂນໄປທາງໜ້າຂຶ້ນສູງ.
2. ໃຫ້ເດັກນ້ອຍເຕັ້ນກົບ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາໄປທາງໜ້າ, ຈ່າງຂາອອກກົ້ມລົງເອົາມືທັງສອງຈັບປາຍຕີນ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດຄຳຄ່ອງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ຫ້ອງຕ່າງໆໃນໂຮງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ບອກຫ້ອງຕ່າງໆໃນໂຮງຮຽນໄດ້ຖືກຕ້ອງ.
2. ເລົ່າຄຳຄ່ອງ, ເວົ້າຄຳສັບຕາມຄຳຄ່ອງໄດ້ຊັດເຈນ.
3. ອ່ານອອກສຽງຄຳສັບທີ່ມີຕົວສະກົດ ນ, ບ, ກ, ດ ໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ຫ້ອງຕ່າງໆໃນໂຮງຮຽນປະກອບມີ: ຫ້ອງຮຽນ, ຫ້ອງອ່ານ ຫຼື ມຸມອ່ານ, ຫ້ອງອາຫານ, ຫ້ອງນ້ຳ.
2. ການເລົ່າຄຳຄ່ອງ, ເວົ້າຄຳສັບຕາມເນື້ອໃນບົດຄຳຄ່ອງ: ຫ້ອງຮຽນ, ຫ້ອງອາຫານ, ຫ້ອງນ້ຳ, ຫ້ອງສະໝຸດ, ຫ້ອງພັກຄູ, ເຊັດຖູ.
3. ການອ່ານອອກສຽງຄຳສັບທີ່ມີຕົວສະກົດ ນ, ບ, ກ, ດ  ຄືນ, ຊືນ, ຜືນ, ມືດ, ອືດ, ຄືບ, ລືບ, ຖືກ.

### III. ສື່ການຮຽນ-ການສອນ

1. ຫ້ອງຕ່າງໆໃນໂຮງຮຽນ; ບົດຄຳຄ່ອງ ຫ້ອງຕ່າງໆໃນໂຮງຮຽນ (ເບິ່ງປຶ້ມຄູ່ມືຄູ).
2. ບັດຄຳສັບ: ຄືນ, ຊືນ, ຜືນ, ມືດ, ອືດ, ຄືບ, ລືບ, ຖືກ; ສໍດຳ ແລະ ເຈ້ຍຂາວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າຄຳສັບຕາມເນື້ອໃນບົດຄຳຄ່ອງ.
2. ໃຫ້ເດັກນ້ອຍອ່ານອອກສຽງຄຳສັບທີ່ມີຕົວສະກົດ ນ, ບ, ກ, ດ.
3. ໃຫ້ເດັກນ້ອຍໄປສັງເກດຫ້ອງຕ່າງໆໃນໂຮງຮຽນ, ສົນທະນາກ່ຽວກັບຊື່ຫ້ອງຕ່າງໆ ແລະ ໃຫ້ເດັກນ້ອຍແຕ້ມຮູບສິ່ງທີ່ເດັກນ້ອຍເຫັນຕາມຈິນຕະນາການ.
4. ໃຫ້ເດັກນ້ອຍເວົ້າຄືນຊື່ຫ້ອງຕ່າງໃນໂຮງຮຽນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຮັກສາຄວາມສະອາດຫ້ອງຕ່າງໆໃນໂຮງຮຽນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຫ້ອງຕ່າງໆໃນໂຮງຮຽນ.
2. ຄວາມຊັດເຈນໃນການເລົ່າຄຳຄ່ອງ, ເວົ້າຄຳສັບຕາມເນື້ອໃນບົດຄຳຄ່ອງ.
3. ຄວາມຊັດເຈນໃນການອ່ານອອກສຽງຄຳສັບທີ່ມີຕົວສະກົດ ນ, ບ, ກ, ດ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕິດຕົວພະຍັນຊະນະ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຕິດຕົວພະຍັນຊະນະຕາມຮອຍຈ້ຳໄດ້ຖືກຕ້ອງ.
2. ຕິດຕົວພະຍັນຊະນະຕາມຮອຍຈ້ຳໄດ້ສະອາດຈົບງາມ.
3. ມີຄວາມອົດທົນໃນການຕິດຕົວພະຍັນຊະນະ.

### II. ເນື້ອໃນຕົ້ນຕໍ

ການຕິດຕົວພະຍັນຊະນະ: ກ, ນ, ງ, ດ, ບ, ມ, ຍ, ວ ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ເຈ້ຍຂາວ, ກາວສຳເລັດຮູບ ຫຼື ກາວເຂົ້າໜຽວຕົ້ມ.
2. ຕົວພະຍັນຊະນະກ, ນ, ງ, ດ, ບ, ມ,ຍ, ວ ທີ່ຕັດແລ້ວ.
4. ເຈ້ຍແບບຕິດຕົວພະຍັນຊະນະກ, ນ,ງ, ດ, ບ, ມ, ຍ, ວ ທີ່ຕິດແລ້ວ.
5. ຊາມນ້ຳ, ສະບູ ແລະ ຜ້າເຊັດມື.
6. ບົດຄຳຄ່ອງ ຫ້ອງຕ່າງໆ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງແອນຝາມື, ກຳມື ແລະ ແບມື.
2. ໃຫ້ເດັກນ້ອຍສັງເກດເສັ້ນຝ້າຍທີ່ເປ້ຍແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການເປຍເສັ້ນຝ້າຍ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນຂອງການເປຍເສັ້ນຝ້າຍຕາມແບບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການເປຍເສັ້ນຝ້າຍຕາມແບບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບວາມອົດທົນ, ຄວາມຈົບງາມ ແລະ ເກັບຜົນງານໄປເກັບມ້ຽນໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຕິດຕົວພະຍັນຊະນະ : ກ, ນ, ງ, ດ, ບ, ມ, ຍ, ວ ຕາມຮອຍຈ້ຳ.
2. ຄວາມຈົບງາມໃນການຕິດຕົວພະຍັນຊະນະຕາມຮອຍຈ້ຳ.
3. ຄວາມອົດທົນໃນການຕິດຕົວພະຍັນຊະນະຕາມຮອຍຈ້ຳ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແມວຈັບປາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນ ແມວຈັບປາໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແມວຈັບປາໄດ້ຢ່າງຖືກຕ້ອງ.
3. ການມີສະຕິລະວັງຕົວໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແມວຈັບປາ.

### III. ສື່ການຮຽນ-ການສອນ

1. ກອງ.
2. ບົດຄຳຄ່ອງ ຫ້ອງຕ່າງໆ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫ້ອງຕ່າງໆປະກອບທ່າທາງ.
2. ນາຍຄູສະເໜີແບບຫຼິ້ນ ແມວຈັບປາ, ສາທິດວິທີ ແລະ ຂັ້ນຕອນໃນການຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນ ແມວຈັບປາ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ນາຍຄູ, ເດັກນ້ອຍຮ່ວມກັນສະຫຼຸບວິທີ, ຂັ້ນຕອນການຫຼິ້ນ ແບບຫຼິ້ນ ແລະ ໃຫ້ເດັກນ້ອຍຫຼິ້ນຄືນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຫຼິ້ນດ້ວຍຄວາມສາມັກຄີ ແລະ ການມີຄວາມລະມັດລະວັງ.
6. ໃຫ້ເດັກນ້ອຍນັ່ງລົງເອົາມືຄ້ຳແອວແລ້ວບິດໄປເບື້ອງຊ້າຍ-ເບື້ອງຂວາຊ້າໆ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແມວຈັບປາ.
3. ການມີສະຕິໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບຫ້ອງຮຽນ, ຫ້ອງອ່ານ ແລະ ຫ້ອງອາຫານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບຫ້ອງຮຽນ, ຫ້ອງອ່ານ ແລະ ຫ້ອງອາຫານໄດ້ຖືກຕ້ອງ.
3. ເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບຫ້ອງຮຽນ, ຫ້ອງອ່ານ ແລະ ຫ້ອງອາຫານ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບຫ້ອງຮຽນ, ຫ້ອງອ່ານ ແລະ ຫ້ອງອາຫານ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ຮູບພາບເຄື່ອງໃນໂຮງຮຽນທີ່ສົມບູນກັບຮູບພາບທີ່ແຍກສ່ວນ: ໂຕະ, ຕັ່ງ.
3. ບົດຄຳຄ່ອງ ຫ້ອງຕ່າງໆ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫ້ອງຕ່າງໆ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນຈັບຄູ່ທີ່ຄືກັບຮູບພາບຫ້ອງຮຽນ, ຫ້ອງອ່ານ ແລະ ຫ້ອງອາຫານ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມ ຫຼັງຈາກຫຼິ້ນແລ້ວ ແລະ ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບຫ້ອງຮຽນ, ຫ້ອງອ່ານ ແລະ ຫ້ອງອາຫານ.
3. ການເວົ້າຄຳທີ່ສຸພາບກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຂຽນຕົວເລກ 8-9 ຕາມຮອຍຈ້ຳ, ຂຽນດ້ວຍຕົນເອງ ແລະ ພັບເຈ້ຍເປັນຮູບຈອກໄດ້ຖືກຕ້ອງ.
3. ອ່ານອອກສຽງຄຳສັບທີ່ມີຕົວສະກົດ ແລະ ອ່ານຕາມຮູບພາບໃນປຶ້ມນິທານໄດ້ຊັດເຈນ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
2. ການຂຽນຕົວເລກ 8-9 ຕາມຮອຍຈ້ຳ, ຂຽນດ້ວຍຕົນເອງ ແລະ ພັບເຈ້ຍເປັນຮູບຈອກ.
3. ການສັງເກດ ແລະ ອ່ານອອກສຽງຄຳສັບທີ່ມີຕົວສະກົດ: ກ, ນ, ດ, ບ: ຄືນ, ຊີນ, ຜືນ, ມືດ, ອືດ, ຄືບ, ລືບ, ຖືກ; ອ່ານຕາມຮູບພາບໃນປຶ້ມນິທານເລື່ອງ: ສອງສ່ຽວທ້າວຕຸ້ຍ ແລະ ທ້າວຈ່ອຍ.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ເຈ້ຍຕົວພະຍັນຊະນະ ກ, ນ, ງ, ດ, ບ, ມ, ຍ, ວ, ກາວ, ເຈ້ຍສຳລັບພັບ, ຊາມນ້ຳລ້າງມື, ສະບູ ແລະ ຜ້າເຊັດມື.
2. ມຸມອ່ານ: ບັດຄຳສັບ: ຄືນ, ຊີນ, ຜືນ, ມືດ, ອືດ, ຄືບ, ລືບ, ຖືກ; ປຶ້ມນິທານເລື່ອງ: ສອງສ່ຽວທ້າວ ຕຸ້ຍ ແລະ ທ້າວຈ່ອຍ, ກະດານສຽບ ຫຼື ຕິດ.
3. ບົດລຳຄ່ອງ ທ້ອງຕ່າງໆ ແລະ ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າລຳຄ່ອງ ທ້ອງຕ່າງໆ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຕິດຕົວພະຍັນຊະນະຕາມຮອຍຈ້ຳ ແລະ ພັບເຈ້ຍ.
3. ຄວາມຊັດເຈນໃນການອ່ານອອກສຽງຄຳສັບທີ່ມີຕົວສະກົດ ແລະ ອ່ານຕາມຮູບພາບໃນປຶ້ມນິທານ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດລຳລ່ອງ ທ້ອງຕ່າງໆ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ ທ້ອງຕ່າງໆ.

### III. ສື່ການຮຽນ-ການສອນ

1. ບົດລຳລ່ອງ ທ້ອງຕ່າງໆ.
2. ທ່າຫັດກາຍະບໍລິຫານມື ແລະ ແອວ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານມື ແລະ ແອວ: ທ່າດີດນິ້ວມືໄປທາງຊ້າຍ-ຂວາ ແລະ ທ່າໝູນແອວ.
2. ໃຫ້ເດັກນ້ອຍເຕັ້ນຈ່າງຂາ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
4. ໃຫ້ເດັກນ້ອຍຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາຊື່ໄປທາງໜ້າ, ເອົາມືທັງສອງຄ້ຳພື້ນທາງຫຼັງ, ເງີຍໜ້າຫາຍໃຈເຂົ້າ-ອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ຫ້ອງຮຽນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກເຄື່ອງໃຊ້ໃນຫ້ອງຮຽນ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາໄດ້ຖືກຕ້ອງ.
2. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.
3. ບອກທຸງຊາດ, ກະດານ ແລະ ປຶ້ມທີ່ຄືກັບຮູບຊົງ ເລຂາຄະນິດ: ຮູບສີ່ແຈ, ວົງມົນ.

## II. ເນື້ອໃນຕົ້ນຕໍ

1. ເຄື່ອງໃຊ້ໃນຫ້ອງຮຽນ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາ:

- ເຄື່ອງໃຊ້: ໂຕະ, ຕັ່ງ, ຕູ້, ກະດານ, ສໍຂາວ, ປຶ້ມຂຽນ, ປຶ້ມບົດເຝິກຫັດ, ປຶ້ມນິທານ, ສໍດຳ, ສໍສີ, ໄມ້ບັ້ງອກ, ມຸມ ແລະ ອຸປະກອນໃນມຸມຮຽນຮູ້ຕ່າງໆ.
- ຄຸນປະໂຫຍດຂອງຫ້ອງຮຽນ: ເປັນບ່ອນທີ່ເດັກ ແລະ ຄູຮ່ວມກັນປະຕິບັດກິດຈະກຳການຫຼິ້ນ, ຮຽນຮູ້ຕ່າງໆໃນແຕ່ລະວັນ ແລະ ເປັນບ່ອນເດັກນ້ອຍນອນພັກຜ່ອນຕອນທ່ຽງ.
- ການບົວລະບັດຮັກສາ: ຖິ້ມຂີ້ເຫຍື້ອໃສ່ກະຖັງ ຫຼື ກະຕ່າ, ເຊັດ, ຖູ, ກວາດຫ້ອງໃຫ້ສະອາດ ແລະ ເກັບມ້ຽນເຄື່ອງໃຊ້ຕ່າງໆໃຫ້ຖືກບ່ອນ ແລະ ເປັນລະບຽບ.

2. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ:

- ຄຳສັບ: ກະດານ, ສໍຂາວ, ປຶ້ມຂຽນ, ປຶ້ມນິທານ, ສໍດຳ, ສໍສີ.
- ປະໂຫຍກ: ກະດານເປັນຮູບສີ່ຫຼ່ຽມ, ປຶ້ມນິທານຫົວໃຫຍ່, ສໍດຳມີຢາງລຶບ, ສໍສີມີກ້ານຍາວ.

3. ຮູບເລຂາຄະນິດ: ຮູບສີ່ແຈ, ວົງມົນ.

## III. ສື່ການຮຽນ-ການສອນ

1. ໂຕະ, ຕັ່ງ, ຕູ້, ກະດານ, ສໍຂາວ, ປຶ້ມຂຽນ, ປຶ້ມບົດເຝິກຫັດ, ປຶ້ມນິທານ, ສໍດຳ, ສໍສີ, ໄມ້ບັ້ງອກ, ທຸງຊາດ.
2. ຮູບພາບ: ກະດານ, ປຶ້ມນິທານ, ສໍດຳມີຢາງລຶບ, ສໍສີກ້ານຍາວ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກນ້ອຍກ່ຽວກັບຊື່ຫ້ອງຕ່າງໆໃນໂຮງຮຽນ.
2. ໃຫ້ເດັກນ້ອຍສັງເກດເຄື່ອງໃຊ້ໃນຫ້ອງຮຽນ, ສົນທະນາກ່ຽວກັບຊື່, ຄຸນປະໂຫຍດ ແລະ ການບົວລະບັດຮັກສາ.
3. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍສັງເກດທຸງຊາດ, ກະດານ, ປຶ້ມນິທານແລ້ວໃຫ້ເດັກນ້ອຍບອກສິ່ງທີ່ເປັນຮູບສີ່ແຈ ແລະ ວົງມົນ.
5. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບຄືນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການຮັກສາເຄື່ອງໃຊ້ໃນຫ້ອງຮຽນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກເຄື່ອງໃຊ້ໃນຫ້ອງຮຽນ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາ.
2. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
3. ຄວາມຖືກຕ້ອງໃນການບອກເຄື່ອງໃຊ້ ແລະ ເຄື່ອງຮຽນທີ່ເປັນຮູບສີ່ແຈ, ວົງມົນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ເປຍເສັ້ນຝ້າຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການເປຍເສັ້ນຝ້າຍຕາມແບບໄດ້ຖືກຕ້ອງ.
2. ເປຍເສັ້ນຝ້າຍຕາມແບບໄດ້ຈົບງາມ.
3. ມີຄວາມອົດທົນໃນການເປຍເສັ້ນຝ້າຍຕາມແບບ.

### II. ເນື້ອໃນຕົ້ນຕໍ

ການເປຍເສັ້ນຝ້າຍຕາມແບບ.

### III. ສື່ການຮຽນ-ການສອນ

1. ເສັ້ນຝ້າຍ ແລະ ເຊືອກມັດ.
2. ແບບເສັ້ນຝ້າຍທີ່ເປ້ຍແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງແອນຝາມື, ກຳມື ແລະ ແບມື.
2. ໃຫ້ເດັກນ້ອຍສັງເກດເສັ້ນຝ້າຍທີ່ເປ້ຍແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການເປຍເສັ້ນຝ້າຍ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນຂອງການເປຍເສັ້ນຝ້າຍຕາມແບບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການເປຍເສັ້ນຝ້າຍຕາມແບບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບວາມອົດທົນ, ຄວາມຈົບງາມ ແລະ ເກັບຜົນງານໄປເກັບມ້ຽນໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການເປຍເສັ້ນຝ້າຍຕາມແບບ.
2. ຄວາມຈົບງາມໃນການເປຍເສັ້ນຝ້າຍຕາມແບບ.
3. ຄວາມອົດທົນໃນການເປຍເສັ້ນຝ້າຍຕາມແບບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນແບບຫຼິ້ນແຂ່ງຂັນສົ່ງຈົດໝາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນສົ່ງຈົດໝາຍໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນສົ່ງຈົດໝາຍໄດ້ຖືກຕ້ອງ.
3. ມີຄວາມສາມັກຄີໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ແຂ່ງຂັນສົ່ງຈົດໝາຍ.

### III. ສື່ການຮຽນ-ການສອນ

1. ຊອງຈົດໝາຍ ແລະ ກອງ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຍ່າງເປັນແຖວວົງມົນຕາມສຽງຕີບກອງ.
2. ນາຍຄູສະເໜີແບບຫຼິ້ນແຂ່ງຂັນສົ່ງຈົດໝາຍ ແລະ ສາທິດວິທີຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນສົ່ງຈົດໝາຍ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນສົ່ງຈົດໝາຍ.
5. ສຶກສາອົບຮົມເດັກນ້ອຍ ຫຼິ້ນຮ່ວມກັບດ້ວຍຄວາມສາມັກຄີ, ລະວັງບໍ່ໃຫ້ຍາດເຄື່ອງຫຼິ້ນກັນ, ບໍ່ໃຫ້ດຶງມືກັນແຮງ, ຫຼັງຈາກຫຼິ້ນແລ້ວອະນາໄມຕີນ ແລະ ມືໃຫ້ສະອາດ.
6. ໃຫ້ເດັກນ້ອຍຢືນແກວ່ງແຂນໄປມາຊ້າໆ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນສົ່ງຈົດໝາຍ.
3. ຄວາມສາມັກຄີໃນເວລາຫຼິ້ນ.

# ກິດຈະກໍາເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງຮຽນໄດ້ຖືກຕ້ອງ.
3. ແບ່ງປັນເກມໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງຮຽນ: ສໍ, ປຶ້ມ, ໂຕະ, ຕັ່ງ, ຕຸກກະຕາ, ໄມ້ບັ້ນທັດ. 

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງຮຽນ: ສໍ, ປຶ້ມ, ໂຕະ, ຕັ່ງ, ຕຸກກະຕາ, ໄມ້ບັ້ນທັດ (ສໍາລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບຫ້ອງຮຽນ, ຫ້ອງອ່ານ ແລະ ຫ້ອງອາຫານ.

### IV. ກິດຈະກໍາການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງໃຊ້ໃນຫ້ອງຮຽນ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນໍາ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງຮຽນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການແບ່ງປັນເກມໃຫ້ໝູ່ເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນກາການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງຮຽນ.
3. ການແບ່ງປັນເກມໃຫ້ໝູ່ເພື່ອນ..

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ເປຍເສັ້ນຝ້າຍຕາມແບບ ແລະ ຕິດຕົວພະຍັນຊະນະຕາມຮອຍຈ້ຳໄດ້ຖືກຕ້ອງ.
3. ເວົ້າເປັນປະໂຫຍກຕາມຮູບພາບ ແລະ ອ່ານເປັນປະໂຫຍດທີ່ມີສະຫຼະ ໍ ໄດ້ຊັດເຈນ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
2. ການເປຍເສັ້ນຝ້າຍຕາມແບບ ແລະ ຂຽນພະຍັນຊະນະຕາມແບບ: ກ, ນ, ງ, ດ, ບ, ມ, ຍ, ວ.
2. ການເວົ້າປະໂຫຍກຕາມຮູບພາບ: ຖິ້ມຂີ້ເຫຍື້ອໃສ່ກະຕ່າ, ເດັກນ້ອຍເຊັດໂຕະ, ເດັກນ້ອຍເຊັດກະດານ, ເດັກນ້ອຍມ້ຽນ ບ່ອນນອນ; ອ່ານເປັນປະໂຫຍດທີ່ມີສະຫຼະ ໍີ: ກາງຄືນມີດາວ, ອາວມີປືນຍາມ, ອາດີຈັບ ປາ, ມາລີລ້າງມື.

### III. ສື່ການຮຽນ-ການສອນ

1. ມຸມສິລະປະສ້າງສັນ: ເສັ້ນຝ້າຍ, ເຊືອກສຳລັບມັດ, ແບບເສັ້ນຝ້າຍທີ່ເປຍແລ້ວ, ສໍດຳ, ຢາງລຶບ ແລະ ເຈ້ຍແບບຕິດຕົວພະຍັນຊະນະ: ກ, ນ, ງ, ດ, ບ, ມ, ຍ, ວ, ກາວ, ຊາມນ້ຳ, ຜ້າເຊັດມື, ສະບູ.
2. ມຸມອ່ານ: ຮູບພາບເດັກນ້ອຍຖິ້ມຂີ້ເຫຍື້ອໃສ່ກະຕ່າ, ເດັກນ້ອຍເຊັດໂຕະ, ເດັກນ້ອຍເຊັດກະດານ, ເດັກນ້ອຍມ້ຽນບ່ອນນອນ; ບັດປະໂຫຍດທີ່ມີສະຫຼະ ໍີ: ກາງຄືນມີດາວ, ອາວມີປືນຍາມ, ອາດີຈັບ ປາ, ມາລີລ້າງມື ແລະ ກະດານສຽບ ຫຼື ຕິດ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມສິລະປະສ້າງສັນ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການເປຍເສັ້ນຝ້າຍ ແລະ ຕິດຕົວພະຍັນຊະນະຕາມຮອບຈ້ຳ.
3. ຄວາມຊັດເຈນໃນການເວົ້າເປັນປະໂຫຍກຕາມຮູບພາບ ແລະ ອ່ານເປັນປະໂຫຍດທີ່ມີສະຫຼະ ໍີ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມການສັນຍານຍົກຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມການສັນຍານຍົກຮູບພາບໄດ້ຖືກຕ້ອງ.
2. ຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມການສັນຍານຍົກຮູບພາບ:

- ຍົກຮູບພາບຕັ່ງສະແດງທ່າທາງນັ່ງຕັ່ງ.
- ຍົກຮູບພາບປຶ້ມສະແດງທ່າທາງຂຽນໜັງສື.
- ຍົກຮູບພາບປຶ້ມສະແດງທ່າທາງອ່ານປຶ້ມ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ຕັ່ງ, ປຶ້ມ.
2. ທ່າຫັດກາຍະບໍລິຫານລຳຄໍ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານລຳຄໍ ແລະ ຂາ: ທ່າກົ້ມຫົວລົງ, ເງີຍຫົວຂຶ້ນ ແລະ ທ່າໂຍ່ງໂຍະຂາລົງ.
2. ໃຫ້ເດັກນ້ອຍໂດດຢຽດຢາງ ສູງ 30 ຊມ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມການສັນຍານຍົກຮູບພາບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍຢືນຍົກແຂນວາອອກຫາຍໃຈເຂົ້າເອົາແຂນລົງຫາຍໃຈອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມການສັນຍານຍົກຮູບພາບ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມການສັນຍານຍົກຮູບພາບ.
2. ການຊ່ວຍເຫຼືອໝູ່ເພື່ອນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ຫ້ອງອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກເຄື່ອງໃຊ້ໃນຫ້ອງອ່ານ, ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດຮັກສາໄດ້ຖືກຕ້ອງ.
2. ຮ້ອງເພງ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດເພງໄດ້ຊັດເຈນ.
3. ບອກຜົນການປຽບທຽບຄວາມຍາວໂດຍໃຊ້ຄຳວ່າ: ຍາວກວ່າ, ສັ້ນກວ່າ, ຍາວເທົ່າກັນໄດ້ຖືກຕ້ອງ.
4. ປະຕິບັດຕົວຈິງໃນການເຂົ້າຫ້ອງອ່ານ.

### II. ເນື້ອໃນຕົ້ນຕໍ

1. ເຄື່ອງໃຊ້ໃນຫ້ອງອ່ານ, ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດຮັກສາ:
- ເຄື່ອງໃຊ້ໃນມຸມອ່ານ ຫຼື ຫ້ອງອ່ານ: ໂຕະ, ຕັ່ງ, ປຶ້ມນິທານ, ປຶ້ມຮູບພາບຕ່າງໆ.
- ຄຸນປະໂຫຍດຂອງຫ້ອງອ່ານ: ເປັນບ່ອນຮຽນຮູ້ຈາກການອ່ານປຶ້ມນິທານ ແລະ ປຶ້ມຮູບພາບຕ່າງໆ.
- ລະບຽບຂອງຫ້ອງອ່ານ: ເວລາເຂົ້າຫ້ອງສະມຸດ ຫຼື ມຸມອ່ານປຶ້ມນິທານ, ປຶ້ມຮູບພາບບໍ່ລົມກັນ, ຕັ້ງໃຈອ່ານ, ເບິ່ງປຶ້ມຂອງຕົນເອງ ແລະ ບໍ່ຍາດໝູ່.
- ການບົວລະບັດຮັກສາ: ເປີດປຶ້ມຄ່ອຍໆ, ລະວັງບໍ່ໃຫ້ຂາດ, ຫຼັງຈາກອ່ານ ຫຼື ເບິ່ງແລ້ວເກັບປຶ້ມມ້ຽນໃຫ້ຖືກບ່ອນ.

2. ຮ້ອງເພງ ຫ້ອງອ່ານ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດເພງ.
- ຄຳສັບ: ຫ້ອງອ່ານ, ສະອາດ, ປຶ້ມນິທານ, ວົນແຊວ, ເກັບມ້ຽນ.
- ປະໂຫຍກ: ໂຮງຮຽນຂອງຫຼານມີຫ້ອງອ່ານ, ພວກຫຼານອ່ານປຶ້ມນິທານ, ພວກຫຼານບໍ່ວົນແຊວ, ອ່ານປຶ້ມແລ້ວໆເກັບມ້ຽນໃຫ້ດີ.

3. ການປຽບທຽບຄວາມຍາວໂດຍໃຊ້ຄຳວ່າ: ຍາວກວ່າ, ສັ້ນກວ່າ, ຍາວເທົ່າກັນ.

### III. ສື່ການຮຽນ-ການສອນ

1. ໂຕະ, ຕັ່ງ, ປຶ້ມນິທານ, ປຶ້ມຮູບພາບ; ບົດເພງ ຫ້ອງອ່ານ (ເບິ່ງປຶ້ມຄູ່ມືຄູ).
2. ຮູບພາບ ໂຕະ ຫຼື ໂຕະຕົວຈິງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ, ສົນທະນາ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດເພງ.
2. ໃຫ້ເດັກນ້ອຍສັງເກດໂຕະ, ຕັ່ງ, ປຶ້ມນິທານ, ປຶ້ມຮູບພາບ, ສົນທະນາກ່ຽວກັບເຄື່ອງໃຊ້ໃນຫ້ອງອ່ານ, ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດຮັກສາ.
3. ໃຫ້ເດັກນ້ອຍປຽບທຽບຮູບພາບໂຕະ ຫຼື ໂຕະຕົວຈິງແລ້ວໃຫ້ເດັກນ້ອຍບອກຮູບໂຕະທີ່ສັ້ນກວ່າ, ຍາວກວ່າ ແລະ ຍາວເທົ່າກັນ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການເຂົ້າຫ້ອງອ່ານ ຫຼື ມຸມອ່ານ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບລະບຽບ ແລະ ການບົວລະບັດຮັກສາຫ້ອງອ່ານ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບລະບຽບ ແລະ ການບົວລະບັດຮັກສາຫ້ອງອ່ານ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກເຄື່ອງໃຊ້ໃນຫ້ອງອ່ານ,ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດຮັກສາ.
2. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດເພງ.
3. ຄວາມຖືກຕ້ອງໃນການບອກຜົນການປຽບທຽບໂດຍໃຊ້ຄຳວ່າ: ຕ່ຳກວ່າ. ສູງກວ່າ, ສູງເທົ່າກັນ.
4. ການປະຕິບັດລະບຽບວິໃນໃນການເຂົ້າຫ້ອງອ່ານ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພົ່ນສີ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການພົ່ນສີໃສ່ຮູບພາບປຶ້ມໄດ້ຖືກຕ້ອງ.
2. ພົ່ນສີໃສ່ຮູບພາບປຶ້ມໄດ້ຈົບງາມ.
3. ເຝິກໃຫ້ເດັກມີຄວາມລະມັດລະວັງໃນການພົ່ນສີ.

### II. ເນື້ອໃນຕົ້ນຕໍ

ການພົ່ນສີໃສ່ຮູບພາບປຶ້ມ.

### III. ສື່ການຮຽນ-ການສອນ

1. ສີນ້ຳ ແລະ ແປງຖູແຂ້ວ.
2. ເຈ້ຍຂາວ ແລະ ຕາໜ່າງເຫຼັກ.
3. ຮູບພາບປຶ້ມ.
4. ຮູບພາບປຶ້ມທີ່ພົ່ນສີແລ້ວ.
5. ຊາມນ້ຳ, ຜ້າເຊັດມື ແລະ ສະບູ.
6. ບົດຄຳຄ່ອງ ທ້ອງອ່ານ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ທ້ອງອ່ານ ປະກອບທ່າທາງ
2. ໃຫ້ເດັກນ້ອຍສັງເກດຮູບພາບປຶ້ມທີ່ພົ່ນສີແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການພົ່ນສີ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການພົ່ນສີໃສ່ຮູບພາບປຶ້ມ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການພົ່ນສີໃສ່ຮູບພາບປຶ້ມ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມລະມັດລະວັງໃນການໃຊ້ນ້ຳສີ, ການຮັກສາຄວາມສະອາດ ແລະ ເກັບຜົນງານໄປມ້ຽນໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວມຖືກຕ້ອງໃນການບອກຂັ້ນຕອນການພົ່ນສີໃສ່ຮູບພາບປຶ້ມ.
2. ຄວາມຈົບງາມໃນການພົ່ນສີໃສ່ຮູບພາບປຶ້ມ.
3. ຄວາມລະມັດລະວັງໃນການພົ່ນສີ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນຊອກຫາເພື່ອນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນຊອກຫາເພື່ອນໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນຊອກຫາເພື່ອນໄດ້ຖືກຕ້ອງ.
3. ມີຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ຊອກຫາເພື່ອນ.

### III. ສື່ການຮຽນ-ການສອນ

1. ຜ້າ ແລະ ກະແຊັກ.
2. ບົດເພງ ຫ້ອງອ່ານ.
3. ວິທີຫຼິ້ນ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຫ້ອງອ່ານ ປະກອບທ່າທາງ.
2. ນາຍຄູສະເໜີການຫຼິ້ນແບບຫຼິ້ນຊອກຫາເພື່ອນ ແລະ ສາທິດວິທີຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນຊອກຫາເພື່ອນ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນຊອກຫາເພື່ອນ.
5. ສຶກສາອົບຮົມເດັກນ້ອຍ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະມັດລະວັງໃນເວລາຍ່າງ ຫຼັງຈາກຫຼິ້ນແລ້ວ ອະນາໄມຕີນ ແລະ ມືໃຫ້ສະອາດ.
6. ເດັກນ້ອຍຢືນເອົາມືທັງສອງເບື້ອງຍັດງ່ອນແລ້ວງວກຊ້າຍ-ງວກຂວາຊ້າໆ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນຊອກຫາເພື່ອນ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງອ່ານໄດ້ຢ່າງຖືກຕ້ອງ.
3. ແບ່ງປັນເກມໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງອ່ານ: ປຶ້ມນິທານ, ໂຕະ, ຕັ່ງ, ຕູ້ໃສ່ປຶ້ມ, ບັດເຂົ້າຫ້ອງອ່ານ ແລະ ປຶ້ມຮູບພາບ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງອ່ານ: ປຶ້ມນິທານ, ໂຕະ, ຕັ່ງ, ຕູ້ໃສ່ປຶ້ມ, ບັດເຂົ້າຫ້ອງອ່ານ ແລະ ປຶ້ມຮູບພາບ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມລເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ຫ້ອງຮຽນ: ສໍ, ປຶ້ມ, ໂຕະ, ຕັ່ງ, ຕຸກກະຕາ, ໄມ້ບັ້ອກ.
3. ບົດເພງ ຫ້ອງອ່ານ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຫ້ອງອ່ານ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງອ່ານ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການແບ່ງປັນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງອ່ານ.
3. ການແບ່ງປັນເກມໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຕໍ່ບ້ຼອກເປັນໂຕະ, ຕັ່ງ, ປຶ້ມ ແລະ ພິມຕົວພະຍັນຊະນະໃສ່ອ່າງດິນຊາຍໄດ້ຖືກຕ້ອງ.
3. ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງອ່ານ ແລະ ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງຮຽນໄດ້ຖືກຕ້ອງ.
4. ເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນທີ່ກຳນົດ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
2. ການຕໍ່ບ້ຼອກເປັນໂຕະ, ຕັ່ງ, ປຶ້ມ ແລະ ພິມຕົວພະຍັນຊະນະໃສ່ອ່າງດິນຊາຍ: ກ, ນ, ງ, ດ, ບ, ມ, ຍ, ວ.
3. ການຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງອ່ານ: ປຶ້ມນິທານ, ໂຕະ, ຕັ່ງ, ຕູ້ໃສ່ປຶ້ມ, ບັດເຂົ້າຫ້ອງອ່ານ ແລະ ປຶ້ມຮູບພາບ; ການຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ຫ້ອງຮຽນ: ສໍ, ປຶ້ມ, ໂຕະ, ຕັ່ງ, ຕຸກກະຕາ, ໄມ້ບ້ຼອກ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ຊຸດໄມ້ບ້ຼອກ ຫຼື ບ້ຼອກປຼາສະຕິກ, ແບບພິມຕົວພະຍັນຊະນະ ກ, ນ, ງ, ດ, ບ, ມ, ຍ, ວ ແລະ ອ່າງດິນຊາຍ.
2. ມຸມເກມການສຶກສາ: ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງອ່ານ: ປຶ້ມນິທານ, ໂຕະ, ຕັ່ງ, ຕູ້ໃສ່ປຶ້ມ, ບັດເຂົ້າຫ້ອງອ່ານ ແລະ ປຶ້ມຮູບພາບ; ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ຫ້ອງຮຽນ: ສໍ, ປຶ້ມ, ໂຕະ, ຕັ່ງ, ຕຸກກະຕາ, ໄມ້ບ້ຼອກ.
3. ບົດເພງ ຫ້ອງອ່ານ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຫ້ອງອ່ານ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນທີ່ກຳນົດໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຕໍ່ບ້ຼອກເປັນໂຕະ, ຕັ່ງ, ປຶ້ມ ແລະ ພິມຕົວພະຍັນຊະນະໃສ່ອ່າງດິນຊາຍ.
3. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງອ່ານ ແລະ ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນຫ້ອງຮຽນ.
4. ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນທີ່ກຳນົດໄວ້.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ລ້າງຖ້ວຍ, ເຊັດຖູໂຕະ, ຈັບບ່ວງຕັກແກງ, ຍົກຈອກດື່ມນ້ຳ.

### III. ສື່ການຮຽນ-ການສອນ

1. ເຊືອກ.
2. ທ່າຫັດກາຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຂາ: ທ່າແຂນຂວາໄຂ່ວແຂນຊ້າຍ, ແຂນຊ້າຍໄຂ່ວແຂນຂວາ ແລະ ທ່າຢືນຂາດຽວຍົກຂາຊ້າຍຄູ້ເຂົ້າທາງຫຼັງພ້ອມທັງເອົາມືຈັບໄວ້ (ຜັດປ່ຽນເບື້ອງ).
2. ໃຫ້ເດັກນ້ອຍຍ່າງຊິກແຊັກຢຽບເສັ້ນເຊືອກ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນອນຫງາຍວາຫຼັບຕາແຂນອອກ, ພ້ອມທັງຈ່າງຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການຟັງຄຳສັ່ງຂອງນາຍຄູດ້ວຍຄວາມຕັ້ງໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ຄວາມຕັ້ງໃຈໃນການຟັງຄຳສັ່ງຂອງນາຍຄູ.

# ກິດຈະກຳວົງມົນ

## ຫົວຂໍ້: ຫ້ອງອາຫານ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກເຄື່ອງໃຊ້, ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດຮັກສາຫ້ອງອາຫານ ໄດ້ຖືກຕ້ອງ.
2. ເລົ່າຄຳຄ່ອງ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດຄຳຄ່ອງໄດ້ຊັດເຈນ.
3. ນັບຮູບພາບເຄື່ອງໃຊ້ໃນຫ້ອງອາຫານແຕ່ 1-5 ໄດ້ຖືກຕ້ອງ
4. ປະຕິບັດຕົວຈິງໃນການເກັບມ້ຽນຖ້ວຍ ແລະ ບ່ວງ.

## II. ເນື້ອໃນຕົ້ນຕໍ

1. ເຄື່ອງໃຊ້ໃນຫ້ອງອາຫານ, ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດຮັກສາ.
- ເຄື່ອງໃຊ້ໃນຫ້ອງອາຫານ: ໂຕະ, ຕັ່ງ, ຖ້ວຍ, ບ່ວງ, ຈອກ, ຕຸກນ້ຳດື່ມ ແລະ ອື່ນໆ.
- ຄຸນປະໂຫຍດຂອງຫ້ອງອາຫານ: ເປັນບ່ອນສຳລັບເດັກກິນເຂົ້າຮ່ວມກັນ.
- ລະບຽບໃນຫ້ອງອາຫານ: ເຂົ້າຫ້ອງອາຫານໃຫ້ຖືກຕາມເວລາ; ນັ່ງໃຫ້ຖືກບ່ອນ; ກິນອາຫານບໍ່ໃຫ້ມີສຽງດັງ; ບໍ່ຍາດກິນຂອງໝູ່, ບໍ່ບິນແຊວ,ບໍ່ຢອກໝູ່, ຖິ້ມຂີ້ເຫຍື້ອ ແລະ ເສດອາຫານໃຫ້ຖືກບ່ອນ.
- ການບົວລະບັດຮັກສາ: ລ້າງຖ້ວຍ, ບ່ວງ, ຈອກໃຫ້ສະອາດ, ເກັບມ້ຽນໃຫ້ຖືກບ່ອນ, ເຊັດຖູໂຕະ, ຕັ່ງໃຫ້ສະອາດ ແລະ ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ.

2. ການເລົ່າຄຳຄ່ອງ ຫ້ອງອາຫານສະອາດ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດຄຳຄ່ອງ
- ຄຳສັບ: ໂຕະ, ຕັ່ງ, ຖ້ວຍ, ບ່ວງ, ຈານ, ຈອກ, ຊາມ, ປອດໄພ, ອາຫານ, ມີດວງຮຽບ.
- ປະໂຫຍກ: ຫ້ອງອາຫານມີເຄື່ອງໃຊ້ຫຼາຍຢ່າງ, ຫ້ອງອາຫານມີຖ້ວຍບ່ວງຈອກຊາມ, ພວກຫຼານນັ່ງເປັນລະບຽບ, ພວກຫຼານເກັບມ້ຽນຈານຫຼັງຈາກກິນແລ້ວ.

3. ການນັບຮູບພາບເຄື່ອງໃຊ້ໃນຫ້ອງອາຫານແຕ່ 1-5.

## III. ສື່ການຮຽນ-ການສອນ

1. ໂຕະ, ຕັ່ງ, ຖ້ວຍ, ບ່ວງ,ຈອກ, ຕຸກນ້ຳດື່ມ, ຊາມ, ນ້ຳ, ຝອຍລ້າງຖ້ວຍ, ກະຕ່າຂີ້ເຫຍື້ອ; ຮູບພາບ: ຖ້ວຍ, ບ່ວງ 1-5.
2. ບົດຄຳຄ່ອງ ຫ້ອງອາຫານສະອາດ ເບິ່ງປື້ມຄູ່ມືຄູ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນ ບົດຄຳຄ່ອງ.
2. ໃຫ້ເດັກນ້ອຍສັງເກດໂຕະ, ຕັ່ງ, ຖ້ວຍ, ບ່ວງ,ຈອກ, ຕຸກນ້ຳດື່ມ, ຊາມ, ນ້ຳ, ຝອຍລ້າງຖ້ວຍ, ກະຕ່າຂີ້ເຫຍື້ອ, ສົນທະນາກ່ຽວກັບເຄື່ອງໃຊ້ໃນຫ້ອງອາຫານ, ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດຮັກສາ.
3. ໃຫ້ເດັກນ້ອຍສັງເກດຮູບພາບ: ຖ້ວຍ, ບ່ວງແລ້ວນັບຈຳນວນແຕ່ 1-5.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງການບົວລະບັດຮັກສາຫ້ອງອາຫານ.
5. ໃຫ້ເດັກນ້ອຍເວົ້າຄືນເຄື່ອງໃຊ້ໃນຫ້ອງອາກຫານ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບລະບຽບໃນການເຂົ້າຫ້ອງອາຫານ ແລະ ການບົວລະບັດຮັກສາເຄື່ອງໃຊ້ໃນຫ້ອງອາຫານ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກເຄື່ອງ,ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດຮັກສາຫ້ອງອາຫານ.
2. ຄວາມຊັດເຈນໃນການເລົ່າຄຳຄ່ອງ, ເວົ້າຄຳສັບ ແລະ ປະໂຫຍກ ຕາມຄຳຄ່ອງ.
3. ຄວາມຖືກຕ້ອງໃນການນັບຈຳນວນ ຮູບພາບແຕ່ 1-5.
4. ການປະຕິບັດຕົວຈິງໃນການເກັບມ້ຽນຖ້ວຍ ແລະ ບ່ວງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕິດພະຍັນຊະນະ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຕິດພະຍັນຊະນະໄດ້ຖືກຕ້ອງ.
2. ຕິດພະຍັນຊະນະໄດ້ຄ້າຍຄື.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຕິດ.

## II. ເນື້ອໃນຕົ້ນຕໍ

ການຕິດພະຍັນຊະນະ: ຕ, ຖ, ທ. ນ, ບ, ປ, ຜ, ຝ, ພ.

## III. ສື່ການຮຽນ-ການສອນ

1. ເຈ້ຍຂາວ, ກາວ, ເຈ້ຍແບບຕົວພະຍັນຊະນະ: ຕ, ຖ, ທ. ນ, ບ, ປ, ຜ, ຝ, ພ.
2. ບົດຄຳຄ່ອງ ຫ້ອງອາຫານສະອາດ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫ້ອງອາຫານສະອາດ ປະກອບທ່າທາງ
2. ໃຫ້ເດັກນ້ອຍສັງເກດແບບຕິດພະຍັນຊະນະ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຕິດພະຍັນຊະນະ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຕິດພະຍັນຊະນະ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຕິດພະຍັນຊະນະ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ຄວາມອົດທົນ ແລະ ເກັບມ້ຽນອຸປະກອນໄວ້.

## V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຕິດພະຍັນຊະນະ.
2. ຄວາມຄ້າຍຄືໃນການຕິດພະຍັນຊະນະ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຕິດພະຍັນຊະນະ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນຜອງນ້ຳ, ຮ່ອນຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນນ້ຳ-ຫຼິ້ນຊາຍໄດ້ຖືກຕ້ອງ.
2. ເຝິກກ້າມຊີ້ນມືໃຫ້ມີຄວາມແຂງແຮງໃນເວລາຜອງນ້ຳ ແລະ ຮ່ອນຊາຍ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນຜອງນ້ຳ, ຮ່ອນຊາຍ.

### III. ສື່ການຮຽນ-ການສອນ

1. ຄຸນ້ຳ, ໂອ, ແກ້ວ, ຊາມ, ຈອກ, ກະປ໋ອງ, ອ່າງຊາຍ, ກະຕຸກເປົ່າ, ຊວ້ານນ້ອຍ, ເຂີງນ້ອຍ ແລະ ຜາຖາດ.
2. ບົດຄຳຄ່ອງ ຫ້ອງອາຫານສະອາດ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫ້ອງອາຫານສະອາດ ປະກອບທ່າທາງ.
2. ນາຍຄູສະເໜີການຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງນ້ຳ, ຮ່ອນຊາຍ ແລະ ສາທິດວິທີຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງນ້ຳ, ຮ່ອນຊາຍ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນນ້ຳ-ຫຼິ້ນຊາຍ: ຜອງນ້ຳ, ຮ່ອນຊາຍ,
5. ສຶກສາອົບຮົມເດັກນ້ອຍຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະມັດລະວັງບໍ່ວ່ານດິນຊາຍ ຫຼື ທົດນ້ຳໃສ່ກັນ, ບໍ່ຍາດເຄື່ອງຫຼິ້ນກັນ, ຫຼັງຈາກຫຼິ້ນແລ້ວອະນາໄມຕີນ, ມືໃຫ້ສະອາດ ແລະ ຊ່ວຍກັນເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍຢືນຂຶ້ນແລ້ວເອົາມືຄ້ຳແອວບິດໄປຂ້າງຊ້າຍ-ຂ້າງຂວາຊ້າໆ ແລ້ວປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມແຂງແຮງຂອງກ້າມຊີ້ນມືໃນເວລາຜອງນ້ຳ, ຮ່ອນຊາຍ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມສຶກສາລາຍລະອຽດເຄື່ອງໃຊ້ໃນຫ້ອງອາຫານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ສຶກສາລາຍລະອຽດຮູບພາບເຄື່ອງໃຊ້ໃນຫ້ອງອາຫານໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການສຶກສາລາຍລະອຽດຮູບພາບເຄື່ອງໃຊ້ໃນຫ້ອງອາຫານ: ໂຕະ, ຕັ່ງ, ຖ້ວຍ, ບ່ວງ,ຈອກ ແລະ ຕຸກນ້ຳດື່ມ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມສຶກສາລາຍລະອຽດຮູບພາບເຄື່ອງໃຊ້ໃນຫ້ອງອາຫານ: ໂຕະ, ຕັ່ງ, ຖ້ວຍ, ບ່ວງ,ຈອກ ແລະ ຕຸກນ້ຳດື່ມ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບພາບເຄື່ອງໃຊ້ໃນຫ້ອງອ່ານ: ປຶ້ມນິທານ, ໂຕະ, ຕັ່ງ, ຕູ້ໃສ່ປຶ້ມ, ບັດເຂົ້າຫ້ອງອ່ານ ແລະ ປຶ້ມຮູບພາບ
3. ບົດຄຳຄ່ອງ ຫ້ອງອາຫານສະອາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫ້ອງອາຫານສະອາດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມສຶກສາລາຍລະອຽດຮູບພາບ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### I. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການສຶກສາລາຍລະອຽດຮູບພາບເຄື່ອງໃຊ້ໃນຫ້ອງອາຫານ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນບົດບາດສົມມຸດເປັນແມ່ລ້ຽງ, ພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າຢ່າງມ່ວນຊື່ນ.
3. ຕິດພະຍັນຊະນະ ແລະ ປັ້ນດິນເປັນຮູບຕໍຕ່າງລະດັບໄດ້ຖືກຕ້ອງ.
4. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
2, ການຫຼິ້ນບົດບາດສົມມຸດເປັນແມ່ລ້ຽງປຸງແຕ່ງອາຫານ ແລະ ເສີບອາຫານ, ຫຼິ້ນເປັນພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າຂາຍອາຫານ ແລະ ລູກຄ້າຊື້ອາຫານ.
3. ການຕິດພະຍັນຊະນະ: ຕ, ຖ, ທ. ນ, ບ, ປ, ຜ, ຝ, ພ, ປັ້ນດິນເປັນຮູບຕໍຕ່າງ ລະດັບ.

### III. ສື່ການຮຽນ-ການສອນ

1. ມຸມບົດບາດສົມມຸດ: ເຄື່ອງໃຊ້ໃນເຮືອນຄົວຂອງຈິງ ຫຼື ຈຳລອງ: ຖ້ວຍ, ບ່ວງ, ໝໍ້, ຈອງ, ເຄື່ອງຈຳລອງ: ຊີ້ນ, ຜັກ, ປາ, ໝາກໄມ້.
2. ມຸມສິລະປະສ້າງສັນ: ດິນປັ້ນ, ຜ້າຮອງປັ້ນ, ເສື້ອກັນເປື້ອນ, ຊາມນ້ຳ, ຜ້າເຊັດມື, ສະບູ, ແບບຕໍຕ່າງລະດັບທີ່ປັ້ນແລ້ວ, ກາວ, ເຈ້ຍຂາວ, ຕົວພະຍັນຊະນະ: ຕ, ຖ, ທ. ນ, ບ, ປ, ຜ, ຝ, ພ.
3. ບົດຄຳຄ່ອງ ຫ້ອງອາຫານສະອາດ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ຫ້ອງອາຫານສະອາດ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິ ລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມບົດບາດສົມມຸດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນບົດບາດສົມມຸດເປັນແມ່ລ້ຽງ, ພໍ່ຄ້າ, ແມ່ຄ້າ ແລະ ລູກຄ້າ.
3. ຄວາມຖືກຕ້ອງໃນການປັ້ນດິນເປັນຮູບຕໍຕ່າງລະດັບ ແລະ ຕິດຕົວພະຍັນຊະນະ.
4. ການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດລຳລ່ອງ ຫ້ອງອາຫານສະອາດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ ຫ້ອງອາຫານສະອາດ.

### III. ສື່ການຮຽນ-ການສອນ

1. ຢາງລົດ.
2. ບົດລຳລ່ອງ ຫ້ອງອາຫານສະອາດ.
3. ທ່າຫັດກາຍະບໍລິຫານແຂນ ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານແຂນ ແລະ ຕີນ: ທ່າຍົກແຂນຂຶ້ນເທິງຫົວ ແລະ ທ່າໝູນຂໍ່ຕີນ.
2. ໃຫ້ເດັກນ້ອຍໂດດລົງຢາງລົດ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາ, ເອົາມືທັງສອງຄ່ຳພື້ນທາງຫຼັງ, ເງີຍໜ້າຫາຍໃຈເຂົ້າ-ອອກ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດລຳລ່ອງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ຫ້ອງນ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກເຄື່ອງໃຊ້, ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດຮັກສາຫ້ອງນ້ຳໄດ້ຖືກຕ້ອງ.
2. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.
3. ປະຕິບັດຕົວຈິງໃນການລ້າງຫ້ອງນ້ຳ.

### II. ເນື້ອໃນຕົ້ນຕໍ

1. ເຄື່ອງໃຊ້ໃນຫ້ອງນ້ຳ, ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດຮັກສາ:
- ຊື່ເຄື່ອງໃຊ້ໃນຫ້ອງນ້ຳ: ຄຸ; ໂອ; ສະບູ; ຢາຖູແຂ້ວ; ຟອຍຖູແຂ້ວ; ນ້ຳຢາ ແລະ ຟອຍຖູພື້ນ.
- ຄຸນປະໂຫຍດຂອງຫ້ອງນ້ຳ: ເປັນບ່ອນອາບນ້ຳ, ລ້າງໜ້າ, ຖູແຂ້ວ, ຖ່າຍໜັກ ແລະ ຖ່າຍເບົາ.
- ການປະຕິບັດກົດລະບຽບໃນການເຂົ້າຫ້ອງນ້ຳ: ເຂົ້າຫ້ອງນ້ຳເທື່ອລະຄົນ, ກ່ອນຈະຖ່າຍໜັກຖອກນ້ຳໃສ່ ຫົວວິດກ່ອນ, ຖ່າຍແລ້ວເຊັດ ຫຼື ລ້າງກົ້ນໃຫ້ສະອາດ ແລະ ປິດກັອກນ້ຳທຸກຄັ້ງກ່ອນອອກຈາກຫ້ອງນ້ຳ.
- ການບົວລະບັດຮັກສາຫ້ອງນ້ຳ: ໝັ່ນລ້າງຫົວວິດ ຫຼື ຊັກໂຄກໃຫ້ສະອາດ, ເກັບມ້ຽນເຄື່ອງໃຊ້ເປັນລະບຽບ ແລະ ຖິ້ມຂີ້ເຫຍື້ອໃຫ້ຖືກບ່ອນ.

2. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ:
- ຄຳສັບ: ຄຸ; ໂອ; ສະບູ; ຢາຖູແຂ້ວ; ຟອຍຖູແຂ້ວ; ນ້ຳຢາຖູພື້ນ; ຟອຍຖູພື້ນ; ລ້າງໜ້າ, ຖູແຂ້ວ.
- ປະໂຫຍກ: ເດັກນ້ອຍຖູແຂ້ວ, ເດັກນ້ອຍລ້າງໜ້າ, ເດັກນ້ອຍອາບນ້ຳ, ເດັກນ້ອຍເຂົ້າຫ້ອງນ້ຳ, ເດັກນ້ອຍ ລ້າງວິດ, ເດັກນ້ອຍປິດກັອກນ້ຳ.

### III. ສື່ການຮຽນ-ການສອນ

1. ຫ້ອງນ້ຳ, ຄຸ, ໂອ, ສະບູ, ຢາຖູແຂ້ວ, ຟອຍຖູແຂ້ວ, ຟອຍຖູພື້ນຫ້ອງນ້ຳ.
2. ຮູບພາບ: ເດັກນ້ອຍຖູແຂ້ວ, ເດັກນ້ອຍລ້າງໜ້າ, ເດັກນ້ອຍອາບນ້ຳ, ເດັກນ້ອຍເຂົ້າຫ້ອງນ້ຳ, ເດັກນ້ອຍ ລ້າງວິດ, ເດັກນ້ອຍປິດກັອກນ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງໃຊ້ໃນຫ້ອງນ້ຳທີ່ເດັກນ້ອຍຮູ້ຈັກ.
2. ໃຫ້ເດັກນ້ອຍສັງເກດ ຄຸ, ໂອ, ສະບູ, ຢາຖູແຂ້ວ, ຟອຍຖູແຂ້ວ, ຟອຍຖູພື້ນຫ້ອງນ້ຳ, ສົນທະນາກ່ຽວກັບ ເຄື່ອງໃຊ້ໃນຫ້ອງນ້ຳ, ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດຮັກສາ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງກ່ຽວກັບການລ້າງຫ້ອງນ້ຳ.
5. ໃຫ້ເດັກນ້ອຍເວົ້າຄືນຊື່ເຄື່ອງໃຊ້ໃນຫ້ອງນ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການປະຕິບັດລະບຽບໃນການເຂົ້າຫ້ອງນ້ຳ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກເຄື່ອງໃຊ້, ຄຸນປະໂຫຍດ, ການປະຕິບັດລະບຽບ ແລະ ການບົວລະບັດ ຮັກສາຫ້ອງນ້ຳ.
2. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຮູບພາບ.
3. ການປະຕິບັດຕົວຈິງໃນການລ້າງຫ້ອງນ້ຳ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນສະຫຼະ ິ ທີ່ມີຢູ່ໃນຄຳສັບ ຕາມຮອຍຈ້ຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຂີດຂຽນສະຫຼະ ິ ທີ່ມີຢູ່ໃນຄຳສັບໄດ້ຖືກຕ້ອງ.
2. ຂີດຂຽນສະຫຼະ ິ ທີ່ມີຢູ່ໃນຄຳສັບ ຕາມຮອຍຈ້ຳໄດ້ຈົບງາມ.
3. ມີຄວາມອົດທົນໃນການຂີດຂຽນສະຫຼະ ິ ທີ່ມີຢູ່ໃນຄຳສັບ.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນສະຫຼະ ິ ທີ່ມີຢູ່ໃນຄຳສັບ: ຈືນ, ພືນ, ຢືນ, ມືດ,  ຄືບ ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ສໍດຳ ແລະ ຢາງລຶບ.
2. ປຶ້ມບົດເຝິກຫັດພາສາລາວເຫຼັ້ມທີ 1 ຫຼື ເຈ້ຍຂີດຂຽນສະຫຼະິ ທີ່ມີຢູ່ໃນຄຳສັບ: ຈືນ, ພືນ, ຢືນ, ມືດ, ຄືບ ທີ່ມີຮອຍຈ້ຳ.
2. ເຈ້ຍສະຫຼະ ິ ທີ່ມີຢູ່ໃນຄຳສັບ: ຈືນ, ພືນ, ຢືນ, ມືດ,  ຄືບ ທີ່ຂີດຂຽນແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງຂີດຂຽນຕົວພັງສີຢູ່ເທິງກາງຫາວ ແລະ ສັ່ນຄໍ່ມື.
2. ໃຫ້ເດັກນ້ອຍສັງເກດສະຫຼະ ິ ແລ້ວອ່ານຄຳສັບ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຂີດຂຽນສະຫຼະ ິ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຂີດຂຽນສະຫຼະ ິ ທີ່ມີຢູ່ໃນຄຳສັບ: ຈືນ, ພືນ, ຢືນ, ມືດ, ຄືບ ຕາມຮອຍຈ້ຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຂີດຂຽນສະຫຼະ ິ ທີ່ມີຢູ່ໃນຄຳສັບ: ຈືນ, ພືນ, ຢືນ, ມືດ,  ຄືບຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນຂີດ, ຄວາມຈົບງາມ ແລະ ເກັບມ້ຽນເກັບຜົນງານໄປໄວ້.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກບອກຂັ້ນຕອນການຂີດຂຽນສະຫຼະ ິ ທີ່ມີຢູ່ໃນຄຳສັບ.
2. ຄວາມຈົບງາມໃນການຂີດຂຽນສະຫຼະ ິ ທີ່ມີຢູ່ໃນຄຳສັບ.
3. ຄວາມອົດທົນໃນການຂີດຂຽນສະຫຼະ ິ ທີ່ມີຢູ່ໃນຄຳສັບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນເຕາະບານເຂົ້າປະຕູ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນເຕາະບານເຂົ້າປະຕູໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນເຕະບານເຂົ້າປະຕູໄດ້ຖືກຕ້ອງ.
3. ປອດໄພໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນເຕາະບານເຂົ້າປະຕູ.

### III. ສື່ການຮຽນ-ການສອນ

1. ໝາກບານ, ຕາໜ່າງ ແລະ ໝາກຫວິດ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຍ່າງເປັນແຖວວົງມົນພ້ອມທັງຕົບມື.
2. ນາຍຄູສະເໜີ ແບບຫຼິ້ນແຂ່ງຂັນເຕາະບານເຂົ້າປະຕູ ແລະ ສາທິດວິທີຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນເຕາະບານເຂົ້າປະຕູ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນເຕາະບານເຂົ້າປະຕູ.
5. ສຶກສາອົບຮົມເດັກນ້ອຍຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະວັງບໍ່ໃຫ້ເຕະບານໃສ່ກັນ, ເວລາແລ່ນບໍ່ຍູ້ກັນ ແລະ ບໍ່ດຶງກັນ ຫຼັງຈາກຫຼິ້ນແລ້ວອະນາໄມຕີນ, ມືໃຫ້ສະອາດ ແລະ ຊ່ວຍກັນເກັບມ້ຽນອຸປະກອນ.
6. ໃຫ້ເດັກນ້ອຍນັ່ງລົງຢຽດຂາອອກແລ້ວທົດຂາເຂົ້າຊ້າໆ ແລ້ວປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນເຕະບານເຂົ້າປະຕູ.
3. ຄວາມປອດໄພໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບກ້ອນຈະຕຸລັດ, ກ້ອນສີ່ແຈ ແລະ ກ້ອນສາມແຈ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບກ້ອນຈະຕຸລັດ, ກ້ອນສີ່ແຈ ແລະ ກ້ອນສາມແຈໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບກ້ອນຈະຕຸລັດ, ກ້ອນສີ່ແຈ ແລະ ກ້ອນສາມແຈ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັບຮູບກ້ອນຈະຕຸລັດ, ກ້ອນສີ່ແຈ ແລະ ກ້ອນສາມແຈ (ສໍາລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມສຶກສາລາຍລະອຽດຮູບພາບເຄື່ອງໃຊ້ໃນຫ້ອງອາຫານ: ໂຕະ, ຕັ່ງ, ຖ້ວຍ, ບ່ວງ, ຈອກ ແລະ ຕຸກນໍ້າດື່ມ.

### IV. ກິດຈະກໍາການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງໃຊ້ໃນຫ້ອງນໍ້າ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນໍາ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ ແລະ ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບກ້ອນຈະຕຸລັດ, ກ້ອນສີ່ແຈ ແລະ ກ້ອນສາມແຈ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບກ້ອນຈະຕຸລັດ, ກ້ອນສີ່ແຈ ແລະ ກ້ອນສາມແຈ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ, ມຸມວິທະຍາສາດ ແລະ ທຳມະຊາດ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເກມຈັບຄູ່ທີ່ຄືກັບຮູບກ້ອນຈະຕຸລັດ, ກ້ອນສີ່ແຈ ແລະ ກ້ອນສາມແຈ ແລະ ເກມການສຶກສາລາຍລະອຽດຮູບພາບເຄື່ອງໃຊ້ໃນຫ້ອງອາຫານໄດ້ຖືກຕ້ອງ.
3. ທົດລອງການຈົມ-ຟູ ຂອງວັດຖຸ, ບອກການຈະເລີນເຕີບໃຫຍ່ຂອງຕົ້ນດອກໄມ້ ແລະ ຫົດນ້ຳຕົ້ນດອກໄມ້ໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເກມການສຶກສາ ແລະ ມຸມວິທະຍາສາດທຳມະຊາດ.
2. ການຫຼິ້ນເກມຈັບຄູ່ທີ່ຄືກັບຮູບກ້ອນຈະຕຸລັດ, ກ້ອນສີ່ແຈ ແລະ ກ້ອນສາມແຈ; ຫຼິ້ນເກມສຶກສາລາຍລະອຽດຮູບພາບເຄື່ອງໃຊ້ໃນຫ້ອງອາຫານ: ໂຕະ, ຕັ່ງ, ຖ້ວຍ, ບ່ວງ, ຈອກ ແລະ ຕຸກນ້ຳດື່ມ.
3. ສັງເກດ ແລະ ທົດລອງການຈົມ-ຟູ ຂອງວັດຖຸ: ເອົາຫຼອດຢາສີຟັນ ແລະ ໂອຢາງວາງລົງຊາມນ້ຳ; ສັງເກດການຈະເລີນເຕີບໃຫຍ່ຂອງຕົ້ນດອກໄມ້ ແລະ ຫົດນ້ຳຕົ້ນດອກໄມ້.

### III. ສື່ການຮຽນ-ການສອນ

1. ມຸມເກມການສຶກສາ: ແຜ່ນເກມຈັບຄູ່ທີ່ຄືກັບຮູບກ້ອນຈະຕຸລັດ, ກ້ອນສີ່ແຈ ແລະ ກ້ອນສາມແຈ; ແຜ່ນເກມສຶກສາລາຍລະອຽດຮູບພາບເຄື່ອງໃຊ້ໃນຫ້ອງອາຫານ: ໂຕະ, ຕັ່ງ, ຖ້ວຍ, ບ່ວງ, ຈອກ ແລະ ຕຸກນ້ຳດື່ມ.
2. ມຸມວິທະຍາສາດ ແລະ ທຳມະຊາດ: ຫຼອດຢາສີຟັນ, ໂອຢາງ, ຊາມນ້ຳ, ເຕົ້າດອກໄມ້ ແລະ ບົວນ້ອຍ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເກມການສຶກສາ, ມຸມວິທະຍາສາດ ແລະ ທຳມະຊາດ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເກມການສຶກສາ, ມຸມວິທະຍາສາດ ແລະ ທຳມະຊາດ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຫຼິ້ນເກມຈັບຄູ່ທີ່ຄືກັບຮູບກ້ອນຈະຕຸລັດ, ກ້ອນສີ່ແຈ ແລະ ກ້ອນສາມແຈ ແລະ ເກມການສຶກສາລາຍລະອຽດຮູບພາບເຄື່ອງໃຊ້ໃນຫ້ອງອາຫານ.
3. ການທົດລອງການຈົມ-ຟູຂອງວັດຖຸ ແລະ ຄວາມຖືກຕ້ອງໃນການບອກການຈະເລີນເຕີບໃຫຍ່ຂອງຕົ້ນດອກໄມ້ ແລະ ຫົດນ້ຳຕົ້ນດອກໄມ້.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ຈຸດປະສົງສຳລັບ ອາທິດທີ 4

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດຄຳຄ່ອງຢ່າງມ່ວນຊື່ນ.
3. ສະແດງທ່າທາງຕາມສັນຍານ ຍົກຮູບພາບໄດ້ຖືກຕ້ອງ.
4. ສະແດງທ່າທາງຕາມສຽງສັນຍານ ຕີບກອງໄດ້ຖືກຕ້ອງ.
5. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
6. ປອດໄພໃນເວລາສະແດງທ່າທາງ.
7. ກ້າສະແດງອອກໃນເວລາສະແດງທ່າທາງ.
8. ອົດທົນໃນເວລາສະແດງທ່າທາງ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສ່ວນປະກອບ, ຄຸນປະໂຫຍດ ແລະ ການບົວລະບັດເດີ່ນໂຮງຮຽນໄດ້ຖືກຕ້ອງ.
2. ປະຕິບັດຕົວຈິງໃນການເກັບຂີ້ເຫຍື້ອ ແລະ ຫົດນ້ຳຕົ້ນໄມ້.
3. ເລົ່າຄຳຄ່ອງ, ເວົ້າເປັນຄຳສັບ ແລະ ປະໂຫຍກຕາມເນື້ອໃນຄຳຄ່ອງ, ບົດນິທານ, ຮູບພາບໄດ້ຊັດເຈນ.
4. ບອກຜົນການປຽບທຽບຄວາມຍາວໂດຍໃຊ້ຄຳວ່າ: ຍາວກວ່າ, ສັ້ນກວ່າ, ຍາວເທົ່າກັນໄດ້ຖືກຕ້ອງ.
5. ມີຄວາມມ່ວນຊື່ນໃນການຮ້ອງເພງ ແລະ ມີມາລະຍາດໃນການຟັງນິທານ.
6. ມີຄວາມດຸໝັ່ນໃນການຮັກສາຄວາມສະອາດ.
7. ບອກຊື່, ຄຸນປະໂຫຍດ, ການບົວລະບັດຮັກສາເຄື່ອງຫຼິ້ນໃນເດີ່ນ ແລະ ອຸປະກອນຫຼິ້ນນ້ຳ, ຫຼິ້ນຊາຍໄດ້ຖືກຕ້ອງ.
8. ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ x າ, x ິ, x ີ ໄດ້ຊັດເຈນ.
9. ມີຄວາມປອດໄພໃນການຫຼິ້ນເຄື່ອງຫຼິ້ນໃນເດີ່ນ.
10. ບອກຄຸນປະໂຫຍດ ແລະ ການປົກປັກຮັກສາເວທີການສະແດງໄດ້ຖືກຕ້ອງ.
11. ເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບໄດ້ຊັດເຈນ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຕັດ-ຕິດຮູບພາບຮົ້ວໂຮງຮຽນ, ແຕ້ມຮູບພາບດອກໄມ້ຕາມຮອຍຈ້ຳ, ເຈ້ຍເປັນຮູບທ່ອນກົມ, ແຕ້ມຮູບພາບ: ຄຸ, ຊວ້ານຕາມຮອຍຈ້ຳ ແລະ ບອກຂັ້ນຕອນການຕິດເຈ້ຍຕໍ່ກັນເປັນພວງມະໄລໄດ້ຖືກຕ້ອງ.
2. ຕັດ, ຕິດຮູບພາບຮົ້ວໂຮງຮຽນ ແລະ ຕັດ, ຕິດ, ຕໍ່ເຈ້ຍຕໍ່ກັນເປັນພວງມະໄລໄດ້ຈົບງາມ.
3. ແຕ້ມຮູບພາບດອກໄມ້ຕາມຮອຍຈ້ຳ ແລະ ແຕ້ມຮູບພາບ: ຄຸ, ຊວ້ານຕາມຮອຍຈ້ຳໄດ້ຈົບງາມ.
4. ກໍ້ເຈ້ຍເປັນຮູບທ່ອນກົມໄດ້ຈົບງາມ.
5. ມີຄວາມອົດທົນໃນການຕັດ-ຕິດຮູບພາບຮົ້ວໂຮງຮຽນ, ຕິດເຈ້ຍຕໍ່ກັນເປັນພວງມະໄລ, ແຕ້ມຮູບພາບດອກໄມ້ຕາມຮອຍຈ້ຳ, ກໍ້ເຈ້ຍເປັນຮູບທ່ອນກົມ ແລະ ແຕ້ມຮູບພາບ: ຄຸ, ຊວ້ານຕາມຮອຍຈ້ຳ.

# ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນກະຕ່າຍຍາດຄອກ, ຫຼິ້ນແບບຫຼິ້ນແຂ່ງຂັນຍຽດພາກປມເປົ້າ, ຫຼິ້ນດິນຊາຍ: ປັ້ນດິນຊາຍເປັນຮູບຕ່າງໆຕາມໃຈ, ຫຼິ້ນແບບຫຼິ້ນເຕັ້ນເຊືອກ ແລະ ຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆ.
2. ຫຼິ້ນແບບຫຼິ້ນກະຕ່າຍຍາດຄອກ, ຫຼິ້ນແບບຫຼິ້ນແຂ່ງຂັນຍຽດພາກປຸມເປົ້າ, ຫຼິ້ນດິນຊາຍ: ປັ້ນດິນາຍເປັນຮູບຕ່າງໆຕາມໃຈ, ຫຼິ້ນແບບຫຼິ້ນເຕັ້ນເຊືອກ ແລະ ຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆຕ່າງໆ ໄດ້ຖືກຕ້ອງ.
3. ເບີກບານມ່ວນຊື່ນໃນເວລາຫຼິ້ນ.
4. ປອດໄພໃນເວລາຫຼິ້ນແບບຫຼິ້ນ.
5. ຝຶກຄວາມແຂງແຮງຂອງກ້າມຊີ້ນມື.
6. ອົດທົນໃນເວລາຫຼິ້ນແບບຫຼິ້ນ.
7. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຕໍ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນໄດ້ຖືກຕ້ອງ.
3. ຈັບຄູ່ທີ່ຄືກັນຮູບທໍ່ສາມລ່ຽມ, ໜ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມ, ຈັບຄູ່ທີ່ຄືກັນຮູບພາບເຄື່ອງຫຼິ້ນໃນເດີ່ນ, ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການຫຼິ້ນນ້ຳ-ຫຼິ້ນຊາຍ, ຈັບຄູ່ທີ່ຄືກັນຮູບພາບປະໂຫຍດຂອງອໍເວທີການສະແດງໄດ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.
5. ອົດທົນໃນເວລາຫຼິ້ນເກມ.
6. ແບ່ງປັນເກມໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ສຳຜັດຫຼິ້ນເຄື່ອງດົນຕີ, ພິມພະຍັນຊະນະ ກ, ນ, ງ, ດ, ບ, ມ, ຍ, ວ ໃສ່ອ່າງດິນຊາຍ, ຕໍ່ບຼັອກເປັນຮູບໂຮງຮຽນ, ຮົ້ວໂຮງຮຽນ, ຫຼັກທຸງ, ຕໍ່ບຼັອກເປັນຕຳຕ່າງລະດັບຕໍ່ບຼັອກຕາມຈິນຕະນາການຢ່າງມ່ວນຊື້ນ.
3. ຕັດ-ຕິດຮູບພາບຮົ້ວໂຮງຮຽນ, ຂຽນສະຫຼະ ີ ໃນຄຳສັບ: ຈີນ, ພີນ, ຢືນ, ມືດ, ຄືບ, ກໍ້ເຈ້ຍເປັນຮູບທໍ່ກົມ, ແຕ້ມຮູບພາບດອກໄມ້ຕາມແບບ, ຕັດ, ຕິດ, ຕໍ່ເຈ້ຍຕໍ່ກັນເປັນພວງມະໄລ, ແຕ້ມຮູບພາບຕາມແບບໄດ້ຖືກຕ້ອງ.
4. ເວົ້າເປັນປະໂຫຍກຕາມຮູບພາບ, ເດັກນ້ອຍປູກດອກໄມ້, ເດັກນ້ອຍທົດນ້ຳດອກໄມ້ເດັກນ້ອຍກວາດເດີ່ນໂຮງຮຽນ, ເດັກນ້ອຍເຊັດຝາໂຮງຮຽນ, ອ່ານຕາມຮູບພາບປຶ້ມນິທານເລື່ອງ ໝີດຳ ແລະ ນາງກະຕ່າຍດຸໝັ່ນ, ເວົ້າເປັນປະໂຫຍກຕາມຮູບພາບ: ເດັກນ້ອຍຈັບບົວທົດນ້ຳ, ຊ້ວານດິນຊາຍ, ຈັບເຂິງຮອນຊາຍ, ຕັກຊາຍໃສ່ກະປ໋ອງ, ຖອກນ້ຳໃສ່ກະໂປະ, ອ່ານຄຳສັບຕາມຮູບພາບ: ອ່າງ, ຄຸ, ບົວນ້ອຍ, ກະປ໋ອງ, ຊວ້ານ ແລະ ເຂິງໄດ້ຊັດເຈນ.
5. ຈັບຄູ່ທີ່ຄືກັນຮູບທໍ່ສາມລ່ຽມ, ໜ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມ, ຕໍ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນໄດ້ຖືກຕ້ອງ.
6. ທົດລອງຮອນຊາຍ, ທົດລອງຜອງນ້ຳກະຕຸກຢາງນ້ອຍໃສ່ຕຸກຢາງໃຫຍ່ໄດ້ຖືກຕ້ອງ,
7. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.
8. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.
9. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວປະຕິບັດຄຳສັ່ງຕາມນາຍຄູແນະນຳ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ປະຕິບັດຄຳສັ່ງຕາມນາຍຄູແນະນຳໄດ້ຖືກຕ້ອງ.
2. ກ້າສະແດງອອກໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການປະຕິບັດຄຳສັ່ງຕາມນາຍຄູແນະນຳ: ລຽນແຖວເຕົ້າລົບທຸງ, ເຕົ້າລົບທຸງ, ຫົດສວນດອກໄມ້, ຫຼິ້ນເຕັ້ນໄຮ່ນາ.

### III. ສື່ການຮຽນ-ການສອນ

1. ສໍຂາວ.
2. ຮູບພາບຫ້ອງນ້ຳ.
3. ທ່າຫັດກາຍະບໍລິຫານຂາ ແລະ ແຂວ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ແຂວ: ທ່າໝູນຫົວເຂົ່າ ແລະ ທ່າໝູນແຂວໄປອ້ອມຮອບ.
2. ໃຫ້ເດັກນ້ອຍຍ່າງເຍ່ງເຍ້ຕີນຕາມເສັ້ນຊື່ຮັກສາຄວາມທ່ຽງ.
3. ນາຍຄູແນະນຳ ແລະ ສາທິດການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຂັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການກ້າສະແດງອອກໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການປະຕິບັດຄຳສັ່ງຕາມນາຍຄູແນະນຳ.
2. ການກ້າສະແດງອອກໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ເດີ່ນໂຮງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກສ່ວນປະກອບ ແລະ ຄຸນປະໂຫຍດຂອງເດີ່ນໂຮງຮຽນໄດ້ຖືກຕ້ອງ.
2. ເລົ່າຄຳຄ່ອງ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດຄຳຄ່ອງໄດ້ຊັດເຈນ.
3. ປຽບທຽບຄວາມສູງໂດຍໃຊ້ຄຳວ່າ: ສູງກວ່າ, ຕ່ຳກວ່າ, ສູງເທົ່າກັນໄດ້ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

1. ສ່ວນປະກອບ ແລະ ຄຸນປະໂຫຍດຂອງເດີ່ນໂຮງຮຽນ:
- ສ່ວນປະກອບ: ຫຼັກທຸງ ແລະ ທຸງຊາດ, ເດີ່ນຫຼິ້ນ, ເຄື່ອງຫຼິ້ນ, ຮົ້ວ, ສວນດອກໄມ້, ຕົ້ນໄມ້.
- ຄຸນປະໂຫຍດ: ເປັນບ່ອນໃຫ້ເດັກຫຼິ້ນ ແລະ ເຄື່ອນໄຫວກິດຈະກຳການຮຽນ-ການສອນນອກຫ້ອງຮຽນ.

2. ການເລົ່າຄຳຄ່ອງ ເດີ່ນໂຮງຮຽນ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດຄຳຄ່ອງ:
- ຄຳສັບ: ເດີ່ນ, ກວ້າງ, ໃຫຍ່, ຫຼັກທຸງ, ແລ່ນ, ຫຼິ້ນ, ສວນດອກໄມ້, ຮົ້ວ.
- ປະໂຫຍກ: ໂຮງຮຽນຂອງຫຼານມີເດີ່ນກວ້າງໃຫຍ່, ໃນເດີ່ນໂຮງຮຽນມີຫຼັກທຸງ, ຄູພາຮຽນແລ່ນຫຼິ້ນໃນເດີ່ນ, ສວນດອກໄມ້ອ້ອມຢູ່ຫຼັກທຸງ, ມີຮົ້ວສູງອ້ອມໂຮງຮຽນໄວ້.

3. ການປຽບທຽບຄວາມສູງຂອງຮູບພາບຫຼັກທຸງ ໂດຍໃຊ້ຄຳວ່າ: ສູງກວ່າ, ຕ່ຳກວ່າ, ສູງເທົ່າກັນ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ເດີ່ນໂຮງຮຽນ (ເບິ່ງປຶ້ມຄູ່ມືຄູ).
2. ຮູບພາບຫຼັກທຸງ ສູງ, ຕ່ຳ, ສູງເທົ່າກັນ; ເດີ່ນໂຮງຮຽນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ, ສົນທະນາ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນບົດຄຳຄ່ອງ.
2. ໃຫ້ເດັກນ້ອຍໄປສັງເກດເດີ່ນໂຮງຮຽນ, ສົນທະນາກ່ຽວກັບສ່ວນປະກອບ ແລະ ຄຸນປະໂຫຍດຂອງເດີ່ນໂຮງຮຽນ.
3. ໃຫ້ເດັກນ້ອຍປຽບທຽບຮູບພາບຫຼັກທຸງແລ້ວບອກຜົນການປຽບທຽບໂດຍໃຊ້ຄຳວ່າ: ສູງກວ່າ, ຕ່ຳກວ່າ, ສູງເທົ່າກັນ.
4. ໃຫ້ເດັກນ້ອຍເວົ້າຄືນສ່ວນປະກອບຂອງເດີ່ນໂຮງຮຽນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ ແລະ ການຮັກສາຄວາມສະອາດເດີ່ນໂຮງຮຽນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກສ່ວນປະ ກອບ ແລະ ຄຸນປະໂຫຍດຂອງເດີ່ນໂຮງຮຽນ.
2. ຄວາມຊັດເຈນໃນການເລົ່າຄຳຄ່ອງ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນຄຳຄ່ອງ.
3. ຄວາມຖືກຕ້ອງໃນການບອກຜົນການ ປຽບທຽບຄວາມຍາວໂດຍໃຊ້ຄຳວ່າ: ຍາວກວ່າ, ສັ້ນກວ່າ, ຍາວເທົ່າກັນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕັດ, ຕິດຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຕັດ-ຕິດຮູບພາບຮົ້ວໂຮງຮຽນໄດ້ຖືກຕ້ອງ.
2. ຕັດ, ຕິດຮູບພາບຮົ້ວໂຮງຮຽນໄດ້ຈົບງາມ.
3. ມີຄວາມອົດທົນໃນການຕັດ, ຕິດຮູບພາບຮົ້ວໂຮງຮຽນ.

### II. ເນື້ອໃນຕົ້ນຕໍ

ການຕັດ, ຕິດຮູບພາບຮົ້ວໂຮງຮຽນ.

### III. ສື່ການຮຽນ-ການສອນ

1. ເຈ້ຍຂາວ,ກາວສຳ, ເລັດຮູບ ຫຼື ກາວເຂົ້າໜຽວຕົ້ມ.
2. ມີດຕັດປາຍມົນ.
3. ຮູບພາບຮົ້ວໂຮງຮຽນ.
4. ເຈ້ຍແບບຮູບພາບຮົ້ວໂຮງຮຽນທີ່ຕັດ, ຕິດແລ້ວ.
5. ຂາມນ້ຳ, ສະບູ ແລະ ຜ້າເຊັດມື.
6. ບົດລຳລ່ອງເດີ່ນໂຮງຮຽນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າລຳລ່ອງ ເດີ່ນໂຮງຮຽນ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດຮູບພາບຮົ້ວໂຮງຮຽນທີ່ຕັດ-ຕິດແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການຕັດ, ຕິດຮູບພາບ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຕັດ,ຕິດຮູບພາບຮົ້ວໂຮງຮຽນ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຕັດ-ຕິດຮູບພາບຮົ້ວໂຮງຮຽນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສະອາດຈົບງາມ, ແລະ ເກັບມ້ຽນຜົນງານໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການຕັດ, ຕິດຮູບພາບຮົ້ວໂຮງຮຽນ.
2. ຄວາມຈົບງາມໃນການຕັດ, ຕິດຮູບພາບຮົ້ວໂຮງຮຽນ.
3. ຄວາມອົດທົນໃນການຕັດ, ຕິດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນກະຕ່າຍຍາດຄອກ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນກະຕ່າຍຍາດຄອກໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນກະຕ່າຍຍາດຄອກໄດ້ຖືກຕ້ອງ.
3. ປອດໄພໃນເວລາຫຼິ້ນແບບຫຼິ້ນ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນກະຕ່າຍຍາດຄອກ.

## III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ເດີ່ນໂຮງຮຽນ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ເດີ່ນໂຮງຮຽນປະກອບທ່າທາງ.
2. ນາຍຄູສະເໜີຫຼິ້ນແບບຫຼິ້ນກະຕ່າຍຍາດຄອກ ແລະ ສາທິດວິທີຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນກະຕ່າຍຍາດຄອກ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນກະຕ່າຍຍາດຄອກ.
5. ສຶກສາອົບຮົມເດັກນ້ອຍຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ມີຄວາມອົດທົນໃນເວລາຫຼິ້ນ ຫຼັງຈາກຫຼິ້ນແລ້ວອະນາໄມ້ຕີນ ແລະ ມື ໃຫ້ສະອາດ.
6. ໃຫ້ເດັກນ້ອຍຢືນຢູ່ກັບທີ່ເຮັດທ່າທາງນົກພີປີກຂຶ້ນ-ລົງຊ້າໆ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນກະຕ່າຍຍາດຄອກ.
3. ຄວາມປອດໄພໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີໃນເກມໄດ້ຖືກຕ້ອງ.
2. ຕໍ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນໄດ້ຖືກຕ້ອງ.
3. ແບ່ງປັນເກມໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຕໍ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຕໍ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັບຮູບກ້ອນຈະຕຸລັດ, ກ້ອນສີ່ແຈ ແລະ ກ້ອນສາມແຈ.
3. ບົດຄຳຄ່ອງ ເດີ່ນໂຮງຮຽນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ເດີ່ນໂຮງຮຽນ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມເກມຕໍ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການແບ່ງປັນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີໃນເກມ.
2. ຄວາມຖືກຕ້ອງໃນການເກມຕໍ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນ.
3. ການແບ່ງປັນເກມໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຕໍ່ບຼັອກເປັນຮູບໂຮງຮຽນ, ຮົ້ວໂຮງຮຽນ, ຫຼັກທຸງ ແລະ ພິມຕົວພະຍັນຊະນະໃສ່ອ່າງດິນຊາຍໄດ້ຖືກຕ້ອງ.
3. ຕັດ, ຕິດຮູບພາບ ແລະ ຂຽນສະຫຼະ ໂ-ີ ໃນຄຳສັບຕາມແບບໄດ້ຖືກຕ້ອງ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
2. ການຕໍ່ບຼັອກເປັນຮູບໂຮງຮຽນ, ຮົ້ວໂຮງຮຽນ ແລະ ຫຼັກທຸງ, ພິມຕົວພະຍັນຊະນະໃສ່ອ່າງດິນຊາຍ: ກ, ນ, ງ, ດ, ບ, ມ, ຍ, ວ.
3. ການຕັດ, ຕິດຮູບພາບຮົ້ວໂຮງຮຽນ, ຂຽນສະຫຼະ ໂ-ີ ໃນຄຳສັບຕາມແບບ: ຈີ່ນ, ພື້ນ, ຢືນ, ມືດ, ຄືບ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ຊຸດບຼັອກ, ອ່າງດິນຊາຍ, ແບບພິມພະຍັນຊະນະ: ກ, ນ, ງ, ດ, ບ, ມ, ຍ, ວ.
2. ມຸມສິລະປະສ້າງສັນ: ມີດຕັດປາຍມົນ, ກາວສຳລັບຕິດ, ຮູບພາບຮົ້ວໂຮງຮຽນ, ເຈ້ຍແບບຄຳສັບ: ຈີ່ນ, ພື້ນ, ຢືນ, ມືດ, ຄືບ.
3. ບົດຄຳຄ່ອງ ເດີ່ນໂຮງຮຽນ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເລົ່າຄຳຄ່ອງ ເດີ່ນໂຮງຮຽນ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງ ແລະ ຄ່ອງແຄ້ວ. ຕໍ່ບຼັອກເປັນຮູບໂຮງຮຽນ, ຮົ້ວໂຮງຮຽນ ແລະ ຫຼັກທຸງ, ພິມຕົວພະຍັນຊະນະໃສ່ອ່າງດິນຊາຍ
3. ຄວາມຖືກຕ້ອງໃນການຕັດ, ຕິດຮູບພາບຮົ້ວໂຮງຮຽນ ແລະ ຂຽນສະຫຼະ ໂ-ີ ໃນຄຳສັບຕາມແບບ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມຈິນຕະນາການປະກອບບົດລຳລ່ອງ ເດີ່ນໂຮງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງຢ່າງມ່ວນຊື່ນ.
2. ກ້າສະແດງອອກໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງ ເດີ່ນໂຮງຮຽນ.

### III. ສື່ການຮຽນ-ການສອນ

1. ບົດລຳລ່ອງ ເດີ່ນໂຮງຮຽນ.
2. ທ່າຫັດກາຍະບໍລິຫານແອວ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານ ແອວ ແລະ ຂາ: ທ່າຫງ່ຽງແອວໄປທາງຊ້າຍ, ຂວາ ແລະ ທ່າຢືນຂາດຽວຍົກຂາຊ້າຍຄູ້ເຂົ້າທາງຫຼັງພ້ອມທັງເອົາມືຈັບໄວ້ (ຜັດປ່ຽນເບື້ອງ).
2. ໃຫ້ເດັກນ້ອຍຍ່າງໂຢ່ງໂຍະເປັນແຖວຊື່.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງຢຽດຂາໄປທາງໜ້າ, ຈ່າງຂາອອກ, ກົ້ມລົງເອົາມືທັງສອງຈັບປາຍຕີນ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການກ້າສະແດງອອກໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມມ່ວນຊື່ນໃນການສະແດງທ່າທາງຕາມຈິນຕະນາການປະກອບເນື້ອໃນບົດລຳລ່ອງ.
2. ການກ້າສະແດງອອກໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ການບົວລະບັດຮັກສາເດີ່ນໂຮງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກການບົວລະບັດຮັກສາເດີ່ນໂຮງຮຽນໄດ້ຖືກຕ້ອງ.
2. ມີຄວາມມ່ວນຊື່ນ ແລະ ມີມາລະຍາດໃນການຟັງນິທານ.
3. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.
4. ປະຕິບັດຕົວຈິງໃນການເກັບຂີ້ເຫຍື້ອ ແລະ ຫົດນ້ຳຕົ້ນໄມ້ໃນເດີ່ນໂຮງຮຽນ.

### II. ເນື້ອໃນຕົ້ນຕໍ

1. ການບົວລະບັດຮັກສາເດີ່ນໂຮງຮຽນ: ເກັບຂີ້ເຫຍື້ອໃນເດີ່ນໃສ່ກະຖົງ ຫຼື ກະຕ່າ; ປູກ ແລະ ຫົດນ້ຳຕົ້ນດອກໄມ້; ປັດກວາດເດີ່ນ ແລະ ເຊັດຖູຝາໂຮງຮຽນ.
2. ການຟັງນິທານເລື່ອງ ທ້າວພິດຳ ແລະ ນາງກະຕ່າຍດຸໝັ່ນ.
3. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ:

- ຄຳສັບ: ກະຕ່າ; ຖົງຂີ້ເຫຍື້ອ; ປັດກວາດ, ຂີ້ເຫຍື້ອ, ເຈ້ຍເສດ, ຖົງຢາງ.
- ປະໂຫຍກ: ເດັກນ້ອຍປູກດອກໄມ້, ເດັກນ້ອຍຫົດນ້ຳດອກໄມ້, ເດັກນ້ອຍກວາດເດີ່ນໂຮງຮຽນ, ເດັກນ້ອຍເຊັດຝາໂຮງຮຽນ.

### III. ສື່ການຮຽນ-ການສອນ

1. ກະຕ່າຂີ້ເຫຍື້ອ, ຜ້າເຊັດ, ບົວນ້ອຍ; ຮູບພາບ: ເດັກນ້ອຍປູກດອກໄມ້, ເດັກນ້ອຍຫົດນ້ຳດອກໄມ້, ເດັກນ້ອຍກວາດເດີ່ນໂຮງຮຽນ, ເດັກນ້ອຍເຊັດຝາໂຮງຮຽນ.
2. ບົດນິທານເລື່ອງ ທ້າວພິດຳ ແລະ ນາງກະຕ່າຍດຸໝັ່ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ - ການສອນ

1. ນາຍຄູເລົ່ານິທານ, ສົນທະນາກ່ຽວກັບເນື້ອໃນຂອງບົດນິທານ.
2. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບບົວລະບັດຮັກສາເດີ່ນໂຮງຮຽນ; ໃຫ້ເດັກນ້ອຍບອກການບົວລະບັດຮັກສາເດີ່ນໂຮງຮຽນ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງໃນການ ເກັບຂີ້ເຫຍື້ອໃນເດີ່ນໃສ່ກະຖົງ ຫຼື ກະຕ່າ, ຫົດນ້ຳຕົ້ນດອກໄມ້.
5. ໃຫ້ເດັກນ້ອຍເວົ້າຄືນການບົວລະບັດຮັກສາເດີ່ນໂຮງຮຽນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບມາລະຍາດໃນການຟັງນິທານ ແລະ ການບົວລະບັດຮັກສາເດີ່ນໂຮງຮຽນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກການບົວລະບັດຮັກສາເດີ່ນໂຮງຮຽນ.
2. ຄວາມມ່ວນຊື່ນ ແລະ ມາລະຍາດໃນການຟັງນິທານ.
3. ຄວາມຊັດເຈນໃນການເວົ້າເປັນຄຳສັບ ແລະ ເປັນປະໂຫຍກຕາມຮູບພາບ.
4. ການປະຕິບັດຕົວຈິງໃນການເກັບຂີ້ເຫຍື້ອ ແລະ ຫົດນ້ຳຕົ້ນໄມ້.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ແຕ້ມ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມຮູບພາບດອກໄມ້ຕາມຮອຍຈ້ຳໄດ້ຖືກຕ້ອງ.
2. ແຕ້ມຮູບພາບດອກໄມ້ຕາມຮອຍຈ້ຳໄດ້ຄ້າຍຄື.
3. ມີຄວາມອົດທົນໃນການແຕ້ມຮູບພາບດອກໄມ້ຕາມຮອຍຈ້ຳ.

## II. ເນື້ອໃນຕົ້ນຕໍ

ການແຕ້ມຮູບພາບດອກໄມ້ຕາມຮອຍຈ້ຳ.

## III. ສື່ການຮຽນ-ການສອນ

1. ສໍດຳ ຫຼື ສໍສີໄມ້.
2. ເຈ້ຍຂາວ.
3. ຮູບພາບດອກໄມ້ທີ່ມີຮອຍຈ້ຳ.
4. ແບບຮູບພາບດອກໄມ້ທີ່ແຕ້ມແລ້ວ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເອົານິ້ວມືທັງເບື້ອງສານກັນ ແລ້ວພູບຄໍ່າແອນ ແລະ ຂໍ້ມືໄປມາ.
2. ໃຫ້ເດັກນ້ອຍສັງເກດຮູບພາບດອກໄມ້ທີ່ແຕ້ມ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການແຕ້ມຮູບພາບດອກໄມ້.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການແຕ້ມຮູບພາບດອກໄມ້ຕາມຮອຍຈ້ຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການແຕ້ມຮູບພາບດອກໄມ້ຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນ, ຄວາມສະອາດຈົບງາມ ແລະ ເກັບຜົນງານໄປເກັບມ້ຽນໄວ້.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມຮູບພາບດອກໄມ້.
2. ຄວາມຄ້າຍຄືໃນການແຕ້ມດອກໄມ້ຕາມຮອຍຈ້ຳ.
3. ຄວາມອົດທົນໃນການແຕ້ມຮູບພາບດອກໄມ້ຕາມຮອຍຈ້ຳ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນກັນຢຽບໝາກປຸມເປົ້າ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນຢຽບໝາກປຸມເປົ້າໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນກັນຢຽບໝາກປຸມເປົ້າໄດ້ຖືກຕ້ອງ.
3. ຄວາມປອດໄພໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນຢຽບໝາກປຸມເປົ້າ.

### III. ສື່ການຮຽນ-ການສອນ

1. ໝາກຫວີດ, ຢາງບ້ວງ ແລະ ໝາກປຸມເປົ້າ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍສັ່ນຄໍ່ມື ແລະ ຍ່ຳເທົ້າຢູ່ກັບທີ່.
2. ນາຍຄູສະເໜີແບບຫຼິ້ນແຂ່ງຂັນຢຽບໝາກປຸມເປົ້າ ແລະ ສາທິດວິທີຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນຢຽບໝາກປຸມເປົ້າ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນ ແຂ່ງຂັນຢຽບໝາກປຸມເປົ້າ.
5. ສຶກສາອົບຮົມເດັກນ້ອຍ: ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ເວລາຢຽບໝາກປູມເປົ້າບໍ່ໃຫ້ຢຽບຕີນກັນ, ບໍ່ໃຫ້ຍູ້ຫຼັງກັນ, ຫຼັງຈາກຫຼິ້ນແລ້ວອະນາໄມ້ຕີນ, ມືໃຫ້ສະອາດ ແລະ ເກັບມ້ຽນອຸປະກອນຊ່ວຍກັນ.
6. ໃຫ້ເດັກນ້ອຍນັ່ງລົງແລ້ວຢຽດຂາອອກຊື່ແລ້ວໃຊ້ສອງລູບຂາທັງສອງເບື້ອງຂຶ້ນ-ລົງຊ້າໆ, ຫຼັງຈາກນັ້ນປ່ອຍເດັກຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນກັນຢຽບໝາກປຸມເປົ້າ.
3. ຄວາມເບີກບານມ່ວນຊື່ນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັບຮູບທໍ່ສາມລ່ຽມ, ໜ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັບຮູບທໍ່ສາມລ່ຽມ, ໜ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມໄດ້ຢ່າງຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັບຮູບທໍ່ສາມລ່ຽມ, ໜ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມ.

### III. ສື່ການຮຽນ-ການສອນ

1. ແຜ່ນເກຈັບຄູ່ທີ່ຄືກັບຮູບທໍ່ສາມລ່ຽມ, ໜ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຕໍ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບຮູບເລຂາຄະນິດ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມເກມຈັບຄູ່ທີ່ຄືກັບຮູບທໍ່ສາມລ່ຽມ, ໜ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນໃນເວລາຫຼິ້ນເກມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບທໍ່ສາມລ່ຽມ, ໜ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຈັບຄູ່ທີ່ຄືກັບຮູບພາບທໍ່ສາມລ່ຽມ, ໝ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ສາມລ່ຽມ ແລະ ເກມຕໍ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນໄດ້ຖືກຕ້ອງ.
3. ເວົ້າປະໂຫຍກຕາມຮູບພາບ ແລະ ອ່ານຕາມຮູບພາບໃນປຶ້ມນິທານໄດ້ຊັດເຈນ.
4. ເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ.
2. ການຈັບຄູ່ທີ່ຄືກັບຮູບທໍ່ສາມລ່ຽມ, ໝ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມ ແລະ ເກມຈັບຄູ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນ.
3. ການເວົ້າເປັນປະໂຫຍກຕາມຮູບພາບ: ເດັກນ້ອຍປູກດອກໄມ້, ເດັກນ້ອຍຫົດນ້ຳດອກໄມ້, ເດັກນ້ອຍກວາດເດີ່ນໂຮງຮຽນ, ເດັກນ້ອຍເຊັດຝາໂຮງຮຽນ ແລະ ອ່ານຕາມຮູບພາບໃນປຶ້ມນິທານເລື່ອງ: ທ້າວໝີດຳ ແລະ ນາງກະຕ່າຍດຸໝັ່ນ.

### III. ສື່ການຮຽນ-ການສອນ

1. ມຸມເກມການສຶກສາ: ແຜ່ນເກມຈັບຄູ່ທີ່ຄືກັບຮູບທໍ່ສາມລ່ຽມ, ໝ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມ ແລະ ແຜ່ນເກມຈັບຄູ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນ.
2. ມຸມອ່ານ: ຮູບພາບເດັກນ້ອຍປູກດອກໄມ້, ເດັກນ້ອຍຫົດນ້ຳດອກໄມ້, ເດັກນ້ອຍກວາດເດີ່ນໂຮງຮຽນ, ເດັກນ້ອຍເຊັດຝາໂຮງຮຽນ ແລະ ປຶ້ມນິທານເລື່ອງ: ທ້າວໝີດຳ ແລະ ນາງກະຕ່າຍດຸໝັ່ນ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເກມການສຶກສາ ແລະ ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັບຮູບທໍ່ສາມລ່ຽມ, ໝ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມ ແລະ ການຕໍ່ຮູບພາບເຄື່ອງຫຼິ້ນໃນໂຮງຮຽນ.
3. ຄວາມຊັດເຈນໃນການເວົ້າເປັນປະໂຫຍກຕາມຮູບພາບ ແລະ ອ່ານຕາມຮູບພາບໃນປຶ້ມນິທານ.
4. ການເວົ້າຄຳທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມການສັນຍານຍົກຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມສັນຍານຍົກຮູບພາບໄດ້ຖືກຕ້ອງ.
2. ປອດໄພໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສັນຍານຍົກຮູບພາບ:

- ຍົກຮູບພາບມ້າໝູນສະແດງທ່າທາງຍ່າງເປັນວົງມົນ.
- ຍົກຮູບພາບຕໍ່າງລະດັບສະແດງທ່າທາງຍ່າງໄຕ່ຕໍ່າງລະດັບ.
- ຍົກຮູບພາບຮາວໂຫນສະແດງ ໂຫນຮາວໂຫນ.

### III. ສື່ການຮຽນ-ການສອນ

1. ຕາໜ່າງເຊືອກ.
2. ທ່າຫັດກາຍະບໍລິຫານແຂນ ແລະ ຂາ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານ ແຂນ ແລະ ຂາ: ທ່າວ່າແຂນອອກທາງຂ້າງຍົກແຂນພຽງກັບບ່າໄຫຼ່, ເອົາມືທັງສອງເບື້ອງໄຂ່ວກັນຢູ່ເຊິ່ງທ້ອງ ແລະ ທ່າຢືນສອງມືຄ້ຳແອ ວ ໂຢ່ງໂຢະຂາລົງ.
2. ໃຫ້ເດັກນ້ອຍຍ່າງເອົາຕີນລົງປ່ອງຕາໜ່າງ (ເຊືອກ).
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມສັນຍານຍົກຮູບພາບ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງອັດສະໝາດຫຼັບຕາສະມາທິ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມສັນຍານຍົກຮູບພາບ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມປອດໄພໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສັນຍານຍົກຮູບພາບ.
2. ຄວາມປອດໄພໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນໂຮງຮຽນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາເຄື່ອງຫຼິ້ນໃນເດີ່ນໂຮງຮຽນໄດ້ຖືກຕ້ອງ.
2. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.
3. ອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ×າ, ×ິ, ×ີ ໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາເຄື່ອງຫຼິ້ນໃນເດີ່ນໂຮງຮຽນ:

- ຊື່ເຄື່ອງຫຼິ້ນ: ມ້າໝູນ, ຣາວໂຫນ, ຕໍຕ່າງລະດັບ, ຂອນໄມ້ ແລະ ອື່ນໆ.
- ຄຸນປະໂຫຍດ: ມ້າໝູນໃຊ້ໄວ້ຂີ່ເພື່ອຄວາມມ່ວນຊື່ນ ແລະ ເຮັດໃຫ້ມີການຊົງຕົວໄດ້ດີ; ຣາວໂຫນໃຊ້ໄວ້ໂຫນເພື່ອຂະຫຍາຍກ້າມຊີ້ນແຂນ ແລະ ເຮັດໃຫ້ແຂນແຂງແຮງ; ຕໍຕ່າງລະດັບ ແລະ ຂອນໄມ້ໃຊ້ໄວ້ໄຕ່ ເພື່ອເຮັດໃຫ້ມີການຊົງຕົວໄດ້ດີ ແລະ ກ້າມຊີ້ນຂາແຂງແຮງ.
- ການບົວລະບັດຮັກສາ: ບໍ່ຫຼິ້ນແຮງ, ຮັກສາເຄື່ອງຫຼິ້ນບໍ່ໃຫ້ເປ່ເພ, ຫຼັງຈາກຫຼິ້ນແລ້ວອະນາໄມສະຖານທີ່ໃຫ້ສະອາດ.

2. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ:

- ຄຳສັບ: ມ້າໝູນ, ຣາວຂອນໄມ້, ຕໍຕ່າງລະດັບ.
- ປະໂຫຍກ: ເດັກນ້ອຍຂີ່ມ້າໝູນ, ເດັກນ້ອຍຫ້ອຍຣາວໂຫນ, ເດັກນ້ອຍໄຕ່ຕໍຕ່າງລະດັບ, ເດັກນ້ອຍໄຕ່ຂອນໄມ້.

3. ການອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ×າ, ×ິ, ×ີ: ປ້າ ມິ ມີ; ອາ ຊີ່ ບາ ລີ; ວາ ລີ ຖື ຢາ ດີ.

### III. ສື່ການຮຽນ-ການສອນ

1. ມ້າໝູນ, ຣາວໂຫນ, ຕໍຕ່າງລະດັບ, ຂອນໄມ້; ຮູບພາບ: ເດັກນ້ອຍຂີ່ມ້າໝູນ, ເດັກນ້ອຍຫ້ອຍຣາວໂຫນ, ເດັກນ້ອຍໄຕ່ຕໍຕ່າງລະດັບ, ເດັກນ້ອຍໄຕ່ຂອນໄມ້.
2. ບັດຄຳສັບ: ປ້າ ມິ ມີ; ອາ ຊີ່ ບາ ລີ; ວາ ລີ ຖື ຢາ ດີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍໄປສັງເກດເຄື່ອງຫຼິ້ນໃນເດີ່ນໂຮງຮຽນ, ສົນທະນາກ່ຽວກັບຊື່ເຄື່ອງຫຼິ້ນ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
3. ໃຫ້ເດັກນ້ອຍອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ×າ, ×ິ, ×ີ.
4. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມລະມັດລະວັງໃນເວລາຫຼິ້ນເຄື່ອງຫຼິ້ນໃນເດີ່ນ ແລະ ການຮັກສາເຄື່ອງຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງບອກຊື່ເຄື່ອງຫຼິ້ນໃນ ເດີ່ນໂຮງຮຽນ, ຄຸນປະໂຫຍດ ແລະ ການບົວລະບັດຮັກສາ.
2. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
3. ຄວາມຊັດເຈນໃນການອ່ານອອກສຽງຄຳສັບທີ່ປະສົມກັບສະຫຼະ ×າ, ×ິ, ×ີ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ກໍ້ເຈ້ຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການກໍ້ເຈ້ຍເປັນຮູບທ່ອນກົມໄດ້ຖືກຕ້ອງ.
2. ກໍ້ເຈ້ຍເປັນຮູບທ່ອນກົມໄດ້ຈົບງາມ.
3. ມີຄວາມອົດທົນໃນການກໍ້ເຈ້ຍເປັນຮູບທ່ອນກົມ.

### II. ເນື້ອໃນຕົ້ນຕໍ

ການກໍ້ເຈ້ຍເປັນຮູບທ່ອນກົມ.

### III. ສື່ການຮຽນ-ການສອນ

1. ຕັດເຈ້ຍແຂງທີ່ມີຂະໜາດຕາມຄວາມຕ້ອງການ.
2. ກາວ ຫຼື ສະກ໋ອດສຳລັບຕິດ.
3. ແບບເຈ້ຍທີ່ກໍ້ແລ້ວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງດີດມື ແລະ  ດຶງນິ້ວມືເທື່ອລະນິ້ວ.
2. ໃຫ້ເດັກນ້ອຍສັງເກດແບບເຈ້ຍທີ່ກໍ້ເປັນທ່ອນກົມແລ້ວ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການກໍ້ເຈ້ຍ.
3. ນາຍຄູແນະນຳ, ສາທິດວິທີ, ແລະ ຂັ້ນຕອນການກໍ້ເຈ້ຍເປັນຮູບທ່ອນກົມ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູທີ່ຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການກໍ້ເຈ້ຍເປັນຮູບທ່ອນກົມ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົດ, ຄວາມຈົບງາມ ແລະອເກັບຜົນງານໄປມ້ຽນໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນການກໍ້ເຈ້ຍເປັນທ່ອນກົມແລ້ວ.
2. ຄວາມຈົບງາມໃນການກໍ້ເຈ້ຍເປັນທ່ອນກົມ.
3. ຄວາມອົດທົນໃນການກໍ້ເຈ້ຍເປັນຮູບທໍ່ກົມ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນດິນຊາຍ ປັ້ນຊາຍເປັນຮູບຕ່າງໆຕາມໃຈ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນດິນຊາຍ: ປັ້ນດິນຊາຍເປັນຮູບຕ່າງໆຕາມໃຈໄດ້ຖືກຕ້ອງ.
2. ຝຶກກ້າມຊີ້ນມືໃຫ້ມີຄວາມແຂງແຮງ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ແຂ່ງຂັນຢຽບໝາກປຸມເປົ້າ.

### III. ສື່ການຮຽນ-ການສອນ

1. ນ້ຳທີ່ສະອາດ, ຜ້າເຊັດມື, ບົວນ້ອຍ, ດິນຊາຍ, ເຂິງນ້ອຍສຳລັບຮ່ອນຊາຍ, ຊວ້ານນ້ອຍ, ແມ່ພິມແບບຮູບຕ່າງ ແລະ ກະໂປະ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຢືນສັ່ນແຂນ ແລະ ເບັດແອວຊ້າຍ-ຂວາ.
2. ນາຍຄູສະເໜີການຫຼິ້ນດິນຊາຍ: ຫຼິ້ນປັ້ນດິນຊາຍເປັນຮູບຕ່າງໆຕາມໃຈ ແລະ ສາທິດວິທີຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນດິນຊາຍ: ປັ້ນດິນຊາຍເປັນຮູບຕ່າງໆຕາມໃຈ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍຫຼິ້ນຄືນກ່ຽວກັບການຫຼິ້ນ ປັ້ນຊາຍເປັນຮູບຕ່າງໆຕາມໃຈ.
5. ສຶກສາອົບຮົມເດັກນ້ອຍ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະວັງບໍ່ໃຫ້ວ່ານດິນຊາຍໃສ່ກັນ, ບໍ່ຍາດເຄື່ອງຫຼິ້ນກັນ, ຫຼັງຈາກຫຼິ້ນແລ້ວອະນາໄມ້ຕີນ, ມື ໃຫ້ສະອາດ ແລະ ເກັບມ້ຽນອຸປະກອນຊ່ວຍກັນ.
6. ໃຫ້ເດັກນ້ອຍຢືນຂຶ້ນແລ້ວຍົກແຂນທັງສອງຂຶ້ນເທິງຫົວແກວ່ງແຂນໄປ-ມາຊ້າໆເຮັດຄືລົມພັດ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມແຂງແຮງຂອງກ້າມຊີ້ນມືໃນເວລາຫຼິ້ນ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບເຄື່ອງຫຼິ້ນໃນເດີ່ນໄດ້ຖືກຕ້ອງ.
3. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບເຄື່ອງຫຼິ້ນໃນເດີ່ນ: ມ້າໝູນ, ຮາວໂຫນ, ຂອນໄມ້, ເຄື່ອງດ່າງ, ໂອ້ນຊາ, ແປ້ນຕະລູດ.

### III. ສື່ການຮຽນ-ການສອນ

1. ແຜ່ນຈັບຄູ່ທີ່ຄືກັນຮູບພາບເຄື່ອງຫຼິ້ນໃນເດີ່ນ: ມ້າໝູນ, ຮາວໂຫນ, ຂອນໄມ້, ເຄື່ອງດ່າງ, ໂອ້ນຊາ, ແປ້ນຕະລູດ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບທໍ່ສາມລ່ຽມ, ໜ່ວຍມົນ, ທໍ່ສີ່ລ່ຽມ, ທໍ່ກົມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນໃນເດີ່ນໂຮງຮຽນ.
2. ໃຫ້ເດັກນ້ອຍສັງເກດຮູບພາບ ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງຫຼິ້ນໃນເດີ່ນ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການຊ່ວຍເຫຼືອເພື່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບເຄື່ອງຫຼິ້ນໃນເດີ່ນ.
3. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນເກມ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຕໍ່ບຼັອກເປັນຕຶກຕ່າງລະດັບ, ຕໍ່ບຼັອກເປັນຮູບໂຮງຮຽນ ແລະ ຮົ້ວໂຮງຮຽນໄດ້ຖືກຕ້ອງ.
3. ກໍ້ເຈ້ຍເປັນຮູບທ່ອນກົມ ແລະ ແຕ້ມຮູບພາບຕາມແບບໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
2. ການຕໍ່ບຼັອກເປັນຕຶກຕ່າງລະດັບ, ຕໍ່ບຼັອກເປັນຮູບໂຮງຮຽນ ແລະ ຮົ້ວໂຮງຮຽນ.
3. ການກໍ້ເຈ້ຍເປັນຮູບທໍ່ກົມ ແລະ ແຕ້ມຮູບພາບດອກໄມ້ຕາມແບບ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສຳຜັດ: ຊຸດບຼັອກ.
2. ມຸມສິລະປະສ້າງສັນ: ເຈ້ຍສຳລັບກໍ້, ເຈ້ຍສຳລັບແຕ້ມ, ສໍດຳ, ສໍສີໄມ້, ສີທຽນ, ເຈ້ຍແບບຮູບດອກໄມ້.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນຳວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິ ລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມຖືກຕ້ອງໃນການຕໍ່ບຼັອກເປັນຕຶກຕ່າງລະດັບ, ຕໍ່ບຼັອກເປັນຮູບໂຮງຮຽນ ແລະ ຮົ້ວໂຮງຮຽນ.
3. ຄວາມຖືກຕ້ອງໃນການກໍ້ເຈ້ຍ ແລະ ແຕ້ມຮູບພາບຕາມແບບ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມສຽງສັນຍານຕີບກອງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມສຽງສັນຍານ ຕີບກອງໄດ້ຖືກຕ້ອງ.
2. ກ້າສະແດງອອກໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມສຽງສັນຍານຕີບກອງ:

- ຕີບກອງ 1 ບາດສະແດງທ່າທາງທົ້ວຄຸ.
- ຕີບກອງ 2 ບາດສະແດງທ່າທາງຊູ້ວ້ານດິນ.
- ຕີບກອງ 3 ບາດສະແດງທ່າທາງຈັບເຂົ່ງຮ່ອນຊາຍ.

### III. ສື່ການຮຽນ-ການສອນ

1. ກອງ.
2. ທ່າຫັດກາຍະບໍລິຫານຂາ ແລະ ແອວ (ເບິ່ງປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານຂາ ແລະ ແອວ: ທ່າໝູນຫົວເຂົ່າ, ທ່າທ້ອງ-ຫຼັງກົ້ມຕົວລົງທາງໜ້າ, ເງີຍຂຶ້ນ ແລະ ແອ່ນຕົວໄປທາງຫຼັງ.
2. ໃຫ້ເດັກນ້ອຍເຕັ້ນຈ່າງຂາ.
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມສຽງສັນຍານຕີບກອງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍນັ່ງກັບພື້ນຄູ້ຂາ, ເອົາມືທັງສອງຄ່ຳພື້ນທາງຫຼັງ, ພ້ອມທັງສັ່ນຂາ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມສຽງສັນຍານຕີບກອງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບການກ້າສະແດງອອກໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມສຽງສັນຍານຕີບກອງ.
2. ການກ້າສະແດງອອກໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ອຸປະກອນຫຼິ້ນນ້ຳ, ຫຼິ້ນຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່, ຄຸນປະໂຫຍດ ແລະ ການບົວລະບັດຮັກສາອຸປະກອນຫຼິ້ນນ້ຳ, ຫຼິ້ນຊາຍໄດ້ຖືກຕ້ອງ.
2. ຮ້ອງເພງປະກອບທ່າທາງໄດ້ຖືກຕ້ອງ.
3. ເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ຊື່, ຄຸນປະໂຫຍດ ແລະ ການບົວລະບັດຮັກສາອຸປະກອນຫຼິ້ນນ້ຳ, ຫຼິ້ນຊາຍ:

- ຊື່ອຸປະກອນຫຼິ້ນນ້ຳຫຼິ້ນຊາຍ: ອ່າງ, ຄຸ, ບົວນ້ອຍ, ກະໂປະ, ກະປ໋ອງ, ຊວ້ານ, ເຂີງ, ນ້ຳ ແລະ ຊາຍ.
- ຄຸນປະໂຫຍດ: ຫຼິ້ນເພື່ອຄວາມມ່ວນຊື່ນ, ຂໍ້ມືແຂງແຮງ ແລະ ຄ່ອງແຄ້ວ.
- ການບົວລະບັດຮັກສາ: ລ້າງອຸປະກອນໃຫ້ສະອາດ, ຕາກໃຫ້ແຫ້ງ, ເກັບມ້ຽນໃຫ້ຖືກບ່ອນ ແລະ ປົກປັກຮັກສາບໍ່ໃຫ້ເສຍຫາຍ.

2. ການຮ້ອງເພງ ຫຼິ້ນນ້ຳ ຫຼິ້ນຊາຍປະກອບທ່າທາງ.
3. ການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ:

- ຄຳສັບ: ຄຸ, ບົວນ້ອຍ, ກະໂປະ, ກະປ໋ອງ, ຊວ້ານ, ເຂີງ, ນ້ຳ, ຊາຍ.
- ປະໂຫຍກ: ເດັກນ້ອຍຈັບບົວຫົດນ້ຳ, ເດັກນ້ອຍຊວ້ານດິນຊາຍ, ເດັກນ້ອຍຈັບເຂີງຮ່ອນຊາຍ, ເດັກນ້ອຍຕັກຊາຍໃສ່ກະປ໋ອງ, ເດັກນ້ອຍຖອກນ້ຳໃສ່ກະໂປະ.

### III. ສື່ການຮຽນ-ການສອນ

1. ບົດເພງ ຫຼິ້ນນ້ຳ ຫຼິ້ນຊາຍ (ເບິ່ງປື້ມຄູ່ມືຄູ).
2. ອ່າງ, ຄຸ, ບົວນ້ອຍ, ກະໂປະ, ກະປ໋ອງ, ຊວ້ານ, ເຂີງ, ນ້ຳ ແລະ ຊາຍ; ຮູບພາບ: ອ່າງ, ຄຸ, ບົວນ້ອຍ, ກະໂປະ, ກະປ໋ອງ, ຊວ້ານ, ເຂີງ, ເດັກນ້ອຍຈັບບົວຫົດນ້ຳ, ເດັກນ້ອຍຊວ້ານດິນຊາຍ, ເດັກນ້ອຍຈັບເຂີງຮ່ອນຊາຍ, ເດັກນ້ອຍຕັກຊາຍໃສ່ກະປ໋ອງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຫຼິ້ນນ້ຳ ຫຼິ້ນຊາຍ ປະກອບທ່າທາງ.
2. ໃຫ້ເດັກນ້ອຍສັງເກດອຸປະກອນຫຼິ້ນນ້ຳ ຫຼິ້ນຊາຍ, ສົນທະນາກ່ຽວກັບຊື່, ຄຸນປະໂຫຍດ ແລະການບົວລະບັດຮັກສາ.
3. ໃຫ້ເດັກນ້ອຍເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.
4. ໃຫ້ເດັກນ້ອຍເວົ້າຄືນຊື່ ແລະ ການບົວລະບັດຮັກສາອຸປະກອນຫຼິ້ນນ້ຳ ຫຼິ້ນຊາຍ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການບົວລະບັດຮັກສາອຸປະກອນຫຼິ້ນນ້ຳ ຫຼິ້ນຊາຍ, ຄວາມລະມັດລະວັງ ແລະ ການອະນາໄມຫຼັງຈາກຫຼິ້ນແລ້ວ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່, ຄຸນປະ ໂຫຍດ ແລະ ການບົວລະບັດຮັກສາອຸ ປະກອນຫຼິ້ນນ້ຳ, ຫຼິ້ນຊາຍ.
2. ຄວາມຖືກຕ້ອງໃນການຮ້ອງເພງປະກອບທ່າທາງ.
3. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມຮູບພາບ.

# ກິດຈະກໍາສິລະປະສ້າງສັນ

## ຫົວຂໍ້: ແຕ້ມ

## I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການແຕ້ມ ຮູບພາບ: ຄຸ, ຊວ້ານຕາມຮອຍຈ້ຳໄດ້ຖືກຕ້ອງ.
2. ແຕ້ມຮູບພາບຄຸ, ຊວ້ານຕາມຮອຍຈ້ຳໄດ້ຈົບງາມ.
3. ມີຄວາມອົດທົນໃນການແຕ້ມຮູບພາບຄຸ, ຊວ້ານຕາມຮອຍຈ້ຳ.

## II. ເນື້ອໃນຕົ້ນຕໍ

ການແຕ້ມຮູບພາບຄຸ, ຊວ້ານຕາມຮອຍຈ້ຳ.

## III. ສື່ການຮຽນ-ການສອນ

1. ເຈ້ຍຂາວ ແລະ ສໍດໍາ.
2. ຮູບພາບ: ຄຸ, ຊວ້ານທີ່ມີຮອຍຈ້ຳ.
3. ແບບຮູບພາບຄຸ, ຊ້ວານທີ່ແຕ້ມແລ້ວ.
4. ບົດເພງ ຫຼິ້ນນໍ້າຫຼິ້ນຊາຍ.

## IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຫຼິ້ນນໍ້າຫຼິ້ນຊາຍ ປະກອບທ່າທາງ
2. ໃຫ້ເດັກນ້ອຍສັງເກດຮູບພາບຄຸ, ຊວ້ານ, ສົນທະນາ ແລະ ບອກກ່ຽວກັບຂັ້ນຕອນການແຕ້ມຮູບພາບ.
3. ນາຍຄູແນະນໍາ, ສາທິດ ແລະ ຂັ້ນຕອນການແຕ້ມຮູບພາບຄຸ, ຊວ້ານຕາມຮອຍຈ້ຳ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນໍາເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນນຕອນການແຕ້ມຮູບພາບ: ຄຸ, ຊວ້ານຕາມຮອຍຈ້ຳ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົດ, ຄວາມຈົບງາມ ແລະ ເກັບຜົນງານໄປມ້ຽນໄວ້.

## V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ຮູບພາບ ແລະ ຂັ້ນຕອນການແຕ້ມ.
2. ຄວາມຈົບງາມໃນການແຕ້ມຮູບພາບຄຸ, ຊວ້ານ ຕາມຮອຍຈ້ຳ.
3. ຄວາມອົດທົນໃນການແຕ້ມຮູບພາບ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນແບບຫຼິ້ນເຕັ້ນເຊືອກ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນເຕັ້ນເຊືອກໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນເຕັ້ນເຊືອກໄດ້ຖືກຕ້ອງ.
3. ຄວາມອົດທົນໃນເວລາຫຼິ້ນແບບຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນ ເຕັ້ນເຊືອກ.

### III. ສື່ການຮຽນ-ການສອນ

1. ບົດເພງ ຫຼິ້ນນ້ຳ-ຫຼິ້ນຊາຍ.
2. ເຊືອກ ແລະ ກອງ.
3. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຫຼິ້ນນ້ຳ-ຫຼິ້ນຊາຍປະກອບທ່າທາງ.
2. ນາຍຄູສະເໜີການຫຼິ້ນແບບຫຼິ້ນເຕັ້ນເຊືອກ ແລະ ສາທິດວິທີຫຼິ້ນ; ໃຫ້ເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນເຕັ້ນເຊືອກ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນເຕັ້ນເຊືອກ.
5. ສຶກສາອົບຮົມເດັກນ້ອຍຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ລະວັງເວລາເຕັ້ນບໍ່ໃຫ້ຂ້ອງເຊືອກ, ບໍ່ແລ່ນໄວເກີນໄປ, ຫຼັງຈາກຫຼິ້ນແລ້ວອະນາໄມ້ຕີນ, ມືໃຫ້ສະອາດ ແລະ ເກັບມ້ຽນອຸປະກອນຊ່ວຍກັນ.
6. ໃຫ້ເດັກນ້ອຍນັ່ງລົງແລ້ວເອົາມືທັງສອງວາງໃສ່ເທິງຕັກແລ້ວຫາຍໃຈອອກ-ເຂົ້າຊ້າໆ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນເຕັ້ນເຊືອກ.
3. ຄວາມອົດທົນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການຫຼິ້ນນ້ຳ-ຫຼິ້ນຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ.
2. ຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການຫຼິ້ນນ້ຳ-ຫຼິ້ນຊາຍໄດ້ຖືກຕ້ອງ.
3. ແບ່ງປັນເກມໃຫ້ໝູ່ເພື່ອນ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການຫຼິ້ນນ້ຳ-ຫຼິ້ນຊາຍ: ອ່າງຊາຍ, ຄຸ, ບົວ, ກະໂປະ, ກະປ໋ອງ ແລະ ຊວ້ານ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການຫຼິ້ນນ້ຳ-ຫຼິ້ນຊາຍ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງຫຼິ້ນໃນເດີ່ນ: ມ້ໝູນ, ຮາວໂຫນ, ຂອນໄມ້, ເຄື່ອງດ່າງ, ໂອ້ນຊາ, ແປ້ນຕະລູດ.
3. ບົດເພງ ຫຼິ້ນນ້ຳ-ຫຼິ້ນຊາຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຫຼິ້ນນ້ຳ-ຫຼິ້ນຊາຍ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການຫຼິ້ນນ້ຳ-ຫຼິ້ນຊາຍ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ການແບ່ງປັນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການຫຼິ້ນນ້ຳ-ຫຼິ້ນຊາຍ.
3. ການແບ່ງປັນເກມໃຫ້ໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມວິທະຍາສາດ ແລະ ທຳມະຊາດ, ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ທົດລອງຮ່ອນຊາຍ ແລະ ຜອງນ້ຳຢ່າງມ່ວນຊື່ນ.
3. ເວົ້າປະໂຫຍກຕາມຮູບພາບ ແລະ ອ່ານຄຳສັບຕາມຮູບພາບໄດ້ຊັດເຈນ.
4. ຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ, ມຸມອ່ານ.
2. ການສັງເກດ, ທົດລອງຮ່ອນຊາຍ, ທົດລອງຜອງນ້ຳກະຕຸກຢາງນ້ອຍໃສ່ຕຸກຢາງໃຫຍ່.
3. ເວົ້າປະໂຫຍກຕາມຮູບພາບ: ເດັກນ້ອຍຈັບບົວຫົດນ້ຳ, ຊວ້ານດິນຊາຍ, ຈັບເຂິງຮ່ອນຊາຍ, ຕັກຊາຍໃສ່ກະປ໋ອງ, ຖອກນ້ຳໃສ່ກະໂປະ; ອ່ານຄຳສັບຕາມຮູບພາບ: ອ່າງ, ຄຸ, ບົວນ້ອຍ, ກະໂປະ, ກະປ໋ອງ, ຊວ້ານ ແລະ ເຂິງ.

### III. ສື່ການຮຽນ-ການສອນ

1. ມຸມວິທະຍາສາດ ແລະ ທຳມະຊາດ: ອ່າງດິນຊາຍ, ເຂິງຮ່ອນຊາຍ, ກະໂປະ, ກະປ໋ອງ, ຄຸນ້ຳ, ກະຕຸກຢາງນ້ອຍ ແລະ ຕຸກໃຫຍ່, ຊາມນ້ຳລ້າງມື, ຜ້າເຊັດມື, ສະບູ, ເສື້ອກັນເປື້ອນ.
2. ມຸມອ່ານຮູບພາບ: ເດັກນ້ອຍຈັບບົວຫົດນ້ຳ, ຊວ້ານດິນຊາຍ, ຈັບເຂິງຮ່ອນຊາຍ, ຕັກຊາຍໃສ່ກະປ໋ອງ, ຖອກນ້ຳໃສ່ກະໂປະ, ອ່າງ, ຄຸ, ບົວນ້ອຍ, ກະໂປະ, ກະປ໋ອງ, ຊວ້ານ ແລະ ເຂິງ; ກະດານສຽບ ຫຼື ຕິດ.
3. ບົດເພງ ຫຼິ້ນນ້ຳ ຫຼິ້ນຊາຍ; ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຮ້ອງເພງ ຫຼິ້ນນ້ຳ-ຫຼິ້ນຊາຍ ປະກອບທ່າທາງຕາມຈິນຕະນາການ.
2. ນາຍຄູສົນທະນາກັບເດັກກ່ຽວກັບເຄື່ອງຫຼິ້ນ ແລະ ແນະນຳວິທີຫຼິ້ນ; ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ, ມຸມອ່ານ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນຳ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມວິທະຍາສາດ ແລະ ທຳມະຊາດ, ມຸມອ່ານ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການທົດລອງຮ່ອນຊາຍ ແລະ ຜອງນ້ຳ.
3. ຄວາມຊັດເຈນໃນການເວົ້າເປັນປະໂຫຍກຕາມຮູບພາບ ແລະ ອ່ານຄຳສັບຕາມຮູບພາບ.
4. ການຊ່ວຍເຫຼືອໝູ່ເພື່ອນໃນເວລາຫຼິ້ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຄື່ອນໄຫວຕາມນາຍຄູອອກແບບປະກອບບົດເພງ ຫຼົ້ນນ້ຳ-ຫຼິ້ນຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງໄດ້ຖືກຕ້ອງ.
2. ອົດທົນໃນເວລາສະແດງທ່າທາງ.

### II. ເນື້ອໃນຕົ້ນຕໍ

ການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ ຫຼິ້ນນ້ຳ-ຫຼິ້ນຊາຍ.

### III. ສື່ການຮຽນ-ການສອນ

1. ກະແຊັກ.
2. ບົດເພງ ຫຼິ້ນນ້ຳ-ຫຼິ້ນຊາຍ.
3. ທ່າຫັດກາຍະບໍລິຫານແອວ ແລະ ຕີນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍຫັດກາຍະບໍລິຫານ ແອວ ແລະ ຕີນ: ທ່າເບັດແອວໄປເບື້ອງຊ້າຍ, ຂວາ ແລະ ທ່າເຢ່ງເຢ້.
2. ໃຫ້ເດັກນ້ອຍຍ່າງຂຶ້ນ-ລົງແຕ່ຕ່ຳ-ສູງ (ແກັດເຈ້ຍ).
3. ນາຍຄູແນະນຳ ແລະ ສາທິດການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍທ່າຢືນເຮັດທ່າທາງຈັບດອກໄມ້ມາດົມ.
6. ໃຫ້ເດັກນ້ອຍປະຕິບັດຄືນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
7. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົນໃນເວລາສະແດງທ່າທາງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການສະແດງທ່າທາງຕາມນາຍຄູອອກແບບປະກອບເນື້ອໃນບົດເພງ.
2. ຄວາມອົດທົນໃນເວລາສະແດງທ່າທາງ.

# ກິດຈະກຳວົງມົນ

## ຫົວຂໍ້: ເວທີການສະແດງ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຄຸນປະໂຫຍດ ແລະ ການປົກປັກຮັກສາເວທີການສະແດງໄດ້ຖືກຕ້ອງ.
2. ຟັງນິທານ, ເວົ້າຄຳສັບ ແລະ ປະໂຫຍກຕາມນິທານໄດ້.
3. ເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບໄດ້ຊັດເຈນ.

### II. ເນື້ອໃນຕົ້ນຕໍ

1. ຄຸນປະໂຫຍດ ແລະ ການປົກປັກຮັກສາເວທີການສະແດງ:
- ຄຸນປະໂຫຍດ: ເປັນບ່ອນສະແດງສິລະປະວັນນະຄະດີ, ຈັດກິດຈະກຳຕ່າງໆພາຍໃນໂຮງຮຽນ.
- ການບົວລະບັດຮັກສາ: ຊ່ວຍຄູປັດກວາດເຊັດຖູ; ບໍ່ຂີດຂຽນ ຫຼື ແຕ້ມທີ່ວທີ່ບໃສ່ເວທີສະແດງ; ຖິ້ມຂີ້ເຫຍື້ອໃສ່ກະຖັງ ຫຼື ກະຕ່າ ແລະ ບໍ່ໄປຫຼິ້ນ ຫຼື ໂດນເວທີສະແດງຕາມລຳພັງ.

2. ການຟັງນິທານເລື່ອງ ທ້າວເປັດຂີ້ດື້; ເວົ້າຄຳສັບ ແລະ ປະໂຫຍກຕາມນິທານ:
- ຄຳສັບ: ເວທີ, ສິລະປະ, ຮ້ອງເພງ, ຟ້ອນ, ເຕີ່ນ, ແຕ້ມ, ຂີດ, ຝາ.
- ປະໂຫຍກ: ນາຍຄູພານັກຮຽນເຮັດກິດຈະກຳເທິງເວທີ, ທ້າວເປັດແລ່ນອອກນອກເວທີ, ທ້າວເປັດເອົາສໍຂາວຂີດໃສ່ຝາ, ທ້າວເປັດເຕັ້ນລົງເວທີ, ທ້າວເປັດຈະເປັນເດັກຄຳຮູ້.

3. ການເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບ: ເສືອ, ເສື້ອ; ສິ້ນ, ຊີ້ນ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ເສືອ, ເສື້ອ; ສິ້ນ, ຊີ້ນ.
2. ບົດນິທານເລື່ອງ ທ້າວເປັດຂີ້ດື້ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູເລົ່ານິທານ, ສົນທະນາ, ເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນຂອງບົດນິທານ.
2. ໃຫ້ເດັກນ້ອຍໄປເບິ່ງເວທີສະແດງ, ສົນທະນາກ່ຽວກັບຄຸນປະໂຫຍດ ແລະ ການປົກປັກຮັກສາເວທີການສະແດງ.
3. ໃຫ້ເດັກນ້ອຍສັງເກດຮູບພາບ, ເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບ.
4. ໃຫ້ເດັກນ້ອຍເວົ້າຄືນຄຸນປະໂຫຍດ ແລະ ການບົວລະບັດຮັກສາເວທີສະແດງ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມສາມັກຄີ, ການບົວລະບັດຮັກສາເວທີສະແດງ.

### V. ການວັດ ແລະ ການປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຄຸນປະ ໂຫຍດ ແລະ ການປົກປັກຮັກສາເວທີ ການສະແດງ.
2. ຄວາມຊັດເຈນໃນການເວົ້າຄຳສັບ ແລະ ປະໂຫຍກຕາມເນື້ອໃນນິທານ.
3. ຄວາມຊັດເຈນໃນການເວົ້າອອກສຽງຄຳທີ່ຄ້າຍຄືກັນແຕ່ມີຄວາມໝາຍຕ່າງກັນຕາມຮູບພາບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕັດ, ຕິດ, ຕໍ່ເຈ້ຍເປັນພວງມະໄລ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນການຕັດ, ຕິດ, ຕໍ່ເຈ້ຍເປັນພວງມະໄລໄດ້ຖືກຕ້ອງ.
2. ຕັດ, ຕິດ, ຕໍ່ເຈ້ຍເປັນພວງມະໄລໄດ້ຈົບງາມ.
3. ມີຄວາມອົດທົນໃນການຕັດ, ຕິດ, ຕໍ່ເຈ້ຍເປັນພວງມະໄລ.

### II. ເນື້ອໃນຕົ້ນຕໍ

ການຕັດ, ຕິດ, ຕໍ່ເຈ້ຍເປັນພວງມະໄລ.

### III. ສື່ການຮຽນ-ການສອນ

1. ແບບເສັ້ນເຈ້ຍສີ.
2. ແບບຕໍ່ພວງມະໄລ.
3. ກາວ, ເຈ້ຍສີ, ມີດຕັດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນ້ອຍເຮັດທ່າທາງຢຶບນິ້ວມືເທື່ອລະນິ້ວໄປຕາມລຳດັບແຕ່ນິ້ວໂປ້ຫານິ້ວກ້ອຍ ແລະ ບີບນວດນິ້ວມືແຕ່ລະນິ້ວ.
2. ໃຫ້ເດັກນ້ອຍສັງເກດພວງມະໄລທີ່ຕິດແລ້ວ, ສົນທະນາ ແລະ ບອກກ່ຽວກັບການຕໍ່ເຈ້ຍເປັນພວງມະໄລ.
3. ນາຍຄູແນະນຳ, ສາທິດວິທີ ແລະ ຂັ້ນຕອນການຕັດ, ຕິດ, ຕໍ່ເຈ້ຍເປັນພວງມະໄລ.
4. ໃຫ້ເດັກນ້ອຍປະຕິບັດຕົວຈິງ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳເດັກນ້ອຍ.
5. ໃຫ້ເດັກນ້ອຍສະເໜີຜົນງານ ແລະ ເວົ້າຄືນຂັ້ນຕອນການຕັດ, ຕິດ, ຕໍ່ເຈ້ຍເປັນພວງມະໄລ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບຄວາມອົດທົດ, ຄວາມຈົບງາມ ແລະເກັບຜົນງານໄປມ້ຽນໄວ້.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຂັ້ນຕອນຕັດ, ຕິດ, ຕໍ່ເຈ້ຍເປັນພວງມະໄລ.
2. ຄວາມຈົບງາມໃນການຕັດ, ຕິດ, ຕໍ່ເຈ້ຍເປັນພວງມະໄລ.
3. ຄວາມອົດທົນໃນການຕັດ, ຕິດ, ຕໍ່ເຈ້ຍເປັນພວງມະໄລ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆ

### I. ຈຸດປະສົງ

ເພື່ອໃຫ້ເດັກນ້ອຍສາມາດ:

1. ບອກຂັ້ນຕອນ ແລະ ກະຕິກາການຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆໄດ້ຖືກຕ້ອງ.
2. ຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆ.
3. ຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆ.

### III. ສື່ການຮຽນ-ການສອນ

1. ແກ້ວ, ນ້ຳ 3 ສີ: ສີແດງ, ສີຟ້າ, ສີເຫຼືອງ, ຕັ່ງນ້ອຍ, ຄຸ, ຈອກຢາງ, ເຊືອກ ຫຼື ໄມ້ນ້ອຍສຳລັບຂີດເສັ້ນໄຊ ແລະ ເສັ້ນເລີ່ມ ແລະ ກອງ.
2. ວິທີຫຼິ້ນ (ເບິ່ງປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ.

1. ໃຫ້ເດັກນ້ອຍຕົບມື ແລະ ນັບປາກເປົ່າ 1-30.
2. ນາຍຄູສະເໜີແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆ ແລະ ສາທິດວິທີຫຼິ້ນ; ໃຫເດັກນ້ອຍບອກຂັ້ນຕອນ ແລະ ກະຕິກາ.
3. ໃຫ້ເດັກນ້ອຍຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆ, ນາຍຄູຕິດຕາມ ແລະ ຊ່ວຍແນະນຳ.
4. ໃຫ້ເດັກນ້ອຍຫຼິ້ນຄືນກ່ຽວກັບການຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆ.
5. ສຶກສາອົບຮົມເດັກນ້ອຍ ຫຼິ້ນຮ່ວມກັນດ້ວຍຄວາມສາມັກຄີ, ບໍ່ໃຫ້ທົດນ້ຳສີໃສ່ກັນ, ເວລາແລ່ນບໍ່ໃຫ້ດຶງແຂນກັນ, ຫຼັງຈາກຫຼິ້ນແລ້ວອະນາໄມ້ຕີນ, ມື ໃຫ້ສະອາດ ແລະ ເກັບມ້ຽນອຸປະກອນຊ່ວຍກັນ.
6. ໃຫ້ເດັກນ້ອຍຢືນສັ່ນແຂນຊ້າໆ, ຫຼັງຈາກນັ້ນປ່ອຍໃຫ້ເດັກນ້ອຍຫຼິ້ນຕາມໃຈ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ.

1. ຄວາມຖືກຕ້ອງໃນການບອກຂັ້ນຕອນ ແລະ ກະຕິກາການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນແບບຫຼິ້ນແຂ່ງຂັນຮ່າຍນ້ຳສີຕ່າງໆ.
3. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນເວລາຫຼິ້ນ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ທີ່ຄືກັນປະໂຫຍດຂອງເວທີການສະແດງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມໄດ້ຖືກຕ້ອງ
2. ຈັບຄູ່ທີ່ຄືກັນປະໂຫຍດຂອງເວທີການສະແດງໄດ້ຖືກຕ້ອງ.
3. ອົດທົນໃນເວລາຫຼິ້ນເກມ.

### II. ເນື້ອໃນຕົ້ນຕໍ

ການຈັບຄູ່ທີ່ຄືກັນປະໂຫຍດຂອງເວທີການສະແດງ: ເດັກນ້ອຍຟ້ອນ, ຮ້ອງເພງ ແລະ ລຳ.

### III. ສື່ການຮຽນ-ການສອນ

1. ແຜ່ນເກມຈັບຄູ່ທີ່ຄືກັນປະໂຫຍດຂອງເວທີການສະແດງ: ເດັກນ້ອຍຟ້ອນ, ຮ້ອງເພງ ແລະ ລຳ (ສຳລັບນາຍຄູ ແລະ ເດັກນ້ອຍ).
2. ແຜ່ນເກມເກົ່າ ເກມຈັບຄູ່ທີ່ຄືກັນຮູບພາບເຄື່ອງໃຊ້ໃນການຫຼິ້ນນ້ຳ-ຫຼິ້ນຊາຍ.

### IV. ກິດຈະກຳການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບສະແດງສິລະປະວັນນະຄະດີ.
2. ໃຫ້ເດັກນ້ອຍສັງເກດຮູບພາບ, ນາຍຄູສົນທະນາກ່ຽວກັບຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
3. ນາຍຄູແນະນຳ ແລະ ສາທິດຂັ້ນຕອນການຫຼິ້ນເກມ.
4. ໃຫ້ເດັກນ້ອຍຫຼິ້ນເກມໃໝ່, ເກມເກົ່າ ແລະ ນາຍຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບຊື່ເກມ, ຮູບພາບ ແລະ ການຫຼິ້ນເກມຈັບຄູ່ທີ່ຄືກັນປະໂຫຍດຂອງເວທີການສະແດງ.
6. ສຶກສາອົບຮົມເດັກນ້ອຍກ່ຽວກັບການເກັບມ້ຽນເກມຫຼັງຈາກຫຼິ້ນແລ້ວ ແລະ ຄວາມອົດທົນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ຄວາມຖືກຕ້ອງໃນການບອກຊື່ເກມ ແລະ ຮູບພາບທີ່ມີຢູ່ໃນເກມ.
2. ຄວາມຖືກຕ້ອງໃນການຈັບຄູ່ທີ່ຄືກັນປະໂຫຍດຂອງເວທີການສະແດງ.
3. ຄວາມອົດທົນໃນເວລາຫຼິ້ນເກມ.

### ກິດຈະກໍາການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

1. ບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຫຼິ້ນເຄື່ອງດົນຕີ ແລະ ຕໍ່ບ້ອກ ຕາມຈິນຕະນາການຢ່າງມ່ວນຊື່ນ.
3. ຕັດ, ຕິດ, ເຈ້ຍຕໍ່ກັບເປັນພວງມະໄລ ແລະ ແຕ້ມຮູບພາບຕາມແບບໄດ້ຖືກຕ້ອງ.
4. ແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

### II. ເນື້ອໃນຕົ້ນຕໍ

1. ຊື່ເຄື່ອງຫຼິ້ນ, ວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມສິລະປະສ້າງສັນ.
2. ການຫຼິ້ນເຄື່ອງດົນຕີ: ຈັບໄມໂຄຼໂຟນຮ້ອງເພງ, ຟ້ອນ, ຕີບກອງ ແລະ ເປົ່າແຄນ, ຕໍ່ບ້ອກເປັນຮູບໂຮງຮຽນ ແລະ ຮົ້ວໂຮງຮຽນຕາມຈິນຕະນາການ.
3. ການຕັດ, ເຈ້ຍຕໍ່ກັບເປັນພວງມະໄລ, ແຕ້ມຮູບພາບຄຸ ແລະ ຊ້ວານຕາມແບບ.

### III. ສື່ການຮຽນ-ການສອນ

1. ມຸມເຄື່ອງຫຼິ້ນສໍາຜັດ: ໄມໂຄຼໂຟນ, ກອງ, ແຄນ, ຊຸດໄມ້ບ້ອກ ຫຼື ບ້ອກປາລາສະຕິກ.
2. ມຸມສິລະປະສ້າງສັນ: ກາວ, ເຈ້ຍ, ມີດຕັດປາຍມົນສໍາລັບຕິດ, ສໍດໍາ ຫຼື ສໍສີໄມ້, ເຈ້ຍເປັນເສັ້ນ, ເຈ້ຍແບບຮູບຄຸ ແລະ ຊ້ວານ.
3. ບັດສັນຍະລັກເຂົ້າຫຼິ້ນຕາມມຸມ.

### IV. ກິດຈະກໍາການຮຽນ-ການສອນ

1. ນາຍຄູສົນທະນາກັບເດັກນ້ອຍກ່ຽວກັບເຄື່ອງຫຼິ້ນຕາມມຸມ.
2. ນາຍຄູແນະນໍາວິທີຫຼິ້ນ, ໃຫ້ເດັກນ້ອຍເລືອກບັດສັນຍະລັກເຂົ້າຫຼິ້ນຕາມມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມສິລະປະສ້າງສັນ.
3. ໃຫ້ເດັກນ້ອຍເຂົ້າຫຼິ້ນຕາມມຸມ, ນາຍຄູຕິດຕາມແນະນໍາ ແລະ ຊ່ວຍເຫຼືອ.
4. ໃຫ້ເດັກນ້ອຍເວົ້າຄືນກ່ຽວກັບການຫຼິ້ນຕາມມຸມເຄື່ອງຫຼິ້ນສໍາຜັດ ແລະ ມຸມສິລະປະສ້າງສັນ.
5. ສຶກສາອົບຮົມເດັກນ້ອຍກ່ຽວກັບການເວົ້າຄໍາທີ່ສຸພາບຕໍ່ກັບໝູ່ເພື່ອນໃນເວລາຫຼິ້ນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ແລະ ທົດສອບຄວາມເຂົ້າໃຈ:

1. ການບອກຊື່ເຄື່ອງຫຼິ້ນ ແລະ ວິທີຫຼິ້ນຕາມມຸມ.
2. ຄວາມມ່ວນຊື່ນໃນການຫຼິ້ນເຄື່ອງດົນຕີ ແລະ ຕໍ່ບ້ອກຕາມຈິນຕະນາການ.
3. ຄວາມຖືກຕ້ອງໃນການຕັດ, ເຈ້ຍຕໍ່ກັບເປັນພວງມະໄລ ແລະ ແຕ້ມຮູບພາບຕາມແບບ.
4. ການແບ່ງປັນເຄື່ອງຫຼິ້ນໃຫ້ໝູ່ເພື່ອນໃນເວລາຫຼິ້ນ.

# ເອກະສານອ້າງອີງ


## ກິດຈະກໍາການເຄື່ອນໄຫວ ແລະ ຈັງຫວະ

1. ປຶ້ມຄູ່ມືການຈັດກິດຈະກໍາການສອນຊັ້ນອະນຸບານ ກະຊວງສຶກສາທິການ, ກົມສາມັນ ເດືອນ ມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
2. ປຶ້ມຫຼັກການສອນອະນຸບານ ກຸ່ມວິຊາຄູທົ່ວໄປ ສາຍສ້າງຄູອະນຸບານລະບົບ 2 ປີ, ປີທີ 1 ປີ 2008.
3. ປຶ້ມວິທີສອນກາຍະສຶກສາ ກຸ່ມວິທີສອນສາຍສ້າງຄູອະນຸບານລະບົບ 2 ປີ, ປີທີ 2 ປີ 2009.
4. ປຶ້ມແຜນຈັດປະສົບການຊັ້ນອະນຸບານ 1 ປີ, 2014 ພິມທີ່ບໍລິສັດລັດວິສາຫະກິດໂຮງພິມສຶກສາ.
5. ຄູ່ມືຄູພະລະສຶກສາ, ຫັດຖະກໍາ, ສິລະປະກໍາ, ສິລະປະດົນຕີຊັ້ນປະຖົມປີທີໜຶ່ງ ກະຊວງສຶກສາທິການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

## ກິດຈະກໍາວົງມົນ

6. ຄູ່ມືຄູການຈັດກິດຈະກໍາການຮຽນ-ການສອນ ຊັ້ນອະນຸບານກົມສາມັນສຶກສາ ກະຊວງສຶກສາທິການ.
7. ຫຼັກການສອນເດັກກ່ອນໄວຮຽນລະບົບ 11+3 ກະຊວງສຶກສາທິການ ປີ 2008.
8. ປຶ້ມແຜນຈັດປະສົບການຊັ້ນອະນຸບານ 1 ປີ, 2014 ພິມທີ່ບໍລິສັດລັດວິສາຫະກິດໂຮງພິມສຶກສາ.

## ກິດຈະກໍາສິລະປະສ້າງສັນ

9. ຄູ່ມືຄູກິດຈະກໍາສ້າງສັນ (ສິລະປະສຶກສາ) ຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
10. ກະຊວງສຶກສາທິການ, ກົມສາມັນສຶກສາຄູ່ມືຄູກິດຈະກໍາການສອນຊັ້ນອະນຸບານ ປີ 2005.
11. ກະຊວງສຶກສາທິການ, ປຶ້ມຫຼັກການສອນອະນຸບານ ລະບົບ 11+2 ປີ 2008 (ໜ້າ 93).

## ກິດຈະກໍາການຫຼິ້ນກາງແຈ້ງ

12. ຄູ່ມືຄູ ກິດຈະກໍາກາງແຈ້ງ ຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
13. ຄູ່ມືຄູ ກິດຈະກໍາການສອນ ຊັ້ນອະນຸບານ ກະຊວງສຶກສາ ປີ 1990 ໜ້າທີ 102,105,106,131.
14. ປຶ້ມແບບຮຽນວິຊາຫຼັກການສອນເດັກກ່ອນໄວຮຽນລະບົບ 11+2 ກົມສ້າງຄູ, ກະຊວງສຶກສາທິການ ປີ 2004 (ບົດທີ 11 ກິດຈະກໍາກາງແຈ້ງ).

## ກິດຈະກໍາເກມການສຶກສາ

15. ປຶ້ມແຜ່ນຈັດປະສົບການ ຊັ້ນອະນຸບານ 1 ເຫຼັ້ມ 1, ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ) ແລະ ປຶ້ມແຜນຈັດປະສົບການຊັ້ນອະນຸບານສຶກສາ ປີທີ 1, ພິມປີ 2014.
16. ປຶ້ມວິຊາ: ຫຼັກການສອນ 11+3 ສົກຮຽນ 2008 (ກະຊວງສຶກສາທິການ-ກົມສ້າງຄູ).

## ກິດຈະກໍາການຫຼິ້ນຕາມມຸມ

17. ປຶ້ມວິຊາຊອກຮູ້ສະພາບແວດລ້ອມ 11+3 ປີ 2008 (ກະຊວງສຶກສາທິການ-ກົມສ້າງຄູ).
18. ປຶ້ມແຜນຈັດປະສົບການຊັ້ນອະນຸບານ 1 ເຫຼັ້ມ 1 ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ) ແລະ ປຶ້ມແຜນຈັດປະສົບການຊັ້ນອະນຸບານສຶກສາປີທີ 1, ພິມປີ 2014.
19. ປຶ້ມການພັດທະນາໂຮງຮຽນຄຸນນະພາບ, ຄູ່ມືຄູສອນຫ້ອງກຽມປະຖົມ (ກະຊວງສຶກສາ 2010).